ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 255 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 25 ກໍລະກົດ 2019

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 08/ສພຊ, ລົງວັນທີ 13 ມິຖຸນາ 2019 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 14/ຄປຈ, ລົງວັນທີ 11 ກໍລະກົດ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສະພາແຫ່ງຊາດ** ເລກທີ 08 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 13 / 06 / 19

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ໃນວາລະກອງປະຊຸມ ຄັ້ງວັນທີ 13 ມິຖຸນາ 2019.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ                                                                 ເລກທີ 64 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 13 ມິຖຸນາ 2019

# ກົດໝາຍວ່າດ້ວຍປ່າໄມ້
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ກວດກາ ປ່າໄມ້ ແລະ ທີ່ດິນປ່າໄມ້, ສົ່ງເສີມການຟື້ນຟູ, ປູກ ແລະ ຂະຫຍາຍ ຊັບພະຍາກອນປ່າໄມ້ ເພື່ອເຮັດໃຫ້ຊັບພະຍາກອນປ່າໄມ້ມີຄວາມອຸດົມສົມບູນ, ເພີ່ມຄວາມປົກຫຸ້ມປ່າໄມ້, ເປັນແຫຼ່ງທ່ອງທ່ຽວ, ທຳມາຫາກິນ ແລະ ນຳໃຊ້ຂອງປະຊາຊົນ ໂດຍບໍ່ບົກແຫ້ງ ແນໃສ່ຮັບປະກັນ ການປົກປັກຮັກສາ ຄຸນນະພາບຂອງດິນ, ອາກາດ, ແຫຼ່ງນໍ້າ, ຊີວະນາໆພັນ, ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 (ປັບປຸງ) ປ່າໄມ້

ປ່າໄມ້ ແມ່ນ ຊັບພະຍາກອນ ອັນລໍ້າຄ່າຂອງຊາດ ທີ່ມີລະບົບນິເວດສະເພາະ ຊຶ່ງປະກອບດ້ວຍ ຊີວະນາໆພັນ, ແຫຼ່ງນໍ້າ ແລະ ທີ່ດິນ ໂດຍມີຕົ້ນໄມ້ນາໆຊະນິດທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກຂຶ້ນ ໃນເນື້ອທີ່ແຕ່ ສູນຈຸດຫ້າ (0,5) ເຮັກຕາ ແລະ ມີຄວາມປົກຫຸ້ມຂອງຊັ້ນເຮືອນຍອດຕົ້ນໄມ້ ແຕ່ ຊາວສ່ວນຮ້ອຍ (20%) ຂຶ້ນໄປ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊັບພະຍາກອນປ່າໄມ້** ໝາຍເຖິງ ຊັບພະຍາກອນຕ່າງໆ ທີ່ມີຊີວິດ ແລະ ບໍ່ມີຊີວິດ ຊຶ່ງປະກອບດ້ວຍ ດິນ, ພືດພັນ, ຕົ້ນໄມ້, ນໍ້າ, ສັດນໍ້າ, ສັດປ່າ ແລະ ອື່ນໆ ທີ່ມີຢູ່ໃນເຂດທີ່ດິນປ່າໄມ້;

2. **ການຟື້ນຟູປ່າໄມ້ແບບທຳມະຊາດ** ໝາຍເຖິງ ການຂະຫຍາຍພັນດ້ວຍ ແກ່ນ, ຮາກ, ເຫງົ້າ ຫຼື ຕໍໄມ້ຕາມທຳມະຊາດ ຂອງພັນໄມ້ຊະນິດຕ່າງໆ ທີ່ເກີດຢູ່ໃນເຂດຟື້ນຟູປ່າໄມ້ ໂດຍການອະນາໄມພື້ນລ່າງ ແລະ ຕັດສາງ ໃຫ້ຕົ້ນໄມ້ມີການຂະຫຍາຍຕົວ;

3. **ການຟື້ນຟູປ່າໄມ້ແບບປູກເສີມ** ໝາຍເຖິງ ການປູກເສີມພັນໄມ້ຊະນິດຕ່າງໆ ທີ່ເຫັນວ່າເໝາະສົມ ໂດຍສອດຄ່ອງກັບຈຸດປະສົງ ແລະ ເປົ້າໝາຍຂອງການຟື້ນຟູປ່າໄມ້ ຢູ່ໃນເຂດຟື້ນຟູປ່າໄມ້ທຳມະຊາດ ໂດຍສະເພາະບ່ອນທີ່ມີໄມ້ສືບພັນກະຈາຍບໍ່ສະໝໍ່າສະເໝີ ຫຼື ມີຄວາມສ່ຽງໃນການສູນພັນ ຫຼື ສູນພັນແລ້ວ ແຕ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ຮັບການຟື້ນຟູຄືນ;

4. **ປ່າຟື້ນຟູ** ໝາຍເຖິງ ປ່າໄມ້ ທີ່ໄດ້ຟື້ນຟູຈາກປ່າເຊື່ອມໂຊມທີ່ຖືກທຳລາຍ ໃຫ້ກາຍເປັນປ່າໄມ້ທີ່ສົມບູນຄືນໃໝ່;

5. **ປ່າໂຄກ** ໝາຍເຖິງ ປ່າໄມ້ທຳມະຊາດ ທີ່ບໍ່ຕຶບໜາ ແລະ ມີລະບົບນິເວດປ່າໄມ້ສະເພາະຕົວ; ຮັກສານໍ້າໃຕ້ດິນ, ຊັ້ນດິນຕື້ນ ແລະ ມີຫີນດານຕາມໜ້າດິນ. ຊະນິດພັນໄມ້ທີ່ເກີດຂຶ້ນສ່ວນໃຫຍ່ເປັນຊະນິດພັນ ທີ່ມີ ເປືອກໜາ, ລຳຕົ້ນບໍ່ໃຫຍ່ ຊຶ່ງມີຄວາມທົນທານຕໍ່ຄວາມແຫ້ງແລ້ງ ແລະ ໄຟປ່າ, ນອກຈາກນັ້ນ ກໍຍັງເປັນຄັງອາຫານ, ຢາປົວພະຍາດ ແລະ ອື່ນໆ ຂອງປະຊາຊົນ;

6. **ປ່າເຫຼົ່າ** ໝາຍເຖິງ ເຂດເນື້ອທີ່ປ່າໄມ້ ທີ່ມີການຖາງປ່າເຮັດໄຮ່ ຫຼື ຖືກບຸກລຸກທຳລາຍດ້ວຍຮູບການຕ່າງໆ ເປັນເວລາຫຼາຍປີມາແລ້ວ;

7. **ເຮືອນຍອດຕົ້ນໄມ້** ໝາຍເຖິງ ພາກສ່ວນ ກິ່ງ, ງ່າ ແລະ ໃບທີ່ເກີດຈາກລຳຂອງຕົ້ນໄມ້;

8. **ເຂດປ່າໄມ້ຂອງບ້ານ** ໝາຍເຖິງ ເນື້ອທີ່ປ່າໄມ້ທຸກປະເພດ ໃນເຂດຄຸ້ມຄອງຂອງບ້ານ ທີ່ຖືກກຳນົດຂຶ້ນ ຕາມແຜນຈັດສັນທີ່ດິນ ແລະ ມອບດິນ-ມອບປ່າຂັ້ນບ້ານ ຊຶ່ງລວມມີ ປ່າຊົມໃຊ້, ປ່າສະຫງວນ ຫຼື ປ່າປ້ອງກັນຂອງບ້ານ;

9. **ການມອບດິນ-ມອບປ່າຂັ້ນບ້ານ** ໝາຍເຖິງ ການມອບທີ່ດິນປ່າໄມ້ຕອນໃດໜຶ່ງທີ່ຢູ່ໃນບໍລິເວນການຄຸ້ມຄອງຂອງບ້ານ ໃຫ້ອົງການປົກຄອງບ້ານ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້;

10. **ທີ່ດິນປ່າໄມ້** ໝາຍເຖິງ ເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຄຸມຢູ່ ຊຶ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້;

11. **ການພັດທະນາທີ່ດິນປ່າໄມ້** ໝາຍເຖິງ ການປັບປຸງຄຸນນະພາບຂອງດິນ ຈາກດິນທີ່ຊຸດໂຊມໃຫ້ກາຍເປັນດິນທີ່ອຸດົມສົມບູນ;

12. **ການຫັນປ່ຽນທີ່ດິນປ່າໄມ້** ໝາຍເຖິງ ການຫັນປ່ຽນຈາກປະເພດທີ່ດິນປ່າໄມ້ ໄປເປັນທີ່ດິນປະເພດອື່ນ ແລະ ຈຸດປະສົງອື່ນ;

13. **ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້** ໝາຍເຖິງ ການນຳໃຊ້ທີ່ດິນປ່າໄມ້ ເພື່ອດຳເນີນທຸລະກິດປ່າໄມ້ ເຊັ່ນ ການຟື້ນຟູປ່າ, ປູກໄມ້ ແລະ ເຄື່ອງປ່າຂອງດົງ, ການທ່ອງທ່ຽວທຳມະຊາດ, ການຂຸດຄົ້ນແຮ່ທາດ, ການສ້າງເຂື່ອນໄຟຟ້າ, ອ່າງເກັບນໍ້າ ແລະ ການບໍລິການດ້ານລະບົບນິເວດປ່າໄມ້;

14. **ທີ່ດິນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ** ໝາຍເຖິງ ເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຄຸມຢູ່ ຊຶ່ງ ລັດໄດ້ກຳນົດໃຫ້ເປັນທີ່ດິນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;

15. **ທີ່ດິນປ່າຊຸດໂຊມ** ໝາຍເຖິງ ເຂດທີ່ດິນປ່າໄມ້ ທີ່ຖືກທຳລາຍຢ່າງໜັກ ເປັນເວລາຫຼາຍປີຕໍ່ເນື່ອງກັນ ແລະ ໃຊ້ເວລາຫຼາຍສິບປີ ຈຶ່ງສາມາດຟື້ນຟູດ້ວຍຕົວມັນເອງໄດ້ ຊຶ່ງຄວາມປົກຫຸ້ມຂອງຊັ້ນເຮືອນຍອດ

ຕົ້ນໄມ້ ບໍ່ເກີນ ສິບສ່ວນຮ້ອຍ ແລະ ບໍລິມາດໄມ້ຢືນຕົ້ນທີ່ມີຂະໜາດໜ້າຕ້າງ ສິບຊັງຕີແມັດ ຂຶ້ນໄປ ບໍ່ເກີນ ຊາວແມັດກ້ອນ ຕໍ່ ໜຶ່ງເຮັກຕາ;

**16. ທີ່ດິນປ່າປອກໂຫຼ້ນ** ໝາຍເຖິງ ເນື້ອທີ່ດິນປ່າໄມ້ ທີ່ຖືກທຳລາຍຢ່າງໜັກ ເປັນເວລາຫຼາຍປີ ຕໍ່ເນື່ອງກັນ ເຮັດໃຫ້ເນື້ອທີ່ດັ່ງກ່າວປົກຫຸ້ມດ້ວຍ ປ່າຫຍ້າຄາ, ຫຍ້າແຝກ, ປ່າພຸ່ມ ຊຶ່ງຕົ້ນໄມ້ ບໍ່ສາມາດຟື້ນຟູດ້ວຍຕົວມັນເອງ ເປັນປ່າໄມ້ໂດຍທຳມະຊາດໄດ້;

**17. ເຄື່ອງປ່າຂອງດົງ** ໝາຍເຖິງ ພືດ ທີ່ເກີດຂຶ້ນຢູ່ຕາມທຳມະຊາດ ຫຼື ປູກຂຶ້ນ ຊຶ່ງລວມມີປະເພດ ຕົ້ນ, ລຳ, ເຄືອ, ຫົວ, ຮາກ, ຍອດ, ໜໍ່, ໃບ, ດອກ, ໝາກ, ເມັດ ຫຼື ແກ່ນ, ເປືອກ, ນ້ຳມັນ, ຢາງ, ເຫັດ, ນ້ຳເຜີ້ງ ລວມທັງພືດເປັນຢາ ແລະ ອື່ນໆ;

**18. ໄມ້ສືບພັນ** ໝາຍເຖິງ ເບ້ຍໄມ້ ຫຼື ຕົ້ນໄມ້ນ້ອຍ ນາໆຊະນິດທີ່ເກີດຕາມທຳມະຊາດ ຫຼື ປູກຂຶ້ນໃນປ່າໄມ້ ຊຶ່ງສາມາດຕອບສະໜອງໄມ້ ແລະ ແກ່ນພັນໄມ້ໃນອະນາຄົດ;

**19. ໄມ້ປູກ** ໝາຍເຖິງ ຕົ້ນໄມ້ທຸກຊະນິດທີ່ໄດ້ປູກຂຶ້ນ ແບບເປັນລະບົບ ຫຼື ປູກແບບກະແຈກກະຈາຍ;

**20. ໄມ້ບັນຊີ I** ໝາຍເຖິງ ຊະນິດໄມ້ທີ່ຫາຍາກ, ເປັນຢາ, ມີຄວາມສ່ຽງຕໍ່ການສູນພັນ, ເກີດ ແລະ ຂະຫຍາຍພັນສະເພາະຖິ່ນ, ການຈະເລີນເຕີບໂຕຊ້າ, ເນື້ອໄມ້ມີຄຸນລັກສະນະເດັ່ນສະເພາະ, ມີຄວາມທົນທານສູງ ຊຶ່ງບາງຊະນິດໄດ້ກຳນົດໄວ້ໃນບັນຊີ ຂອງສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນ ລະຫວ່າງຊາດ ເຊັ່ນ ໄມ້ຂະຍຸງ, ໄມ້ໂລ່ງເລ່ງ, ໄມ້ດູ່;

**21. ໄມ້ບັນຊີ II** ໝາຍເຖິງ ຊະນິດໄມ້ທີ່ ເກີດ, ຂະຫຍາຍພັນຢູ່ບາງເຂດ ແລະ ການຈະ ເລີນເຕີບໂຕ ໂດຍທຳມະຊາດຊ້າ, ເນື້ອໄມ້ມີຄວາມທົນທານປານກາງ ເຊັ່ນ ໄມ້ຍາງ, ໄມ້ແຄນ, ໄມ້ຊີ;

**22. ໄມ້ບັນຊີ III** ໝາຍເຖິງ ຊະນິດໄມ້ທີ່ ເກີດ, ຂະຫຍາຍພັນຢູ່ທົ່ວໄປ ແລະ ຈະເລີນເຕີບໂຕ ໂດຍທຳມະຊາດໄດ້ດີ, ເນື້ອໄມ້ມີຄວາມທົນທານຕ່ຳ ເຊັ່ນ ໄມ້ຕີນເປັດ, ໄມ້ມ່ວງປ່າ, ໄມ້ສາມສາ;

**23. ເຄື່ອງປ່າຂອງດົງບັນຊີ I** ໝາຍເຖິງ ຊະນິດເຄື່ອງປ່າຂອງດົງ ທີ່ຫາຍາກ, ເປັນຢາ, ມີຄວາມສ່ຽງຕໍ່ການສູນພັນ, ເກີດ ແລະ ຂະຫຍາຍພັນສະເພາະຖິ່ນ, ການຈະເລີນເຕີບໂຕຊ້າ ຊຶ່ງບາງຊະນິດໄດ້ກຳນົດໄວ້ໃນບັນຊີຂອງສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ ເຊັ່ນ ເຄືອແຫມ, ໝາກແໜ່ງ, ເຄືອໄສ້ຊ້າງ;

**24. ເຄື່ອງປ່າຂອງດົງບັນຊີ II** ໝາຍເຖິງ ຊະນິດເຄື່ອງປ່າຂອງດົງ ທີ່ເກີດ, ຂະຫຍາຍພັນຢູ່ບາງເຂດ ແລະ ການຈະເລີນເຕີບໂຕໂດຍທຳມະຊາດຊ້າ ເຊັ່ນ ກົກອ່ຽນດ່ອນ, ກົງສະເດັນ, ໝາກເກືອ;

**25. ເຄື່ອງປ່າຂອງດົງບັນຊີ III** ໝາຍເຖິງ ຊະນິດເຄື່ອງປ່າຂອງດົງ ທີ່ເກີດ, ຂະຫຍາຍພັນ ແລະ ຈະເລີນເຕີບໂຕຢູ່ທົ່ວໄປຕາມທຳມະຊາດໄດ້ດີ ເຊັ່ນ ປໍສາ, ແຂມ, ເຕີຍ;

**26. ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ** ໝາຍເຖິງ ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ໄດ້ເຂົ້າຜ່ານຂະບວນການປຸງແຕ່ງ ປ່ຽນຈາກສະພາບເດີມມາເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ດ້ວຍການນຳໃຊ້ ເຄື່ອງຈັກ ແລະ ແຮງງານຄົນ;

**27. ການພັດທະນາປ່າໄມ້** ໝາຍເຖິງ ການຟື້ນຟູປ່າຊຸດໂຊມ, ການປູກປ່າຄືນໃໝ່ ພາຍຫຼັງການຊຸດຄົ້ນ ຫຼື ຖືກທຳລາຍ ແລະ ການນຳໃຊ້ວິທະຍາສາດເຕັກນິກອື່ນ ເພື່ອເພີ່ມຄຸນນະພາບ, ເນື້ອທີ່ ແລະ ຄວາມປົກຫຸ້ມຂອງປ່າໄມ້;

**28. ລະບົບນິເວດ** ໝາຍເຖິງ ສາຍພົວພັນ ລະຫວ່າງ ສິ່ງທີ່ມີຊີວິດ ແລະ ສິ່ງບໍ່ມີຊີວິດ ທີ່ຄົງຕົວຢູ່ຕາມທຳມະຊາດ;

**29. ຊີວະນາໆພັນ** ໝາຍເຖິງ ຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດ ແລະ ແນວພັນຂອງສິ່ງທີ່ມີຊີວິດ ເຊັ່ນ ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ຢູ່ໃນຂອບເຂດທຳມະຊາດໃດໜຶ່ງ;

**30. ການບໍລິການດ້ານລະບົບນິເວດປ່າໄມ້** ໝາຍເຖິງ ຂະບວນການໃຫ້ບໍລິການຂອງປ່າໄມ້ໂດຍທາງກົງ ດ້ວຍການຕອບສະໜອງໄມ້, ເຄື່ອງປ່າຂອງດົງ, ອາຫານ ແລະ ທີ່ຢູ່ອາໄສຂອງສັດ ແລະ ທາງອ້ອມດ້ວຍການປົກປັກຮັກສາແຫຼ່ງນ້ຳ, ສິ່ງແວດລ້ອມປ່າໄມ້, ສັດນ້ຳ, ສັດປ່າ, ການດູດຊຶມ ແລະ ການເກັບກັກມອນທາດກາກບອນປ່າໄມ້, ການທ່ອງທ່ຽວແບບອະນຸລັກ, ການສຶກສາຄົ້ນຄວ້າ ແລະ ອື່ນໆ;

**31. ການຈ່າຍຄ່າບໍລິການດ້ານລະບົບນິເວດປ່າໄມ້** ໝາຍເຖິງ ການປະຕິບັດພັນທະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບການບໍລິການດ້ານລະບົບນິເວດປ່າໄມ້ ຊຶ່ງອາດເປັນ ວັດຖຸ, ເງິນ ຫຼື ອື່ນໆ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງ ປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມຍືນຍົງ;

**32. ສະໜາມ I** ໝາຍເຖິງ ສະຖານທີ່ທ້ອນໂຮມໄມ້ທ່ອນ ທີ່ໄດ້ຊັກລາກຈາກບ່ອນຕັດປ້ຳໃນສະຖານທີ່ຂຸດຄົ້ນໄມ້ ຕາມແຜນການຂຸດຄົ້ນ;

**33. ສະໜາມ II** ໝາຍເຖິງ ສະຖານທີ່ທ້ອນໂຮມໄມ້ທ່ອນ ທີ່ໄດ້ຂົນສົ່ງມາຈາກສະໜາມ I ເພື່ອເປັນບ່ອນ ຂຶ້ນບັນຊີ, ຈັດຊັ້ນຄຸນະພາບ ແລະ ຊື້ ຂາຍ ໄມ້ທ່ອນ;

**34. ສະໜາມ III** ໝາຍເຖິງ ສະຖານທີ່ຕັ້ງຢູ່ໃນຂອບເຂດຂອງໂຮງງານ ສຳລັບທ້ອນໂຮມ ຫຼື ເກັບມ້ຽນໄມ້ທ່ອນ ທີ່ໄດ້ຂົນສົ່ງມາຈາກ ສະໜາມ II;

**35. ກິດຈະການປ່າໄມ້ ແລະ ທີ່ດິນປ່າໄມ້** ໝາຍເຖິງ ການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້;

**36. ຂະໜາດວັດຮອບຕັດຟັນ** ໝາຍເຖິງ ຂະໜາດໜ້າຕ້າງ ຫຼື ວັດຮອບຂອງຕົ້ນໄມ້ໃນປ່າຜະລິດ ທີ່ລັດອະນຸຍາດໃຫ້ຂຸດຄົ້ນ ເພື່ອເປັນວັດຖຸດິບປ້ອນໂຮງງານອຸດສາຫະກຳປຸງແຕ່ງ;

**37. ຄ້ອນຕາ ປມ** ໝາຍເຖິງ ຄ້ອນຕາປະທັບ ທີ່ມີລັກສະນະເປັນວົງມົນ, ມີຮູບດາວ ແລະ ຕົວໜັງສື ປມ (ປ່າໄມ້) ຢູ່ເຄິ່ງກາງຂອງຮູບດາວ ແລະ ມີເລກລະຫັດຢູ່ເບື້ອງເທິງຂອງດາວ ຊຶ່ງໃຊ້ຕີຕາໄມ້ຢືນຕົ້ນ, ໄມ້ທ່ອນ, ໄມ້ເລື່ອຍ, ຕໍໄມ້ ແລະ ປຸດໄມ້ ເພື່ອເຄື່ອນຍ້າຍເຂົ້າບ່ອນດຳເນີນການຜະລິດ ແລະ ເຄື່ອນຍ້າຍໄປແຂວງຕ່າງໆພາຍໃນປະເທດ;

**38. ການທຳລາຍປ່າໄມ້ ແລະ ທີ່ດິນປ່າໄມ້** ໝາຍເຖິງ ການຕັດ, ການຖາງ, ການຈູດ, ການເຮັດໃຫ້ຕົ້ນໄມ້ຕາຍໃນທຸກຮູບແບບ ແລະ ເຮັດໃຫ້ດິນເສື່ອມຄຸນນະພາບ ດ້ວຍການນຳໃຊ້ ສານເຄມີ ຫຼື ວິທີການອື່ນ ຊຶ່ງສ້າງຄວາມເສຍຫາຍແກ່ປ່າໄມ້ ແລະ ທີ່ດິນປ່າໄມ້;

**39. ການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້** ໝາຍເຖິງ ການຫັນປ່ຽນ, ການບຸກຍຶດ, ການຈັບຈອງ, ການນຳໃຊ້ ແລະ ການກະທຳອື່ນຕໍ່ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

**40. ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງ** ໝາຍເຖິງ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຂຸດຄົ້ນ, ເຄື່ອນຍ້າຍ, ນຳເຂົ້າ, ປຸງແຕ່ງ, ຊື້ ຂາຍ ຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ແລະ ສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

**41. ບ້ານພັດທະນາປ່າໄມ້** ໝາຍເຖິງ ບ້ານທີ່ມີຄວາມເຂັ້ມແຂງ ແລະ ເປັນເຈົ້າການໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ໃນຂອບເຂດການຄຸ້ມຄອງຂອງບ້ານ ຕາມທິດສີຂຽວ ແລະ ຍືນຍົງ;

**42. ກາກບອນປ່າໄມ້** ໝາຍເຖິງ ທາດອາຍກາກໂບນິກ ($CO_2$) ທີ່ປ່າໄມ້ສາມາດດູດຊຶມ ໂດຍໃຊ້ຫົວໜ່ວຍຄິດໄລ່ ເປັນໂຕນຕໍ່ເຮັກຕາ;

**43. ຖ່ານຂາວ** ໝາຍເຖິງ ຖ່ານທີ່ຜະລິດຈາກໄມ້ດິບ ໂດຍນຳໃຊ້ເຕັກນິກການເຜົາໃນອຸນຫະພູມ ແຕ່ 1000 ອົງສາເຊ ຂຶ້ນໄປ ມີຄຸນລັກສະນະແຂງແກ່ນ, ເວລາຈູດ ຈະບໍ່ມີຄວັນດຳຫຼາຍ.

**ມາດຕາ 4 (ປັບປຸງ) ກຳມະສິດກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້**

ປ່າໄມ້ທຳມະຊາດ ແລະ ທີ່ດິນປ່າໄມ້ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນ ແລະ ຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍໃຫ້ອົງການຈັດຕັ້ງ ແລະ ປະຊາຊົນທຸກຄົນມີສ່ວນຮ່ວມໃນການ ບູລະນະ, ປົກປັກຮັກສາ ແລະ ນຳໃຊ້ ຕາມກົດໝາຍ.

ປ່າປູກ ແລະ ໄມ້ປູກ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງຜູ້ລົງທຶນປູກຕາມເຂດທີ່ໄດ້ຈັດສັນໃຫ້ດ້ວຍເຫື່ອແຮງ ຫຼື ທຶນຮອນຂອງຕົນ ໂດຍການຮັບຮູ້ຈາກອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນກຳມະສິດຂອງຜູ້ປູກ ຫຼື ຂອງຜູ້ລົງທຶນປູກ.

ຕົ້ນໄມ້ທຳມະຊາດ ທີ່ມີໃນທີ່ດິນນາ, ທີ່ດິນສວນ, ທີ່ດິນປູກສ້າງ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດນຳໃຊ້ທີ່ດິນຕາມກົດໝາຍ ເປັນກຳມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ. ສຳລັບຕົ້ນໄມ້ ທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກ ໃນທີ່ດິນສາທາລະນະ ເປັນກຳມະສິດຂອງລັດ.

**ມາດຕາ 5 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານ ປ່າໄມ້ ແລະ ທີ່ດິນປ່າໄມ້**

ລັດ ສົ່ງເສີມການລົງທຶນໃສ່ການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດປ່າໄມ້, ສ້າງພື້ນຖານວັດຖຸເຕັກນິກ ເພື່ອປົກປັກຮັກສາສິ່ງແວດລ້ອມ, ແຫຼ່ງນ້ຳ, ຊີວະນາໆພັນ ແລະ ການດຳລົງຊີວິດຂອງປະຊາຊົນ ລວມທັງການຈັດສັນອາຊີບຄົງທີ່ ໃຫ້ປະຊາຊົນໃນເຂດປ່າໄມ້.

ລັດ ຊຸກຍູ້ໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ທຸກປະເພດ ໃນເຂດທີ່ດິນປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ໃຫ້ອຸດົມສົມບູນ ເພື່ອປົກປັກຮັກສາສິ່ງແວດລ້ອມ, ເປັນວັດຖຸດິບປ້ອນໂຮງງານອຸດສາຫະກຳ ແລະ ຫັດຖະກຳ ຕາມນະໂຍບາຍຕ່າງໆ ເຊັ່ນ ນະໂຍບາຍສິນເຊື່ອ, ຍົກເວັ້ນ ຫຼື ຫຼຸດຜ່ອນ ພາສີ, ອາກອນ ຕາມກົດໝາຍ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການນຳໃຊ້ປ່າໄມ້ ເປັນແຫຼ່ງທ່ອງທ່ຽວ, ສະຖານທີ່ພັກຜ່ອນ, ບ່ອນສຶກສາຄົ້ນຄວ້າທົດລອງ, ການຊື້ຂາຍກາກບອນປ່າໄມ້, ການບໍລິການດ້ານລະບົບນິເວດປ່າໄມ້ ແລະ ອື່ນໆ ຕາມກົດໝາຍ.

ລັດ ຮັບຮູ້ ການດຳເນີນທຸລະກິດໄມ້ ທີ່ຖືກຕ້ອງຕາມກົດໝາຍ ໂດຍສ້າງລະບົບການຢັ້ງຢືນປ່າໄມ້, ການຄ້ຳປະກັນໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງຕາມມາດຕະຖານການຄຸ້ມຄອງປ່າໄມ້ສາກົນ.

**ມາດຕາ 6 (ປັບປຸງ) ຫຼັກການກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ;
2. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແຜນແມ່ບົດຈັດສັນທີ່ດິນ ແລະ ແຜນຍຸດທະສາດປ່າໄມ້;
3. ປົກປັກຮັກສາ, ຟື້ນຟູ, ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້, ແຫຼ່ງນ້ຳ, ຊີວະນາໆພັນ ແລະ ສິ່ງແວດລ້ອມ ໃຫ້ອຸດົມສົມບູນ ຕາມທິດສີຂຽວ ແລະ ຍືນຍົງ ດ້ວຍການເຂົ້າຮ່ວມຂອງປະຊາຊົນ;
4. ຮັບປະກັນຜົນປະໂຫຍດຂອງ ລັດ, ການຈັດຕັ້ງ ແລະ ບຸກຄົນ ທີ່ ປົກປັກຮັກສາ, ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມກົດໝາຍ;
5. ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ມີປະສິດທິຜົນ, ປະຢັດ, ບໍ່ກະທົບຕໍ່ສິ່ງແວດລ້ອມ;
6. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 7 ພັນທະໃນການປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້**

ການ ປູກ, ປົກປັກຮັກສາ, ອະນຸລັກ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນພັນທະຂອງພົນລະເມືອງທຸກຄົນ, ຄອບຄົວ ແລະ ການຈັດຕັ້ງທຸກພາກສ່ວນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະໃນການປົກປັກຮັກສາ ແລະ ພັດທະນາປ່າໄມ້, ຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ແຫຼ່ງນ້ຳ, ຊີວະນາໆພັນ, ສິ່ງແວດລ້ອມ ໃຫ້ຖືກຕ້ອງຕາມກົດໝາຍ, ບໍ່ເຮັດໃຫ້ປ່າໄມ້ ແລະ ທີ່ດິນປ່າໄມ້ເຊື່ອມໂຊມ, ບົກແຫ້ງ, ເຊາະເຈື່ອນ, ປ້ອງກັນບໍ່ໃຫ້ໄຟໄໝ້ປ່າ, ສະກັດກັ້ນ ແລະ ຕ້ານການທຳລາຍປ່າໄມ້ ແລະ ທີ່ດິນປ່າໄມ້ ທຸກຮູບແບບ.

**ມາດຕາ 8 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານປ່າໄມ້ ຢູ່ ສປປ ລາວ.

**ມາດຕາ 9 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ, ການເຂົ້າຮ່ວມ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ແຜນຍຸດທະສາດປ່າໄມ້

### ມາດຕາ 10 (ໃໝ່) ແຜນຍຸດທະສາດປ່າໄມ້

ແຜນຍຸດທະສາດປ່າໄມ້ ແມ່ນ ນະໂຍບາຍພື້ນຖານກ່ຽວກັບການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມທິດສີຂຽວ ແລະ ຍືນຍົງ ເພື່ອເພີ່ມຄວາມປົກຫຸ້ມປ່າໄມ້ ໃຫ້ໄດ້ ເຈັດສິບສ່ວນຮ້ອຍ (70%) ຂອງເນື້ອທີ່ທົ່ວປະເທດ.

ແຜນຍຸດທະສາດປ່າໄມ້ ປະກອບມີ ແຜນຍຸດທະສາດປ່າໄມ້ ຂັ້ນສູນກາງ ແລະ ຂັ້ນແຂວງ.

### ມາດຕາ 11 (ໃໝ່) ແຜນຍຸດທະສາດປ່າໄມ້ຂັ້ນສູນກາງ

ກະຊວງກະສິກໍາ ແລະ ປ່າໄມ້ ສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງ ແລະ ປັບປຸງ ແຜນຍຸດທະສາດປ່າໄມ້ຂັ້ນສູນກາງແຕ່ລະໄລຍະ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ການພັດທະນາແບບຍືນຍົງຂອງຊາດ ແລະ ສາກົນ.

ລັດຖະບານ ຮັບຮອງ ແຜນຍຸດທະສາດປ່າໄມ້ຂັ້ນສູນກາງ ຕາມການສະເໜີ ຂອງກະຊວງກະສິກໍາ ແລະ ປ່າໄມ້.

### ມາດຕາ 12 (ໃໝ່) ແຜນຍຸດທະສາດປ່າໄມ້ຂັ້ນແຂວງ

ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ສົມທົບກັບພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ, ພະແນກການ ແລະ ອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ ສ້າງ ແລະ ປັບປຸງ ແຜນຍຸດທະສາດປ່າໄມ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບແຜນຍຸດທະສາດປ່າໄມ້ຂັ້ນສູນກາງ, ແຜນຈັດສັນປ່າໄມ້ທ້ອງຖິ່ນ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ໃນແຕ່ລະໄລຍະ.

ອົງການປົກຄອງຂັ້ນແຂວງ ຮັບຮອງແຜນຍຸດທະສາດປ່າໄມ້ຂັ້ນແຂວງ ຕາມການສະເໜີຂອງພະແນກກະສິກໍາ ແລະ ປ່າໄມ້.

### ມາດຕາ 13 (ໃໝ່) ເນື້ອໃນແຜນຍຸດທະສາດປ່າໄມ້

ແຜນຍຸດທະສາດປ່າໄມ້ ປະກອບດ້ວຍ ເນື້ອໃນພື້ນຕົ້ນ ດັ່ງນີ້:

1. ສະພາບລວມກ່ຽວກັບວຽກງານປ່າໄມ້ ເຊັ່ນ ການພັດທະນານະໂຍບາຍປ່າໄມ້ ແລະ ທີ່ດິນປ່າໄມ້, ສະພາບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ສົ່ງເສີມ ແລະ ນໍາໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້, ບົດບາດຄວາມສໍາຄັນຂອງປ່າໄມ້ ແລະ ທີ່ດິນປ່າໄມ້ ຕໍ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ, ການປ່ຽນແປງດິນຟ້າອາກາດ;
2. ສິ່ງທ້າທາຍ ແລະ ທາງເລືອກ ສໍາລັບການພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້;
3. ນະໂຍບາຍ, ແຜນງານ, ໂຄງການ ແລະ ແຜນດໍາເນີນງານບູລິມະສິດ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້;
4. ກົນໄກໃນການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ.

# ພາກທີ III
# ປະເພດປ່າໄມ້

**ມາດຕາ 14 (ປັບປຸງ) ການແບ່ງປະເພດປ່າໄມ້**

ປ່າໄມ້ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ແບ່ງອອກເປັນ ສາມປະເພດ ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຄື:

1. ປ່າປ້ອງກັນ;
2. ປ່າສະຫງວນ;
3. ປ່າຜະລິດ.

ໃນແຕ່ລະປະເພດປ່າອາດປະກອບມີ ເຂດປ່າໄມ້ດົກໜາ, ເຂດປ່າໂຄກ, ເຂດປ່າຟື້ນຟູ ແລະ ເຂດປ່າຊຸດໂຊມ ຕາມແຜນທີ່ໄດ້ຈັດສັນໃຫ້.

**ມາດຕາ 15 (ປັບປຸງ) ປ່າປ້ອງກັນ**

ປ່າປ້ອງກັນ ແມ່ນ ປ່າໄມ້ທີ່ໄດ້ກຳນົດເພື່ອຈຸດປະສົງນຳໃຊ້ໃນການຮັກສາ ແຫຼ່ງນ້ຳ, ແຄມນ້ຳ, ແຄມທາງ, ປ້ອງກັນການເຊາະເຈື່ອນ ແລະ ຄຸນນະພາບຂອງດິນ, ເຂດຍຸດທະສາດ ເພື່ອປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ.

ປ່າປ້ອງກັນ ປະກອບດ້ວຍ ປ່າປ້ອງກັນແຫ່ງຊາດ, ປ່າປ້ອງກັນ ລະດັບແຂວງ, ລະດັບເມືອງ ແລະ ລະດັບບ້ານ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 (ປັບປຸງ) ປ່າສະຫງວນ**

ປ່າສະຫງວນ ແມ່ນ ປ່າໄມ້ທີ່ໄດ້ກຳນົດເພື່ອຈຸດປະສົງນຳໃຊ້ໃນການອະນຸລັກທຳມະຊາດ, ປົກປັກຮັກສາ ແລະ ຂະຫຍາຍ ພັນພືດ, ພັນສັດນ້ຳ ແລະ ສັດປ່າ ນາງຊະນິດ, ລະບົບນິເວດປ່າໄມ້ ແລະ ສິ່ງຕ່າງໆ ທີ່ມີຄຸນຄ່າທາງດ້ານ ທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການຄົ້ນຄວ້າທົດລອງວິທະຍາສາດ.

ປ່າສະຫງວນ ປະກອບດ້ວຍ ປ່າສະຫງວນແຫ່ງຊາດ, ປ່າສະຫງວນ ລະດັບແຂວງ, ລະດັບເມືອງ ແລະ ລະດັບບ້ານ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ປ່າສະຫງວນ ທີ່ມີຄວາມອຸດົມສົມບູນທາງດ້ານລະບົບນິເວດ ແລະ ມີເອກະລັກສະເພາະທາງດ້ານທິວທັດທຳມະຊາດ ແລະ ມີຄວາມໂດດເດັ່ນໃນລະດັບຊາດ, ພາກພື້ນ ແລະ ລະດັບໂລກ ອາດຈະສະເໜີເປັນ ເຂດອະນຸລັກພັນສັດປ່າ, ເຂດອຸທິຍານແຫ່ງຊາດ, ມໍລະດົກພາກພື້ນ ຫຼື ມໍລະດົກໂລກ.

ມາດຕາ 17 (ປັບປຸງ) ປ່າຜະລິດ

ປ່າຜະລິດ ແມ່ນ ປ່າໄມ້ທຳມະຊາດ ແລະ ປ່າປູກ ທີ່ໄດ້ກຳນົດເປັນເຂດສະໜອງໄມ້ ແລະ ເຄື່ອງປ່າຂອງດົງເປັນສິນຄ້າ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

ມາດຕາ 18 (ປັບປຸງ) ການຫັນປ່ຽນປະເພດປ່າໄມ້

ການຫັນປ່ຽນປ່າປ້ອງກັນ ຫຼື ປ່າສະຫງວນ ເປັນ ປ່າຜະລິດ ແມ່ນ ສະພາແຫ່ງຊາດ ເປັນຜູ້ຮັບຮອງ ຕາມການສະເໜີຂອງລັດຖະບານ.

ການຫັນປ່ຽນ ປ່າຜະລິດ ເປັນ ປ່າປ້ອງກັນ ຫຼື ປ່າສະຫງວນ, ປ່າປ້ອງກັນ ເປັນ ປ່າສະຫງວນ ຫຼື ປ່າສະຫງວນ ເປັນ ປ່າປ້ອງກັນ ແມ່ນ ລັດຖະບານເປັນຜູ້ອະນຸຍາດ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້.

ການຫັນປ່ຽນ ປ່າປ້ອງກັນ ຫຼື ປ່າສະຫງວນ ລະດັບແຂວງ ເປັນ ປ່າປ້ອງກັນ ຫຼື ປ່າສະຫງວນແຫ່ງຊາດ ແມ່ນ ລັດຖະບານເປັນຜູ້ອະນຸຍາດ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍເປັນເອກະພາບກັບອົງການປົກຄອງຂັ້ນແຂວງ ແລະ ການຮັບຮອງຂອງສະພາປະຊາຊົນຂັ້ນແຂວງ.

ການຫັນປ່ຽນ ປ່າປ້ອງກັນ ຫຼື ປ່າສະຫງວນ ລະດັບເມືອງ ເປັນ ປ່າປ້ອງກັນ ຫຼື ປ່າສະຫງວນລະດັບແຂວງ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸຍາດ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ ແລະ ການຮັບຮອງຂອງສະພາປະຊາຊົນຂັ້ນແຂວງ.

ການຫັນປ່ຽນ ປ່າປ້ອງກັນ ຫຼື ປ່າສະຫງວນ ລະດັບບ້ານ ເປັນ ປ່າປ້ອງກັນ ຫຼື ປ່າສະຫງວນລະດັບເມືອງ ແມ່ນ ອົງການປົກຄອງຂັ້ນແຂວງ ເປັນຜູ້ອະນຸຍາດ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ໂດຍເປັນເອກະພາບກັບອົງການປົກຄອງຂັ້ນເມືອງ.

## ພາກທີ IV
## ກິດຈະການປ່າໄມ້
### ໝວດທີ 1
### ການຄຸ້ມຄອງປ່າໄມ້

ມາດຕາ 19 (ປັບປຸງ) ການຄຸ້ມຄອງປ່າໄມ້

ການຄຸ້ມຄອງປ່າໄມ້ ປະກອບດ້ວຍ ກິດຈະການ ດັ່ງນີ້:

1. ການສຳຫຼວດປ່າໄມ້;
2. ການກຳນົດ ແລະ ຮັບຮອງ ເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
3. ການວາງແຜນຈັດສັນປ່າໄມ້;
4. ການສຳຫຼວດ ເພື່ອຂຸດຄົ້ນໄມ້ໃນເຂດປ່າຜະລິດ;
5. ການສຳຫຼວດ ເພື່ອຂຸດຄົ້ນໄມ້ໃນເຂດຫັນປ່ຽນທີ່ດິນປ່າໄມ້;
6. ການສຳຫຼວດ ເພື່ອຂຸດຄົ້ນເຄື່ອງປ່າຂອງດົງ;

7. ການສ້າງ ແລະ ການອະນຸມັດ ແຜນການຂຸດຄົ້ນໄມ້ຈາກປ່າທຳມະຊາດ;
8. ການສ້າງ ແລະ ການອະນຸມັດ ແຜນການຂຸດຄົ້ນເຄື່ອງປ່າຂອງດົງຈາກປ່າທຳມະຊາດ;
9. ການຂຸດຄົ້ນໄມ້ໃນເຂດປ່າຜະລິດ;
10. ການຂຸດຄົ້ນໄມ້ໃນເຂດຫັນປ່ຽນທີ່ດິນປ່າໄມ້;
11. ການຕັດໄມ້ປູກ;
12. ການຂຸດຄົ້ນເຄື່ອງປ່າຂອງດົງ;
13. ການວັດແທກໄມ້ທ່ອນ ແລະ ຈັດຊັ້ນຄຸນນະພາບໄມ້;
14. ການປະມູນຊື້ ຂາຍ ໄມ້;
15. ການຊື້ ຂາຍ ເຄື່ອງປ່າຂອງດົງ;
16. ການເຄື່ອນຍ້າຍໄມ້ຈາກປ່າທຳມະຊາດ;
17. ການເຄື່ອນຍ້າຍໄມ້ປູກຢູ່ພາຍໃນ ແລະ ສົ່ງອອກ;
18. ການເຄື່ອນຍ້າຍເຄື່ອງປ່າຂອງດົງ;
19. ການຄຸ້ມຄອງ ພາຫະນະ, ເຄື່ອງຈັກຂຸດຄົ້ນ, ລາກແກ່ ແລະ ຂົນສົ່ງໄມ້;
20. ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ;
21. ການຄຸ້ມຄອງຕົ້ນໄມ້ໃນຕົວເມືອງ ແລະ ໃນທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
22. ການຂຶ້ນທະບຽນ ປ່າປູກ, ເຄື່ອງປ່າຂອງດົງທີ່ປູກ ແລະ ການຂຶ້ນບັນຊີໄມ້ປູກ;
23. ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ;
24. ການຄ້ຳປະກັນໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງ;
25. ການຄົ້ນຄວ້າທົດລອງ;
26. ຂໍ້ມູນ ຂ່າວສານ ປ່າໄມ້;
27. ກິດຈະການອື່ນທີ່ຈຳເປັນ.

**ມາດຕາ 20 (ປັບປຸງ) ການສຳຫຼວດປ່າໄມ້**

ການສຳຫຼວດປ່າໄມ້ ແມ່ນ ການເກັບກຳຂໍ້ມູນ, ຕີລາຄາສະພາບປ່າໄມ້, ການປະເມີນຄວາມປົກຫຸ້ມປ່າໄມ້, ການປ່ຽນແປງການນຳໃຊ້ປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ຊະນິດພັນໄມ້, ບໍລິມາດໄມ້, ຊີວະມວນສານ, ປະລິມານ ການສະສົມກາກບອນໃນປ່າໄມ້, ໄມ້ສືບພັນ ແລະ ເຄື່ອງປ່າຂອງດົງ.

ການສຳຫຼວດປ່າໄມ້ ປະກອບດ້ວຍ ການສຳຫຼວດຄວາມປົກຫຸ້ມປ່າໄມ້, ການສຳຫຼວດປ່າໄມ້ແຫ່ງຊາດ, ການສຳຫຼວດປ່າປ້ອງກັນ, ການສຳຫຼວດປ່າສະຫງວນ ແລະ ການສຳຫຼວດປ່າຜະລິດ. ການສຳຫຼວດແຕ່ລະປະເພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ລັດຖະບານ ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບອົງການທີ່ກ່ຽວຂ້ອງໃນການສຳຫຼວດປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເພື່ອວາງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ແບບຍືນຍົງ.

**ມາດຕາ 21 (ໃໝ່) ການກຳນົດ ແລະ ຮັບຮອງເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ**

ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກຳນົດເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15, 16 ແລະ 17 ຂອງກົດໝາຍສະບັບນີ້ ໂດຍສອດຄ່ອງກັບແຜນຍຸດທະສາດປ່າໄມ້ແຕ່ລະໄລຍະ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນ, ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ແລະ ການພັດທະນາແບບຍືນຍົງຂອງຊາດ.

ສຳລັບການຮັບຮອງເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ໃຫ້ປະຕິບັດຕາມມາດຕາ 110 ແລະ 115 ຂອງກົດໝາຍສະບັບນີ້.

ຫຼັກການ, ມາດຕະຖານ ແລະ ເງື່ອນໄຂ ໃນການກຳນົດ ແລະ ຮັບຮອງເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 (ປັບປຸງ) ການວາງແຜນຈັດສັນປ່າໄມ້**

ການວາງແຜນຈັດສັນປ່າໄມ້ ແມ່ນ ການກຳນົດແຜນພັດທະນາປ່າໄມ້ ຕາມການແບ່ງເຂດປະເພດປ່າໄມ້ ຄື ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ໂດຍອີງໃສ່ຂໍ້ມູນການສຳຫຼວດຕົວຈິງ ແນໃສ່ຮັບປະກັນຄວາມສົມດຸນ ຂອງລະບົບນິເວດປ່າໄມ້, ການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ ແບບບໍ່ບົກແຫ້ງ, ການມີສ່ວນຮ່ວມຂອງປະຊາຊົນ ໃນການຄຸ້ມຄອງປ່າໄມ້ຕາມແຜນຈັດສັນ ທີ່ລັດໄດ້ກຳນົດ.

ການວາງແຜນຈັດສັນປ່າປ້ອງກັນ ແມ່ນ ການກຳນົດພື້ນທີ່ເປັນເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງການນຳໃຊ້ ໃນທີ່ດິນປ່າປ້ອງກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້.

ການວາງແຜນຈັດສັນປ່າສະຫງວນ ແມ່ນ ການກຳນົດພື້ນທີ່ເປັນເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້ ແລະ ເຂດກັນຊົນ ໃນທີ່ດິນປ່າສະຫງວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້.

ການວາງແຜນຈັດສັນປ່າຜະລິດ ແມ່ນ ການກຳນົດພື້ນທີ່ ເປັນເຂດທີ່ສາມາດຂຸດຄົ້ນໄມ້, ເຂດປ່າຟື້ນຟູ, ເຂດປູກໄມ້, ເຂດອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ.

ສຳລັບບ້ານ ທີ່ຢູ່ໃນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຕ້ອງດຳເນີນການຈັດສັນປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດການປົກຄອງຂອງບ້ານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍສະບັບນີ້.

**ມາດຕາ 23 (ປັບປຸງ) ການສຳຫຼວດ ເພື່ອຂຸດຄົ້ນໄມ້ໃນເຂດປ່າຜະລິດ**

ການສຳຫຼວດ ເພື່ອຂຸດຄົ້ນໄມ້ໃນເຂດປ່າຜະລິດ ແມ່ນ ການກຳນົດບໍລິມາດ, ຈຳນວນ ແລະ ຊະນິດພັນໄມ້ ໃນເຂດປ່າຜະລິດທີ່ໄດ້ວາງແຜນຈັດສັນ ແລ້ວສະເໜີລັດຖະບານພິຈາລະນາອະນຸມັດການຂຸດຄົ້ນໄມ້.

ການສຳຫຼວດເພື່ອຂຸດຄົ້ນໄມ້ໃນເຂດປ່າຜະລິດ ໃຫ້ປະຕິບັດ ດັ່ງນີ້:

1. ສຳຫຼວດ ແລະ ຂຶ້ນບັນຊີ ໄມ້ຢືນຕົ້ນທຸກຊະນິດ ທີ່ມີຂະໜາດວັດຮອບອະນຸຍາດໃຫ້ຕັດ ພ້ອມທັງສ້າງແຜນທີ່ຈຸດຢືນຂອງຕົ້ນໄມ້ຕາມລະບຽບການ;

2. ຄັດເລືອກ, ໝາຍ ແລະ ຕີຕາຕົ້ນໄມ້ທີ່ຈະຕັດ ໃຫ້ຖືກຕ້ອງຕາມລະບຽບການ ເພື່ອຮັບປະກັນການສືບພັນ ແລະ ປ້ອງກັນການກະທົບຕໍ່ສິ່ງແວດລ້ອມ;

3. ກຳນົດເສັ້ນທາງຊຸດຄົ້ນໄມ້, ລາກແກ່ ແລະ ຈຸດທ້ອນໂຮມໄມ້ທ່ອນ ຫຼື ສະໜາມ I;

4. ສ້າງແຜນການຊຸດຄົ້ນປະຈຳປີເພື່ອສະເໜີລັດຖະບານອະນຸມັດ.

**ມາດຕາ 24 (ໃໝ່) ການສຳຫຼວດ ເພື່ອຊຸດຄົ້ນໄມ້ໃນເຂດຫັນປ່ຽນທີ່ດິນປ່າໄມ້**

ການສຳຫຼວດ ເພື່ອຊຸດຄົ້ນໄມ້ໃນເຂດຫັນປ່ຽນທີ່ດິນປ່າໄມ້ ໃຫ້ດຳເນີນໃນເຂດທີ່ລັດຖະບານອະນຸຍາດໃຫ້ຫັນປ່ຽນເທົ່ານັ້ນ ແລະ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ປະຕິບັດ ດັ່ງນີ້:

1. ໝາຍຂອບເຂດບ່ອນຈະຊຸດຄົ້ນໄມ້;

2. ສຳຫຼວດເກັບກຳຂໍ້ມູນຊະນິດໄມ້, ຈຳນວນໄມ້ຢືນຕົ້ນ ແລະ ຄິດໄລ່ບໍລິມາດໄມ້ ຕາມມາດຕະຖານເຕັກນິກ;

3. ສັງລວມຂໍ້ມູນ ເພື່ອສະເໜີລັດຖະບານ ພິຈາລະນາ.

**ມາດຕາ 25 (ປັບປຸງ) ການສຳຫຼວດ ເພື່ອຊຸດຄົ້ນເຄື່ອງປ່າຂອງດົງ**

ການສຳຫຼວດ ເພື່ອຊຸດຄົ້ນເຄື່ອງປ່າຂອງດົງ ແມ່ນ ການເກັບກຳຂໍ້ມູນ ທາງດ້ານຊະນິດ ແລະ ຈຳນວນເຄື່ອງປ່າຂອງດົງໃນເຂດ ປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ ແລະ ເຂດຫັນປ່ຽນທີ່ດິນປ່າໄມ້.

ການສຳຫຼວດ ເພື່ອຊຸດຄົ້ນເຄື່ອງປ່າຂອງດົງ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການກ່ຽວຂ້ອງ ປະຕິບັດ ດັ່ງນີ້:

1. ສຳຫຼວດໃນເຂດທີ່ລັດອະນຸຍາດ;

2. ສຳຫຼວດເກັບກຳຂໍ້ມູນຊະນິດເຄື່ອງປ່າຂອງດົງ, ຈຳນວນ ແລະ ປະລິມານ ຕາມມາດຕະຖານເຕັກນິກ;

3. ສັງລວມເຂົ້າໃນແຜນການຊຸດຄົ້ນປະຈຳປີ ເພື່ອຂໍອະນຸຍາດຊຸດຄົ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງກົດໝາຍສະບັບນີ້.

**ມາດຕາ 26 (ໃໝ່) ການສ້າງ ແລະ ການອະນຸມັດແຜນການຊຸດຄົ້ນໄມ້ຈາກປ່າທຳມະຊາດ**

ການສ້າງ ແລະ ການອະນຸມັດແຜນການຊຸດຄົ້ນໄມ້ຈາກປ່າທຳມະຊາດປະຈຳປີ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ສ້າງແຜນຊຸດຄົ້ນໄມ້ບົນພື້ນຖານຂໍ້ມູນສຳຫຼວດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ແລະ 24 ຂອງກົດໝາຍສະບັບນີ້ ເພື່ອສະເໜີອົງການປົກຄອງຂັ້ນແຂວງ ພິຈາລະນາຕົກລົງ ແລະ ນຳສະເໜີສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງ ຈາກນັ້ນຈຶ່ງສົ່ງໃຫ້ກະຊວງກະສິກຳ ແລະ ປ່າໄມ້;

2. ກະຊວງກະສິກຳ ແລະ ປ່າໄມ້ ຄົ້ນຄວ້າ ສັງລວມແຜນການຂຸດຄົ້ນໄມ້ ປະຈຳປີຂອງບັນດາແຂວງ, ນະຄອນຫຼວງ ເພື່ອສະເໜີລັດຖະບານພິຈາລະນາຕົກລົງ ແລະ ນຳສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ;

3. ລັດຖະບານ ອະນຸມັດແຜນການຂຸດຄົ້ນໄມ້ປະຈຳປີ ຕາມການຮັບຮອງຂອງສະພາແຫ່ງຊາດ;

4. ກະຊວງກະສິກຳ ແລະ ປ່າໄມ້ ແຈ້ງແຜນການຂຸດຄົ້ນໄມ້ປະຈຳປີ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຈັດຕັ້ງປະຕິບັດຕາມການອະນຸມັດຂອງລັດຖະບານ ພ້ອມທັງແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງຊາບ;

5. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ອອກໃບອະນຸຍາດຂຸດຄົ້ນໄມ້ ຕາມແຈ້ງການຂອງກະຊວງກະສິກຳ ແລະ ປ່າໄມ້ ໃຫ້ວິສາຫະກິດ ທີ່ມີຄວາມສາມາດຂຸດຄົ້ນໄມ້ ແລະ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸມັດແຜນການຂຸດຄົ້ນໄມ້ ທີ່ເປັນຢາຈາກປ່າທຳມະຊາດ ບົນພື້ນຖານການເຫັນດີຂອງກະຊວງສາທາລະນະສຸກ.

**ມາດຕາ 27 (ໃໝ່) ການສ້າງ ແລະ ການອະນຸມັດ ແຜນການຂຸດຄົ້ນເຄື່ອງປ່າຂອງດົງຈາກປ່າທຳມະຊາດ**

ຂະແໜງການກະສິກຳ ແລະ ປ່າໄມ້ ສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງຈາກປ່າທຳມະຊາດປະຈຳປີ ໂດຍອີງໃສ່ຂໍ້ມູນສຳຫຼວດຂຸດຄົ້ນເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້.

ການອະນຸມັດ ແຜນການຂຸດຄົ້ນເຄື່ອງປ່າຂອງດົງ ຈາກປ່າທຳມະຊາດ ໃຫ້ປະຕິບັດ ດັ່ງນີ້:

1. ເຄື່ອງປ່າຂອງດົງ ບັນຊີ I ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸມັດ ບົນພື້ນຖານການເຫັນດີຂອງລັດຖະບານ;

2. ເຄື່ອງປ່າຂອງດົງ ບັນຊີ II ແມ່ນ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເປັນຜູ້ອະນຸມັດ ບົນພື້ນຖານການເຫັນດີຂອງອົງການປົກຄອງຂັ້ນແຂວງ;

3. ເຄື່ອງປ່າຂອງດົງ ບັນຊີ III ສາມາດເກັບກູ້ໄດ້ຕາມລະດູການ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດ ແຕ່ຕ້ອງຮັບປະກັນຄວາມຍືນຍົງ.

ການອະນຸມັດແຜນການຂຸດຄົ້ນເຄື່ອງປ່າຂອງດົງເປັນຢາ ຊຶ່ງເກີດຕາມທຳມະຊາດ ແລະ ຢູ່ໃນລະບົບນິເວດປ່າໄມ້ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸມັດ ບົນພື້ນຖານການເຫັນດີຂອງກະຊວງສາທາລະນະສຸກ.

ສຳລັບເຄື່ອງປ່າຂອງດົງເປັນຢາທີ່ປູກ ຊຶ່ງໄດ້ຂຶ້ນທະບຽນຖືກຕ້ອງແລ້ວ ສາມາດເກັບກູ້ໄດ້ໂດຍບໍ່ຈຳເປັນຂໍອະນຸຍາດຕາມຂັ້ນຕອນທາງດ້ານວິຊາການ.

**ມາດຕາ 28 (ປັບປຸງ) ການຂຸດຄົ້ນໄມ້ໃນເຂດປ່າຜະລິດ**

ລັດ ອະນຸຍາດໃຫ້ຂຸດຄົ້ນໄມ້ໃນເຂດປ່າຜະລິດ ທີ່ມີແຜນຈັດສັນປ່າໄມ້ແບບຍືນຍົງ ແລະ ຜ່ານການສຳຫຼວດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້.

ການຂຸດຄົ້ນໄມ້ໃນເຂດປ່າຜະລິດ ໃຫ້ປະຕິບັດ ດັ່ງນີ້:

1. ຈັດຕັ້ງພະນັກງານປ່າໄມ້ ລົງປະຈຳເຂດຂຸດຄົ້ນໄມ້ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຂຸດຄົ້ນໄມ້ໃຫ້ຖືກຕ້ອງຕາມລະບຽບການ;

2. ນຳໃຊ້ວິສາຫະກິດທີ່ມີ ຄວາມສາມາດ, ປະສົບການ, ມາດຕະຖານ ໃນການຂຸດຄົ້ນໄມ້ ແລະ ໄດ້ຮັບການສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງຕາມກົດໝາຍ;

3. ຂຸດຄົ້ນໃຫ້ຖືກຕ້ອງຕາມເຂດ ແລະ ປະຕິບັດ ຕາມແຜນການທີ່ລັດອະນຸຍາດ;

4. ຂຸດຄົ້ນສະເພາະຕົ້ນໄມ້ ທີ່ອີງການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ໄດ້ ໝາຍ ແລະ ຕີຕາປມ;

5. ຕັດໄມ້ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ແລະ ດຳເນີນຕາມລະດູການ ພ້ອມທັງເກັບກູ້ ແລະ ນຳໃຊ້ໃຫ້ໝົດ;

6. ນຳໃຊ້ລະບົບຕັດຢອນ, ຕັດຕາມຮອບໝູນວຽນທີ່ກຳນົດ, ຮັບປະກັນການສືບພັນ, ປ້ອງກັນການກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ແລະ ຕ້ອງຈຳກັດການທຳລາຍຕົ້ນໄມ້ທີ່ຢູ່ອ້ອມຂ້າງ;

7. ລາກແກ່, ຂົນສົ່ງ ແລະ ທ້ອນໂຮມ ໄມ້ທ່ອນ ໃຫ້ດຳເນີນຕາມເສັ້ນທາງ ແລະ ຈຸດທ້ອນໂຮມໄມ້ທ່ອນ ຫຼື ສະໜາມໄມ້ທ່ອນ ທີ່ໄດ້ກຳນົດໃຫ້;

8. ຕ້ອງອະນາໄມສິ່ງເສດເຫຼືອຈາກການ ຂຸດຄົ້ນ ແລະ ຟື້ນຟູ ຫຼື ປູກທົດແທນຄືນ ຫຼັງຈາກຂຸດຄົ້ນໄມ້ແລ້ວ;

9. ຕ້ອງປະກາດປິດປ່າເຂດດັ່ງກ່າວ ເມື່ອຂຸດຄົ້ນສຳເລັດຕາມແຜນການ ແລ້ວວາງມາດຕະການຄຸ້ມຄອງ ແລະ ຟື້ນຟູບູລະນະ ເພື່ອໃຫ້ສາມາດດຳເນີນການຂຸດຄົ້ນໄດ້ໃນຮອບວຽນຕໍ່ໄປ.

**ມາດຕາ 29 (ໃໝ່) ການຂຸດຄົ້ນໄມ້ໃນເຂດຫັນປ່ຽນທີ່ດິນປ່າໄມ້**

ລັດ ອະນຸຍາດໃຫ້ຂຸດຄົ້ນໄມ້ ໃນເຂດໄດ້ຮັບການອະນຸຍາດໃຫ້ຫັນປ່ຽນທີ່ດິນປ່າໄມ້ ແລະ ໄດ້ຜ່ານການສຳຫຼວດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້ ແລະ ຕ້ອງປະຕິບັດ ດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບ ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຂຸດຄົ້ນໄມ້ ໃຫ້ຖືກຕ້ອງ ຕາມລະບຽບການ;

2. ສ້າງແຜນການຂຸດຄົ້ນ ພ້ອມທັງກຳນົດເສັ້ນທາງລາກແກ່, ສະໜາມທ້ອນໂຮມໄມ້;

3. ນຳໃຊ້ວິສາຫະກິດທີ່ມີ ຄວາມສາມາດ, ປະສົບການ, ມາດຕະຖານ ໃນການຂຸດຄົ້ນໄມ້ ແລະ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ຕາມກົດໝາຍ;

4. ຂຸດຄົ້ນໃຫ້ຖືກຕ້ອງຕາມເຂດ ແລະ ປະຕິບັດຕາມແຜນການ ທີ່ລັດອະນຸຍາດ;

5. ຕັດໄມ້ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ພ້ອມທັງເກັບກູ້ ແລະ ນຳໃຊ້ໃຫ້ໝົດ;

6. ລາກແກ່ ແລະ ທ້ອນໂຮມໄມ້ທ່ອນໄວ້ ສະໜາມ I ແລະ ຂົນສົ່ງໄປສະໜາມ II ເພື່ອວັດແທກ, ຈັດຊັ້ນຄຸນນະພາບ, ຂຶ້ນບັນຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້.

**ມາດຕາ 30 (ປັບປຸງ) ການຕັດໄມ້ປູກ**

ການຕັດໄມ້ປູກ ທຸກຊະນິດ ເພື່ອເປັນສິນຄ້າ ທີ່ໄດ້ຂຶ້ນທະບຽນປ່າປູກ ຫຼື ຂຶ້ນບັນຊີຢັ້ງຢືນໄມ້ປູກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້ ເຈົ້າຂອງປ່າປູກ ຫຼື ໄມ້ປູກ ສາມາດຕັດໄດ້ໂດຍບໍ່ຈຳເປັນ ສຳຫຼວດ ແລະ ຂໍອະນຸຍາດ ຕາມຂັ້ນຕອນທາງດ້ານວິຊາການ ແຕ່ກ່ອນຈະຕັດນັ້ນ ຕ້ອງນຳເອົາໃບທະບຽນປ່າປູກ ຫຼື ໃບຢັ້ງຢືນໄມ້ປູກ ເພື່ອຢັ້ງຢືນກຳມະສິດ ພ້ອມທັງລາຍງານ ແລະ ແຈ້ງ ສະຖານທີ່, ຊະນິດພັນໄມ້, ຈຳນວນຕົ້ນ ທີ່ຈະຕັດໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ.

ສຳລັບ ການຕັດໄມ້ປູກ ເພື່ອໃຊ້ໃນຄອບຄົວ ແລະ ສາທາລະນະປະໂຫຍດນັ້ນ ຈະໄດ້ຮັບການຍົກເວັ້ນຄ່າຊັບພະຍາກອນ, ຄ່າບູລະນະ ແລະ ຄ່າພັນທະຕ່າງໆ ແລະ ຕ້ອງໄດ້ລາຍງານຈຳນວນບໍລິມາດໄມ້ ຫຼື ນ້ຳໜັກຂອງໄມ້ ໃຫ້ອົງການປົກຄອງບ້ານ.

**ມາດຕາ 31 (ໃໝ່) ການຂຸດຄົ້ນເຄື່ອງປ່າຂອງດົງ**

ລັດ ອະນຸຍາດໃຫ້ຂຸດຄົ້ນເຄື່ອງປ່າຂອງດົງ ໃນເຂດປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດຄຸ້ມຄອງການນຳໃຊ້ໃນທີ່ດິນປ່າປ້ອງກັນ, ປ່າສະຫງວນ, ເຂດເນື້ອທີ່ດິນຂອງ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນໃຫ້ຢ່າງຖືກຕ້ອງຕາມກົດໝາຍ ແລະ ໃນເຂດປ່າຊົມໃຊ້ຂອງບ້ານ ທີ່ລັດຈັດສັນໃຫ້.

ການຂຸດຄົ້ນເຄື່ອງປ່າຂອງດົງ ແຕ່ລະຊະນິດ ຕ້ອງປະຕິບັດຕາມແຜນການທີ່ໄດ້ອະນຸມັດ, ເຂດທີ່ໄດ້ອະນຸຍາດ, ຕາມມາດຕະຖານເຕັກນິກ ແລະ ຮັບປະກັນຄວາມຍືນຍົງ.

**ມາດຕາ 32 (ປັບປຸງ) ການວັດແທກໄມ້ທ່ອນ ແລະ ຈັດຊັ້ນຄຸນນະພາບໄມ້**

ການວັດແທກໄມ້ທ່ອນ ແມ່ນ ການວັດແທກໜ້າຕ້າງ ຫຼື ວັດຮອບ ແລະ ລວງຍາວ ຂອງໄມ້ທ່ອນ ເພື່ອຄິດໄລ່ບໍລິມາດໄມ້.

ການຈັດຊັ້ນຄຸນນະພາບໄມ້ ແມ່ນ ການຕີລາຄາຄຸນນະພາບຂອງໄມ້ທ່ອນ ອອກເປັນປະເພດ ກ, ຂ, ຄ ແລະ ນອກປະເພດ ໂດຍອີງໃສ່ຕຳນິທີ່ມີຢູ່ຕາມທ່ອນໄມ້.

ໄມ້ທ່ອນ ທີ່ທ້ອນໂຮມຢູ່ສະໜາມ II ຕ້ອງໃຫ້ວັດແທກລະອຽດ, ຈັດຊັ້ນຄຸນນະພາບ ແລະ ຂຶ້ນບັນຊີຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລ້ວມອບບັນຊີໄມ້ທ່ອນໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອຈົດເຂົ້າບັນຊີຊັບສິນຂອງລັດ ນຳຂະແໜງການການເງິນ ແລ້ວຈຶ່ງປະມູນຂາຍ.

ຫຼັກການ ແລະ ວິທີການ ການວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 33 (ໃໝ່) ການປະມູນຊື້ ຂາຍໄມ້**

ການຊື້ ຂາຍ ໄມ້ທ່ອນ ທີ່ຂຸດຄົ້ນຈາກປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ແລະ 29 ຂອງກົດໝາຍສະບັບນີ້ ແລະ ໄມ້ທີ່ຮິບເປັນຂອງລັດ ຕ້ອງດຳເນີນການປະມູນແບບເປີດກວ້າງ ໃຫ້ແກ່ບັນດາໂຮງງານທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ໄດ້ມາດຕະຖານ ແນໃສ່ຮັບປະກັນຜົນປະໂຫຍດສູງສຸດຂອງລັດ. ການປະມູນຂາຍໄມ້ ຕ້ອງເຮັດແບບເປີດເຜີຍ, ກວ້າງຂວາງ, ໂປ່ງໃສ ແລະ ຍຸຕິທຳ ເພື່ອເຮັດໃຫ້ຜູ້

ປະມູນມີໂອກາດໄດ້ໄມ້ ຕອບສະໜອງໃຫ້ແກ່ໂຮງງານຂອງຕົນ. ເງິນທີ່ໄດ້ຈາກການປະມູນຊື້ ຂາຍໄມ້ ຕ້ອງມອບເຂົ້າງົບປະມານແຫ່ງລັດ.

ສຳລັບ ການຊື້ ຂາຍ ໄມ້ປູກ ທີ່ເປັນກຳມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ເປັນຄວາມຮັບຜິດຊອບຂອງເຈົ້າຂອງປ່າປູກ ຫຼື ໄມ້ປູກ.

**ມາດຕາ 34 (ໃໝ່) ການຊື້ ຂາຍ ເຄື່ອງປ່າຂອງດົງ**

ເຄື່ອງປ່າຂອງດົງທຸກຊະນິດ ທີ່ສາມາດປຸງແຕ່ງໄດ້ ຢູ່ພາຍໃນປະເທດ ສາມາດຊື້ ຂາຍທົ່ວໄປ ຫຼື ຂາຍໃຫ້ໂຮງງານປຸງແຕ່ງ ທີ່ໄດ້ມາດຕະຖານ ແນໃສ່ສົ່ງເສີມອຸດສາຫະກຳປຸງແຕ່ງພາຍໃນ ແລະ ຮັບປະກັນຜົນປະໂຫຍດສູງສຸດຂອງ ລັດ ແລະ ປະຊາຊົນ.

ສຳລັບ ເຄື່ອງປ່າຂອງດົງ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງປູກນັ້ນ ເປັນຄວາມຮັບຜິດຊອບຂອງຜູ້ປູກ ຫຼື ຜູ້ລົງທຶນປູກ.

**ມາດຕາ 35 (ປັບປຸງ) ການເຄື່ອນຍ້າຍໄມ້ຈາກປ່າທຳມະຊາດ**

ການເຄື່ອນຍ້າຍໄມ້ຈາກປ່າທຳມະຊາດ ພາຍໃນປະເທດ ຕ້ອງປະຕິບັດຕາມກົດໝາຍ ເຊັ່ນ ຂຶ້ນບັນຊີ, ຈັດຊັ້ນຄຸນນະພາບ, ມອບພັນທະ, ຈ່າຍຄ່າທຳນຽມ, ອາກອນ. ໄມ້ແຕ່ລະທ່ອນ, ໄມ້ຕັບ, ໄມ້ເລື່ອຍ, ຕໍໄມ້ ແລະ ປຸດໄມ້ ຕ້ອງມີເຄື່ອງໝາຍ ແລະ ຕີຕາ ປມ, ມີເອກະສານອະນຸຍາດເຄື່ອນຍ້າຍຈາກຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 36 (ໃໝ່) ການເຄື່ອນຍ້າຍໄມ້ປູກຢູ່ພາຍໃນ ແລະ ສົ່ງອອກ**

ໄມ້ປູກ ທຸກຊະນິດ ສາມາດເຄື່ອນຍ້າຍໄດ້ ໂດຍບໍ່ຈຳເປັນຂໍອະນຸຍາດ ແຕ່ເຈົ້າຂອງໄມ້ປູກ ຕ້ອງລາຍງານບໍລິມາດ ຫຼື ນ້ຳໜັກໄມ້ ທີ່ໄດ້ຊື້ ຂາຍ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນ.

ໄມ້ປູກ ສາມາດສົ່ງອອກເປັນໄມ້ທ່ອນໄດ້ ແຕ່ຕ້ອງປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ແລະ ສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 37 (ໃໝ່) ການເຄື່ອນຍ້າຍເຄື່ອງປ່າຂອງດົງ**

ການເຄື່ອນຍ້າຍເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມກົດໝາຍ ເຊັ່ນ ຈ່າຍຄ່າທຳນຽມ, ຄ່າຊົດພະຍາກອນທຳມະຊາດ, ອາກອນ ແລະ ມີເອກະສານອະນຸຍາດເຄື່ອນຍ້າຍ ຈາກຂະແໜງການກະສິກຳ ແລະ ປ່າໄມ້.

ສຳລັບ ການເຄື່ອນຍ້າຍເຄື່ອງປ່າຂອງດົງ ບັນຊີ I ແລະ ບັນຊີ II ຕ້ອງໄດ້ຂໍອະນຸຍາດນຳພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ສຳລັບບັນຊີ III ຕ້ອງຂໍອະນຸຍາດ ນຳຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

ການເຄື່ອນຍ້າຍເຄື່ອງປ່າຂອງດົງທີ່ປູກ ແລະ ຟື້ນຟູ ດ້ວຍທຶນຮອນ ແລະ ເຫື່ອແຮງຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍມີໜັງສືຢັ້ງຢືນ ຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ໃຫ້ຍົກເວັ້ນຄ່າບຸລະນະປ່າໄມ້ ແລະ ຄ່າຊົດພະຍາກອນທຳມະຊາດ.

ສຳລັບການເຄື່ອນຍ້າຍເຄື່ອງປ່າຂອງດົງທີ່ເປັນຢານັ້ນ ຍັງຕ້ອງຂໍອະນຸຍາດນຳຂະແໜງການສາທາລະນະສຸກຕື່ມ ຈຶ່ງເຄື່ອນຍ້າຍໄດ້.

**ມາດຕາ 38 (ປັບປຸງ) ການຄຸ້ມຄອງ ພາຫະນະ, ເຄື່ອງຈັກຂຸດຄົ້ນ, ລາກແກ່ ແລະ ຂົນສົ່ງໄມ້**

ການນຳເຂົ້າ ແລະ ຈຳໜ່າຍ ພາຫະນະ, ເຄື່ອງຈັກຂຸດຄົ້ນໄມ້, ກົນຈັກລາກແກ່ ແລະ ຂົນສົ່ງໄມ້ ຕ້ອງຂໍອະນຸຍາດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ບົນພື້ນຖານການເຫັນດີ ຈາກຂະແໜງການກະສິກຳ ແລະ ປ່າໄມ້.

ການມີໄວ້ໃນຄອບຄອງຈັກຕັດໄມ້ທຸກຊະນິດ ຕ້ອງໄດ້ຂຶ້ນທະບຽນ ນຳຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງທີ່ກ່ຽວຂ້ອງ ເພື່ອຕິດຕາມ ແລະ ຄຸ້ມຄອງການນຳໃຊ້.

ສຳລັບການນຳເຂົ້າ, ການຈຳໜ່າຍ, ການມີໄວ້ໃນຄອບຄອງ ແລະ ການນຳໃຊ້ ເຄື່ອງຈັກປຸງແຕ່ງໄມ້ທຸກຊະນິດ ຕ້ອງໄດ້ຂໍອະນຸຍາດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

**ມາດຕາ 39 (ໃໝ່) ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ**

ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ແມ່ນ ການຈັດສັນປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດການປົກຄອງຂອງບ້ານ ຊຶ່ງດຳເນີນທັງຢູ່ໃນ ແລະ ນອກ ເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ເພື່ອໃຫ້ບ້ານ ເປັນເຈົ້າການ ຄຸ້ມຄອງ, ປົກປັກຮັກສາປ່າໄມ້, ປູກ ແລະ ຟື້ນຟູປ່າໄມ້ທີ່ຊຸດໂຊມ, ຕ້ານ ຫຼື ສະກັດກັ້ນໄຟໄໝ້ປ່າ, ໄຟລາມປ່າ, ການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້ ແນໃສ່ເຮັດໃຫ້ປ່າໄມ້ ໃນເຂດຄຸ້ມຄອງຂອງບ້ານມີຄວາມອຸດົມສົມບູນ ແລະ ກາຍເປັນບ້ານພັດທະນາດ້ານປ່າໄມ້.

ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 40 (ໃໝ່) ການຄຸ້ມຄອງຕົ້ນໄມ້ ໃນຕົວເມືອງ ແລະ ໃນທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ**

ຕົ້ນໄມ້ ທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກຂຶ້ນ ໃນຕົວເມືອງ, ສວນສາທາລະນະ, ແຄມທາງ ແລະ ໃນທີ່ດິນສາທາລະນະອື່ນ ມອບໃຫ້ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງ ແລະ ປົກປັກຮັກສາ ເພື່ອສາທາລະນະປະໂຫຍດ ເຊັ່ນ ເປັນສະຖານທີ່ພັກຜ່ອນ, ປະດັບປະດາຄວາມສວຍງາມ ແລະ ປົກປັກຮັກສາສິ່ງແວດລ້ອມ.

ຕົ້ນໄມ້ທຳມະຊາດ ທີ່ມີ ໃນທີ່ດິນນາ, ທີ່ດິນສວນ, ທີ່ດິນປຸກສ້າງ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນບ້ານ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ ຊຶ່ງຜູ້ກ່ຽວໄດ້ອອກແຮງໃນການຄຸ້ມຄອງ ແລະ ປົກປັກຮັກສານັ້ນ ລັດຮັບຮູ້ກຳມະສິດດັ່ງກ່າວ ໂດຍໃຫ້ຈຸງານກະສິກຳ ແລະ ປ່າໄມ້ບ້ານ ເກັບກຳ, ຂຶ້ນບັນຊີ ເພື່ອສະເໜີອົງການປົກຄອງບ້ານອອກໃບຢັ້ງຢືນ ແລະ ຮັບຮູ້ຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງທີ່ກ່ຽວຂ້ອງ.

**ມາດຕາ 41 (ໃໝ່) ການຂຶ້ນທະບຽນປ່າປູກ, ເຄື່ອງປ່າຂອງດົງທີ່ປູກ ແລະ ການຂຶ້ນບັນຊີໄມ້ປູກ**

ປ່າປູກ ແລະ ເຄື່ອງປ່າຂອງດົງທີ່ປູກ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງໄດ້ຂຶ້ນທະບຽນ ນຳຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອຢັ້ງຢືນກຳມະສິດ ແລະ ແຫຼ່ງທີ່ມາຂອງໄມ້ ແລະ ເຄື່ອງປ່າຂອງດົງທີ່ປູກ, ອຳນວຍຄວາມສະດວກໃນການ ຄຸ້ມຄອງ, ປົກປັກຮັກສາ ແລະ ປະຕິບັດນະໂຍບາຍສົ່ງເສີມການປູກ ຕາມກົດໝາຍ.

ໄມ້ປູກຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງໄດ້ເກັບກຳ ແລະ ຂຶ້ນບັນຊີນຳອົງການປົກຄອງບ້ານ ເພື່ອຢັ້ງຢືນກຳມະສິດ ແລະ ແຫຼ່ງທີ່ມາຂອງໄມ້.

ສຳລັບ ຂັ້ນຕອນ ແລະ ລາຍລະອຽດ ການຂຶ້ນທະບຽນປ່າປູກ, ເຄື່ອງປ່າຂອງດົງທີ່ປູກ ແລະ ການຢັ້ງຢືນໄມ້ປູກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 42 (ໃໝ່) ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ**

ແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ ແມ່ນ ປ່າໄມ້ ຫຼື ຕົ້ນໄມ້ ແລະ ເຄື່ອງປ່າຂອງດົງ ທີ່ເກີດຂຶ້ນໃນປ່າທຳມະຊາດ ແລະ ປ່າປູກ ທີ່ລັດກຳນົດຂຶ້ນ ເພື່ອຕອບສະໜອງແນວພັນ ໄມ້ ແລະ ເຄື່ອງປ່າຂອງດົງ.

ຂະແໜງການກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ກຳນົດພື້ນທີ່, ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນ ໄມ້ ແລະ ເຄື່ອງປ່າຂອງດົງ.

**ມາດຕາ 43 (ໃໝ່) ການຄ້ຳປະກັນ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງ**

ການຄ້ຳປະກັນໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງ ແມ່ນ ລະບົບການຄຸ້ມຄອງຕ່ອງໂສ້ການສະໜອງໄມ້, ການກວດກາຢັ້ງຢືນແຫຼ່ງທີ່ມາຂອງໄມ້ ແລະ ຜະລິດຕະພັນໄມ້ ທີ່ໄດ້ຜ່ານການ ສຳຫຼວດ, ຂຸດຄົ້ນ, ເຄື່ອນຍ້າຍ, ນຳເຂົ້າ, ຊື້ ຂາຍ, ປຸງແຕ່ງ, ຈຳໜ່າຍພາຍໃນ ແລະ ສົ່ງອອກ.

ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບກະຊວງ ແລະ ອົງການອື່ນ ທີ່ກ່ຽວຂ້ອງ ສ້າງລະບົບຄ້ຳປະກັນໄມ້ ແລະ ຜະລິດຕະພັນໄມ້ ໂດຍສອດຄ່ອງກັບກົດໝາຍສະບັບນີ້, ກົດໝາຍອື່ນທີ່ກ່ຽວຂ້ອງ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 44 (ປັບປຸງ) ການຄົ້ນຄວ້າທົດລອງ**

ການຄົ້ນຄວ້າທົດລອງ ມີຈຸດປະສົງ ຂະຫຍາຍພັນ, ສືບພັນ, ປັບປຸງພັນ, ພັນທຸກຳພືດ ແລະ ໄມ້, ການຈະເລີນເຕີບໂຕ, ຄຸນປະໂຫຍດຂອງໄມ້ ແລະ ເຄື່ອງປ່າຂອງດົງ ທາງດ້ານປະລິມານ ແລະ ຄຸນນະພາບ ລວມທັງຄົ້ນຄວ້າຊອກຫາຮູບແບບ ແລະ ກຳນົດມາດຕະຖານເຕັກນິກ ທີ່ມີປະສິດທິຜົນໃນການປົກປັກຮັກສາ ແລະ ພັດທະນາປ່າໄມ້.

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດດຳເນີນການສຶກສາ, ຄົ້ນຄວ້າທົດລອງ, ຂຶ້ນບັນຊີ, ຈົດທະບຽນ ຊະນິດພັນພືດ, ພັນໄມ້ ແລະ ເຄື່ອງປ່າຂອງດົງ ທີ່ເກີດຂຶ້ນຕາມທຳມະຊາດ, ລົງທຶນສ້າງສະຖາບັນ ຫຼື ສູນຄົ້ນຄວ້າທົດລອງທາງດ້ານວິຊາການ ຕາມການອະນຸຍາດຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 45 (ໃໝ່) ຂໍ້ມູນ ຂ່າວສານ ປ່າໄມ້**

ຂໍ້ມູນ ຂ່າວສານ ປ່າໄມ້ ແມ່ນ ເອກະສານ, ຕົວເລກ, ສະຖິຕິ, ແຜນທີ່, ພາບຖ່າຍທາງອາກາດ, ຊິ້ນສ່ວນໄມ້ ແລະ ເຄື່ອງປ່າຂອງດົງ ແລະ ຂໍ້ມູນອື່ນ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ ໄດ້ເກັບຮັກສາໄວ້ໃນລະບົບຖານຂໍ້ມູນ ດ້ວຍຮູບແບບ ເອເລັກໂຕຣນິກ, ທຳສະໝຸດ, ສູນຂໍ້ມູນ ຂ່າວສານ ແລະ ອື່ນໆ.

ຂໍ້ມູນ ຂ່າວສານ ປ່າໄມ້ ນຳໃຊ້ສຳລັບ ການສຶກສາຄົ້ນຄວ້າ, ການກຳນົດນະໂຍບາຍ, ການສ້າງແຜນຍຸດທະສາດປ່າໄມ້, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍມອບໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ພັດທະນາ, ຄຸ້ມຄອງ, ນຳໃຊ້ຢ່າງລວມສູນ ແລະ ໂຄສະນາ ເຜີຍແຜ່ ໃຫ້ສັງຄົມຢ່າງທົ່ວເຖິງ.

## ໝວດທີ 2
## ການປົກປັກຮັກສາປ່າໄມ້

**ມາດຕາ 46 (ປັບປຸງ) ການປົກປັກຮັກສາປ່າໄມ້**

ການປົກປັກຮັກສາປ່າໄມ້ ມີ ດັ່ງນີ້:

1. ການປົກປັກຮັກສາປ່າປ້ອງກັນ;
2. ການປົກປັກຮັກສາປ່າສະຫງວນ;
3. ການປົກປັກຮັກສາປ່າຜະລິດ;
4. ການປົກປັກຮັກສາ ພັນໄມ້ ແລະ ເຄື່ອງປ່າຂອງດົງ;
5. ການກັນ, ການຕ້ານພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ;
6. ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ;
7. ການຈຳກັດການຖາງປ່າເຮັດໄຮ່ແບບເລື່ອນລອຍ.

**ມາດຕາ 47 (ປັບປຸງ) ການປົກປັກຮັກສາປ່າປ້ອງກັນ**

ການປົກປັກຮັກສາປ່າປ້ອງກັນ ແມ່ນ ການຮັກສາແຫຼ່ງນ້ຳ, ປ້ອງກັນການເຊາະເຈື່ອນ ແລະ ຄຸນນະພາບຂອງດິນ, ເຂດຍຸດທະສາດປ້ອງກັນຊາດ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ.

ໃນການປົກປັກຮັກສາປ່າປ້ອງກັນ ໃຫ້ປະຕິບັດ ດັ່ງນີ້:

1. ສຳຫຼວດ, ກຳນົດຂອບເຂດ ແລະ ປັກຫຼັກໝາຍ ບົນພື້ນຖານການເຫັນດີເປັນເອກະພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

2. ສຳຫຼວດ ເກັບກຳຂໍ້ມູນ ກ່ຽວກັບຄຸນລັກສະນະຂອງພື້ນທີ່, ຄວາມຄ້ອຍຊັນ, ແຫຼ່ງນ້ຳ, ຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ເພື່ອກຳນົດເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງການນຳໃຊ້;

3. ສ້າງແຜນທີ່ສະແດງຂອບເຂດ, ທີ່ຕັ້ງ ແລະ ສະພາບປ່າໄມ້;

4. ວາງແຜນການ ແລະ ກຳນົດມາດຕະການປົກປັກຮັກສາ ແລະ ຟື້ນຟູປ່າປ້ອງກັນ;

5. ຈັດຕັ້ງປະຕິບັດການຄຸ້ມຄອງເຂດປ່າປ້ອງກັນ ຕາມແຜນການ ແລະ ມາດຕະການ ທີ່ໄດ້ກຳນົດໄວ້ ໂດຍມີການເຂົ້າຮ່ວມຂອງປະຊາຊົນໃນທ້ອງຖິ່ນ;

6. ດຳເນີນການຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການຢ່າງເປັນລະບົບ.

**ມາດຕາ 48 (ປັບປຸງ) ການປົກປັກຮັກສາປ່າສະຫງວນ**

ການປົກປັກຮັກສາປ່າສະຫງວນ ແມ່ນ ການຮັກສາປ່າໄມ້ ໃຫ້ອຸດົມສົມບູນ ກໍຄືປົກປັກຮັກສາພັນພືດ, ພັນສັດ, ຊີວະນາໆພັນ, ລະບົບນິເວດທີ່ມີຄຸນຄ່າທາງດ້ານ ທຳມະຊາດ, ປະຫວັດສາດ, ວັດທະນະທຳ ໃຫ້ດຳລົງຄົງຕົວ ແລະ ຂະຫຍາຍຕົວ ພ້ອມກັນນັ້ນ ກໍໃຫ້ມີປ່າໄມ້, ທິວທັດທຳມະຊາດທີ່ສວຍສົດງົດງາມ ເພື່ອການພັດທະນາສວນອຸທິຍານແຫ່ງຊາດ ຊຶ່ງເໝາະສົມຕໍ່ການທ່ອງທ່ຽວ ແລະ ການຄົ້ນຄວ້າທົດລອງທາງດ້ານວິທະຍາສາດ.

ການປົກປັກຮັກສາປ່າສະຫງວນ ໃຫ້ປະຕິບັດ ດັ່ງນີ້:

1. ສຳຫຼວດ, ກຳນົດຂອບເຂດ ແລະ ປັກຫຼັກໝາຍ ບົນພື້ນຖານການເຫັນດີເປັນເອກະພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

2. ສຳຫຼວດ ເກັບກຳຂໍ້ມູນກ່ຽວກັບຄຸນລັກສະນະຂອງພື້ນທີ່, ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ, ຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ເພື່ອກຳນົດເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້ ແລະ ເຂດກັນຊົນ ໃນກໍລະນີທີ່ມີທີ່ຕັ້ງໃກ້ຄຽງກັບປ່າປະເພດອື່ນ;

3. ສ້າງແຜນທີ່ສະແດງຂອບເຂດ, ທີ່ຕັ້ງ ແລະ ສະພາບປ່າໄມ້;

4. ວາງແຜນການ ແລະ ກຳນົດ ມາດຕະການປົກປັກຮັກສາ ແລະ ຟື້ນຟູປ່າສະຫງວນ;

5. ຈັດຕັ້ງປະຕິບັດການຄຸ້ມຄອງເຂດປ່າສະຫງວນ ຕາມແຜນການ ແລະ ມາດຕະການ ທີ່ໄດ້ກຳນົດໄວ້ ໂດຍມີການເຂົ້າຮ່ວມຂອງປະຊາຊົນໃນທ້ອງຖິ່ນ;

6. ດຳເນີນການ ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການຢ່າງເປັນລະບົບ.

**ມາດຕາ 49 ການປົກປັກຮັກສາປ່າຜະລິດ**

ການປົກປັກຮັກສາປ່າຜະລິດ ແມ່ນ ການຮັກສາປ່າໄມ້ໃຫ້ອຸດົມສົມບູນ ເພື່ອສະໜອງ ໄມ້ ແລະ ເຄື່ອງປ່າຂອງດົງເປັນສິນຄ້າແບບຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ.

ການປົກປັກຮັກສາປ່າຜະລິດ ໃຫ້ປະຕິບັດ ດັ່ງນີ້:

1. ສຳຫຼວດ, ກຳນົດຂອບເຂດ ແລະ ປັກຫຼັກໝາຍ ບົນພື້ນຖານການເຫັນດີເປັນເອກະພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

2. ສຳຫຼວດ ເກັບກຳຂໍ້ມູນກ່ຽວກັບສະພາບການນຳໃຊ້ທີ່ດິນ ແລະ ປ່າໄມ້, ບໍລິມາດໄມ້, ຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອກຳນົດແຜນຈັດສັນປ່າຜະລິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ວັກທີສີ່ ຂອງກົດໝາຍສະບັບນີ້;

3. ກຳນົດ ແຜນການ ແລະ ມາດຕະການປົກປັກຮັກສາ ແລະ ພັດທະນາ ຕາມແຜນຈັດສັນປ່າຜະລິດ ເປັນຕົ້ນ ເຂດອະນຸລັກ ແລະ ປົກປັກຮັກສາສິ່ງແວດລ້ອມ, ເຂດປູກໄມ້ ແລະ ຟື້ນຟູປ່າ, ເຂດຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ;

4. ຈັດຕັ້ງປະຕິບັດການຄຸ້ມຄອງເຂດປ່າຜະລິດ ຕາມແຜນການ ແລະ ມາດຕະການ ທີ່ໄດ້ກຳນົດໄວ້ ໂດຍມີການເຂົ້າຮ່ວມຂອງປະຊາຊົນທ້ອງຖິ່ນ;

5. ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ຖືກຕ້ອງຕາມກົດໝາຍ;

6. ດຳເນີນການ ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການຢ່າງເປັນລະບົບ;

7. ປະຕິບັດ ກົດໝາຍ, ລະບຽບການ ແລະ ມາດຕະການ ກ່ຽວກັບການປົກປັກຮັກສາ.

**ມາດຕາ 50 ການປົກປັກຮັກສາ ພັນໄມ້ ແລະ ເຄື່ອງປ່າຂອງດົງ**

ການປົກປັກຮັກສາ ພັນໄມ້ ແລະ ເຄື່ອງປ່າຂອງດົງ ເປັນຕົ້ນ ປະເພດຫວງຫ້າມ, ຫາຍາກ ແລະ ໃກ້ຈະສູນພັນ ໃນບັນຊີ I ທີ່ ລັດ ໄດ້ກຳນົດໄວ້ ເພື່ອເຮັດໃຫ້ມີການຂະຫຍາຍຕົວ ແລະ ມີຄວາມອຸດົມສົມບູນ.

ການປົກປັກຮັກສາ ພັນໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ປະຕິບັດ ດັ່ງນີ້:

1. ສຳຫຼວດຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ;
2. ກຳນົດເຂດແຫຼ່ງພັນ, ຂຶ້ນບັນຊີ ແລະ ຈົດທະບຽນພັນໄມ້ ແລະ ເຄື່ອງປ່າຂອງດົງ;
3. ກຳນົດແຜນການອະນຸລັກ, ປົກປັກຮັກສາ ໂດຍມີການເຂົ້າຮ່ວມຂອງປະຊາຊົນທ້ອງຖິ່ນ;
4. ປະຕິບັດກົດໝາຍ, ລະບຽບການ ແລະ ມາດຕະການ ກ່ຽວກັບການປົກປັກຮັກສາ;
5. ມີການເຄື່ອນໄຫວອື່ນທີ່ຈຳເປັນ.

**ມາດຕາ 51 (ປັບປຸງ) ການກັນ, ການຕ້ານ ພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ**

ການກັນ, ການຕ້ານ ພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ແມ່ນ ເພື່ອປ້ອງກັນບໍ່ໃຫ້ພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ເກີດຂຶ້ນ, ລະບາດ ແລະ ແກ້ໄຂ ໃຫ້ມີປະສິດທິພາບ ທັນເວລາ.

ການກັນ, ການຕ້ານ ພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ໃຫ້ປະຕິບັດ ດັ່ງນີ້:

1. ສຶກສາຂໍ້ມູນການເກີດ ແລະ ການລະບາດຂອງເຊື້ອພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ;
2. ຈັດຕັ້ງການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ໃນເຂດປ່າຂອງຕົນ;
3. ກຳນົດເຂດປອດພະຍາດ ແລະ ເຂດປ້ອງກັນ;
4. ສ້າງສູນຄົ້ນຄວ້າການກັນ ແລະ ຕ້ານພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ, ອອກໃບຢັ້ງຢືນການຄຸ້ມຄອງການຜະລິດ, ການແຈກຢາຍ ແລະ ການນຳໃຊ້ແນວພັນໄມ້ທີ່ປອດພະຍາດ;
5. ບໍ່ອະນຸຍາດໃຫ້ນຳເຂົ້າ ຫຼື ເຄື່ອນຍ້າຍພັນໄມ້ ທີ່ມີເຊື້ອພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ຢ່າງເດັດຂາດ;
6. ມີການເຄື່ອນໄຫວອື່ນທີ່ຈຳເປັນ.

**ມາດຕາ 52 (ປັບປຸງ) ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ**

ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ ແມ່ນ ການປ້ອງກັນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ບໍ່ໃຫ້ຖືກທຳລາຍດ້ວຍອັກຄີໄພ.

ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ ໃຫ້ປະຕິບັດ ດັ່ງນີ້:

1. ກຳນົດລະບຽບການ ແລະ ມາດຕະການທີ່ຈຳເປັນ ກ່ຽວກັບການຕິດຕາມ, ເຝົ້າລະວັງ, ສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ;
2. ໂຄສະນາ ສຶກສາອົບຮົມ ໃຫ້ປະຊາຊົນ ເຫັນໄດ້ເຖິງ ສາເຫດ ແລະ ໄພອັນຕະລາຍຂອງໄຟໄໝ້ປ່າ ແລະ ເປັນເຈົ້າການ ຕິດຕາມ, ເຝົ້າລະວັງ, ສະກັດກັ້ນ, ຕ້ານ ແລະ ມອດໄຟໄໝ້ປ່າ ທີ່ເກີດໃນຂອບເຂດຄວາມຮັບຜິດຊອບຂອງບ້ານ;

3. ເກັບກຳຂໍ້ມູນ, ກຳນົດເຂດທີ່ມີຄວາມສ່ຽງ ເພື່ອວາງແຜນປ້ອງກັນໄຟໄໝ້ລາມປ່າ ໃຫ້ທັນລະດູການ;

4. ລະດົມ ພາຫະນະ, ວັດຖຸປະກອນ, ແຮງງານ ຈາກທຸກພາກສ່ວນເຂົ້າໃນການມອດໄຟ ເມື່ອເກີດໄຟໄໝ້ປ່າ, ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ;

5. ມີການເຄື່ອນໄຫວອື່ນທີ່ຈຳເປັນ.

### ມາດຕາ 53 (ປັບປຸງ) ການຈຳກັດການຖາງປ່າເຮັດໄຮ່ແບບເລື່ອນລອຍ

ການຈຳກັດການຖາງປ່າເຮັດໄຮ່ແບບເລື່ອນລອຍ ໃຫ້ດຳເນີນດ້ວຍການ ຊຸກຍູ້, ໂຄສະນາ ເຜີຍແຜ່ນະໂຍບາຍ ແລະ ກົດໝາຍ ທີ່ກ່ຽວຂ້ອງ ໃຫ້ປະຊາຊົນຢຸດເຊົາການຖາງປ່າເຮັດໄຮ່ ເພື່ອຫັນມາເຮັດອາຊີບຄົງທີ່.

ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການ ຈັດສັນທີ່ດິນ ແລະ ມອບດິນ ມອບປ່າ ໃຫ້ປະຊາຊົນທີ່ອາໄສຢູ່ໃນເຂດປ່າໄມ້ ເພື່ອດຳເນີນການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ ດ້ວຍການສົ່ງເສີມການຜະລິດ ແລະ ສ້າງເສດຖະກິດຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ວັກທີສາມ ແລະ ມາດຕາ 118 ຂອງກົດໝາຍສະບັບນີ້.

## ໝວດທີ 3
## ການພັດທະນາປ່າໄມ້

### ມາດຕາ 54 ການຟື້ນຟູປ່າໄມ້ ແລະ ການປູກໄມ້

ການຟື້ນຟູປ່າໄມ້ ແລະ ການປູກປ່າ ແມ່ນ ເພື່ອປົກປັກຮັກສາ ແລະ ພັດທະນາ ຊັບພະຍາກອນປ່າໄມ້ຂອງຊາດ ແນໃສ່ຕອບສະໜອງການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງຢ່າງບໍ່ຂາດແຄນ, ປົກປັກຮັກສາ ແຫຼ່ງນ້ຳ, ດິນ, ສັດນ້ຳ, ສັດປ່າ ແລະ ສິ່ງແວດລ້ອມ ໃຫ້ມີຄວາມສົມດຸນ ທັງເປັນແຫຼ່ງລາຍຮັບອັນສຳຄັນຂອງ ລັດ, ການຈັດຕັ້ງ ແລະ ບຸກຄົນ.

### ມາດຕາ 55 (ປັບປຸງ) ຂັ້ນຕອນການຟື້ນຟູປ່າໄມ້

ການຟື້ນຟູປ່າໄມ້ ປະກອບດ້ວຍ ສອງ ຮູບແບບ ຄື ແບບທຳມະຊາດ ແລະ ແບບປູກເສີມ ຊຶ່ງດຳເນີນໄດ້ ໃນເຂດປ່າເຫຼົ່າ ແລະ ປ່າໄມ້ທຳມະຊາດ ທີ່ມີສະພາບຊຸດໂຊມ ໂດຍການປ້ອງກັນບໍ່ໃຫ້ເກີດມີໄຟໄໝ້ລາມປ່າ ແລະ ບໍ່ໃຫ້ມີການບຸກລຸກທຳລາຍ.

ການຟື້ນຟູປ່າໄມ້ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສຳຫຼວດສະພາບການສືບພັນໄມ້ ໃນເນື້ອທີ່ປ່າໄມ້ທີ່ຈະດຳເນີນການຟື້ນຟູ;
2. ກຳນົດຂອບເຂດ ແລະ ປັກຫຼັກໝາຍ;
3. ກຳນົດຊະນິດພັນໄມ້ພື້ນເມືອງທີ່ເໝາະສົມກັບລະບົບນິເວດຂອງພື້ນທີ່ປ່າດັ່ງກ່າວ;

4. ສ້າງເປັນແຜນການ ຫຼື ໂຄງການຟື້ນຟູປ່າໄມ້ ຕິດພັນກັບກິດຈະກຳສົ່ງເສີມການສ້າງລາຍຮັບໃຫ້ແກ່ປະຊາຊົນ;

5. ຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ປົວລະບັດຮັກສາ ຢ່າງເຂັ້ມງວດ;

6. ຂຶ້ນທະບຽນເປັນປ່າຟື້ນຟູ ຕາມລະບຽບການ.

**ມາດຕາ 56 ແຜນການຟື້ນຟູປ່າໄມ້ ແລະ ການປູກໄມ້**

ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ຮັບຜິດຊອບຂຶ້ນແຜນຟື້ນຟູປ່າໄມ້ ແລະ ປູກປ່າ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ໃນຂອບເຂດທ້ອງຖິ່ນຂອງຕົນ ໃນນັ້ນໃຫ້ບົ່ງແຈ້ງ ພັນໄມ້ທີ່ຈະປູກ, ສະຖານທີ່, ເນື້ອທີ່ ແລະ ທຶນ ລວມທັງຜູ້ຈະດຳເນີນການປູກ, ຟື້ນຟູ ແລະ ປົວລະບັດຮັກສາ.

**ມາດຕາ 57 (ປັບປຸງ) ການກຳນົດເຂດຟື້ນຟູປ່າໄມ້, ປູກໄມ້ ແລະ ການເລືອກພັນໄມ້ທີ່ຈະປູກ**

ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນໃນເຂດທ້ອງຖິ່ນ ທີ່ກ່ຽວຂ້ອງ ສຳຫຼວດ ແລະ ກຳນົດເຂດຟື້ນຟູປ່າໄມ້ ແລະ ປູກໄມ້.

ເຂດຟື້ນຟູປ່າໄມ້ ຕ້ອງເລັ່ງໃສ່ປ່າໄມ້ທຳມະຊາດ ທີ່ມີສະພາບຊຸດໂຊມ ແລະ ເຂດປ່າເຫຼົ່າ, ສ່ວນເຂດປູກໄມ້ ຕ້ອງເລັ່ງໃສ່ທີ່ດິນປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ຕາມທີ່ໄດ້ຈັດສັນໃຫ້ ຫຼື ທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ.

ການກຳນົດ ແລະ ເລືອກຊະນິດພັນໄມ້ທີ່ຈະປູກ ໃຫ້ອີງໃສ່ເງື່ອນໄຂຂອງດິນຟ້າອາກາດ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງຂອງທ້ອງຖິ່ນນັ້ນ.

**ມາດຕາ 58 (ປັບປຸງ) ການສົ່ງເສີມການຟື້ນຟູປ່າໄມ້**

ລັດ ສົ່ງເສີມ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຳເນີນການຟື້ນຟູປ່າໄມ້ທຳມະຊາດ ທີ່ມີສະພາບຊຸດໂຊມ, ປ່າເຫຼົ່າໃນເຂດທີ່ ລັດ ຈັດສັນໃຫ້ ດ້ວຍການປູກເສີມ ຫຼື ບູລະນະໃຫ້ຟື້ນຟູໂດຍທຳມະຊາດ ເພື່ອໃຫ້ກາຍເປັນປ່າຄືນໃໝ່ ໂດຍຈະໄດ້ຮັບນະໂຍບາຍ ເຊັ່ນ ຍ້ອງຍໍ, ຮັບຮູ້ ສິດ ໃນການປົກປັກຮັກສາ, ສິດໄດ້ຮັບຜົນປະໂຫຍດຈາກການນຳໃຊ້ໄມ້ ແລະ ເຄື່ອງປ່າຂອງດົງ, ຄ້າ ຂາຍ ກາກບອນປ່າໄມ້ ແລະ ການບໍລິການທາງດ້ານລະບົບນິເວດປ່າໄມ້ ຕາມລະບຽບການ.

**ມາດຕາ 59 (ປັບປຸງ) ການປູກໄມ້ ແລະ ເຄື່ອງປ່າຂອງດົງ**

ການປູກໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ໃນ ແລະ ນອກ ເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ສາມາດດຳເນີນໄດ້ໃນເຂດປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູ ໂດຍຕົວມັນເອງຕາມທຳມະຊາດ ຫຼື ທີ່ດິນປ່າປອກໂຫຼ້ນທີ່ລັດຈັດສັນໃຫ້ ແລະ ຕ້ອງໄດ້ຮັບການຄຸ້ມຄອງຕາມລະບຽບການ ເຊັ່ນ ການຄັດເລືອກເນື້ອທີ່, ການ

ບຸກເບີກ, ການຄັດເລືອກພັນໄມ້ ແລະ ເຄື່ອງປ່າຂອງດົງ ລວມທັງການນຳເຂົ້າ, ການເກັບແກ່ນພັນ, ການຜະລິດເບ້ຍໄມ້, ການປູກໄມ້ ແລະ ເຄື່ອງປ່າຂອງດົງ, ການບົວລະບັດຮັກສາ, ການປ້ອງກັນໄຟ ແລະ ພະຍາດໄມ້, ບົ້ງ ແມງ, ການຂຶ້ນທະບຽນປ່າປູກ.

**ມາດຕາ 60 (ປັບປຸງ) ການສົ່ງເສີມການປູກໄມ້ ແລະ ເຄື່ອງປ່າຂອງດົງ**

ລັດ ສົ່ງເສີມ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ປູກໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອປົກປັກຮັກສາສິ່ງແວດລ້ອມ ແລະ ເປັນສິນຄ້າ ດ້ວຍການວາງນະໂຍບາຍ ທີ່ເໝາະສົມຕໍ່ການປູກ, ການລົງທຶນ ພາຍໃນ ແລະ ຕ່າງປະເທດ.

ສຳລັບ ນະໂຍບາຍນັ້ນ ຂຶ້ນກັບເປົ້າໝາຍຂອງການປູກໄມ້ ໃນແຕ່ລະປະເພດປ່າ ດັ່ງນີ້:

1. ການປູກໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອເປັນສິນຄ້າ ສາມາດດຳເນີນ ໃນເຂດປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນໃນເຂດປ່າຜະລິດທີ່ລັດຈັດສັນໃຫ້ ຫຼື ທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ໃຫ້ສິດນຳໃຊ້ທີ່ດິນ. ສຳລັບ ປ່າປູກ ທີ່ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍນັ້ນ ຜູ້ເປັນເຈົ້າຂອງຈະໄດ້ຮັບນະໂຍບາຍ ຍົກເວັ້ນຄ່າທຳນຽມການນຳໃຊ້ທີ່ດິນ, ຍົກເວັ້ນຄ່າບູລະນະປ່າໄມ້ ແລະ ຄ່າຊັບພະຍາກອນປ່າໄມ້, ສາມາດມອບໂອນ, ສືບທອດ ແລະ ເປັນຫຼັກຊັບຄ້ຳປະກັນ, ໄດ້ຮັບການທົດແທນຄ່າເສຍຫາຍ ໃນກໍລະນີທີ່ລັດຕ້ອງການນຳໃຊ້ທີ່ດິນຕອນດັ່ງກ່າວເພື່ອເປົ້າໝາຍອື່ນ, ຊຸກຍູ້ທະນາຄານປ່ອຍສິນເຊື່ອໄລຍະຍາວ ດ້ວຍການກຳນົດດອກເບ້ຍທີ່ເໝາະສົມ ແລະ ນະໂຍບາຍອື່ນ ຕາມກົດໝາຍ;

2. ການປູກໄມ້ ເພື່ອຈຸດປະສົງ ປົກປັກຮັກສາສິ່ງແວດລ້ອມ, ສາທາລະນະປະໂຫຍດໃນຕົວເມືອງ ແລະ ຊຸມຊົນ, ແຫຼ່ງນ້ຳ, ຊີວະນາໆພັນ, ແລະ ສົ່ງເສີມການບໍລິການທາງດ້ານລະບົບນິເວດປ່າໄມ້ ສາມາດດຳເນີນໄດ້ໃນເຂດປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ໃນປ່າປ້ອງກັນ, ປ່າສະຫງວນ, ບໍລິເວນແຄມນ້ຳ ແລະ ສະຖານທີ່ທີ່ລັດຈັດສັນໃຫ້ ແຕ່ບໍ່ອະນຸຍາດໃຫ້ຊຸດຄົ້ນ ແລະ ນຳໃຊ້ ເພື່ອເປົ້າໝາຍທາງດ້ານການຄ້າ, ອະນຸຍາດໃຫ້ນຳໃຊ້ຕາມປະເພນີໄດ້ໃນເຂດຄຸ້ມຄອງການນຳໃຊ້ເທົ່ານັ້ນ.

ສຳລັບນະໂຍບາຍ, ສິດ ແລະ ຜົນປະໂຫຍດຂອງຜູ້ປູກນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ;

3. ເຄື່ອງປ່າຂອງດົງ ທີ່ປູກໃນປ່າປ້ອງກັນ ແລະ ປ່າສະຫງວນ ໃນເຂດຄຸ້ມຄອງການນຳໃຊ້ທີ່ລັດໄດ້ຈັດສັນໃຫ້ນັ້ນ ສາມາດນຳໃຊ້ໄດ້ ແຕ່ບໍ່ໃຫ້ສົ່ງຜົນກະທົບຕໍ່ແຫຼ່ງນ້ຳ, ຊີວະນາໆພັນ ແລະ ສິ່ງແວດລ້ອມ.

## ໝວດທີ 4
## ການນຳໃຊ້ປ່າໄມ້

**ມາດຕາ 61 (ປັບປຸງ) ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ**

ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ໄດ້ຈັດແບ່ງອອກເປັນ ສີ່ປະເພດ ຄື:

1. ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອສາທາລະນະປະໂຫຍດ;

2. ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອຄອບຄົວ;

3. ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ຕາມປະເພນີ;

4. ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອທຸລະກິດ.

ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ທຸກປະເພດ ຕ້ອງບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ປ່າໄມ້ ແລະ ເຄື່ອງປ່າຂອງດົງ, ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ.

**ມາດຕາ 62 (ປັບປຸງ) ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອສາທາລະນະປະໂຫຍດ**

ການນຳໃຊ້ປ່າໄມ້ ເພື່ອສາທາລະນະປະໂຫຍດ ເຊັ່ນ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ, ທ່ອງທ່ຽວທຳມະຊາດ, ເປັນບ່ອນພັກຜ່ອນ, ປ່າສັກສິດ, ປ່າຊ້າ, ຮັກສາສິ່ງແວດລ້ອມ ແລະ ການຄ້າ ຂາຍ ກາກບອນປ່າໄມ້ ສາມາດດຳເນີນໄດ້ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ທີ່ລັດຈັດສັນໃຫ້.

ສຳລັບການນຳໃຊ້ໄມ້ ເພື່ອສາທາລະນະປະໂຫຍດຂອງບ້ານ ເຊັ່ນ ການປຸກສ້າງຫ້ອງການ, ສະໂມສອນ, ໂຮງຮຽນ, ສຸກສາລາ, ວັດ, ຂົວ ໃຫ້ນຳໃຊ້ໄມ້ຈາກປ່າຊົມໃຊ້ຂອງບ້ານ ທີ່ໄດ້ຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຂຸດຄົ້ນ ຈາກພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຕາມແຜນການຂຸດຄົ້ນໄມ້ປະຈຳປີຂອງແຂວງ, ນະຄອນຫຼວງ ທີ່ລັດຖະບານ ໄດ້ຮັບຮອງເອົາແລ້ວ.

ສຳລັບການນຳໃຊ້ເຄື່ອງປ່າຂອງດົງ ທີ່ບໍ່ເປັນສິນຄ້າ ເພື່ອເປັນຢາປົວພະຍາດ, ການປະດັບປະດາ, ການວາງສະແດງ ແລະ ອື່ນໆ ໃຫ້ເກັບກູ້ຕາມເຂດປ່າໄມ້ ທີ່ໄດ້ຈັດສັນໃຫ້. ໃນກໍລະນີທີ່ເປັນການນຳໃຊ້ເພື່ອເປັນສິນຄ້າ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 65 ຂອງກົດໝາຍສະບັບນີ້.

**ມາດຕາ 63 (ປັບປຸງ) ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອຄອບຄົວ**

ລັດ ອະນຸຍາດໃຫ້ປະຊາຊົນພາຍໃນບ້ານ ນຳໃຊ້ໄມ້ຈາກປ່າຊົມໃຊ້ຂອງບ້ານ ເພື່ອປຸກສ້າງ ແລະ ສ້ອມແປງເຮືອນສະເພາະຄອບຄົວທີ່ຈຳເປັນ ເຊັ່ນ ຄອບຄົວທີ່ທຸກຍາກ ບໍ່ທັນມີເຮືອນຢູ່, ເຮືອນເກົ່າແກ່, ເປ່ເພ ຫຼື ຖືກເສຍຫາຍຈາກໄພພິບັດ ໂດຍການອະນຸຍາດຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ຕາມການສະເໜີຂອງອົງການປົກຄອງບ້ານ ຕາມລະບຽບການ.

ໄມ້ທຳມະຊາດ ຢູ່ຕາມທີ່ດິນນາ, ທີ່ດິນສວນ, ທີ່ດິນປຸກສ້າງ ຂອງ ບຸກຄົນ ຫຼື ຄອບຄົວ ທີ່ລັດໄດ້ມອບສິດນຳໃຊ້ ຫຼື ສິດໃຊ້ທີ່ດິນໃຫ້ຢ່າງຖືກຕ້ອງແລ້ວ ແລະ ໄດ້ຂຶ້ນບັນຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້ນັ້ນ ມີສິດນຳໃຊ້ ແລະ ໄດ້ຮັບຜົນປະໂຫຍດ ໂດຍການອະນຸຍາດຂຸດຄົ້ນ ດັ່ງນີ້:

1. ໄມ້ບັນຊີ I ໂດຍການອະນຸຍາດຂຸດຄົ້ນ ຈາກກະຊວງກະສິກຳ ແລະ ປ່າໄມ້ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;

2. ໄມ້ບັນຊີ II ແລະ III ໂດຍການອະນຸຍາດຂຸດຄົ້ນ ຈາກພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

ໄມ້ປູກຂອງຄອບຄົວ ທີ່ມີໃບຢັ້ງຢືນ ຫຼື ໃບທະບຽນປ່າປູກ ສາມາດນຳໃຊ້ໄດ້. ສຳລັບການຕັດ ແລະ ການເຄື່ອນຍ້າຍ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ແລະ 36 ຂອງກົດໝາຍສະບັບນີ້.

ການນຳໃຊ້ເຄື່ອງປ່າຂອງດົງ ທີ່ເປັນອາຫານ, ເກີດຕາມລະດູການ ແລະ ຊົມໃຊ້ໃນຊີວິດປະຈຳວັນ ຂອງປະຊາຊົນ ໃຫ້ເກັບກູ້ໄດ້. ໃນກໍລະນີ ທີ່ເປັນການນຳໃຊ້ເພື່ອເປັນສິນຄ້າ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 65 ຂອງກົດໝາຍສະບັບນີ້.

**ມາດຕາ 64 (ປັບປຸງ) ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ຕາມປະເພນີ**

ການນຳໃຊ້ ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ຕາມປະເພນີ ແມ່ນ ການຊົມໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ເຄີຍປະຕິບັດກັນມາ ໃນຂອບເຂດປ່າໄມ້ບ້ານ ໂດຍສອດຄ່ອງກັບແຜນຈັດສັນ ແລະ ກົດໝາຍ.

**ມາດຕາ 65 (ປັບປຸງ) ການນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອທຸລະກິດ**

ການນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອທຸລະກິດ ແມ່ນ ການນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງປ່າຂອງດົງ ເຂົ້າໃນການທ່ອງທ່ຽວ, ເປັນສະຖານທີ່ພັກຜ່ອນ, ການບໍລິການດ້ານລະບົບນິເວດປ່າໄມ້, ການຄ້າຂາຍ ກາກບອນປ່າໄມ້, ການສະໜອງໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງ ແລະ ເປັນສິນຄ້າ.

ການນຳໃຊ້ໄມ້ ເພື່ອເປັນສິນຄ້າ ໃຫ້ດຳເນີນໃນເຂດປ່າຜະລິດ ທີ່ມີແຜນຈັດສັນ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດປ່າໄມ້ທີ່ ລັດ ຈັດສັນໃຫ້ບ້ານນຳໃຊ້, ເຂດເນື້ອທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລັດໄດ້ມອບສິດນຳໃຊ້ທີ່ດິນໃຫ້ຢ່າງຖືກຕ້ອງ ຕາມກົດໝາຍ.

ການນຳໃຊ້ເຄື່ອງປ່າຂອງດົງ ເພື່ອເປັນສິນຄ້າ ໃຫ້ດຳເນີນໃນເຂດປ່າໄມ້ ທີ່ລັດຈັດສັນໃຫ້, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດເນື້ອທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນ ໃຫ້ຢ່າງຖືກຕ້ອງຕາມກົດໝາຍ.

## ພາກທີ V
## ທີ່ດິນປ່າໄມ້
### ໝວດທີ 1
### ການຄຸ້ມຄອງການນຳໃຊ້ທີ່ດິນປ່າໄມ້

**ມາດຕາ 66 ປະເພດທີ່ດິນປ່າໄມ້**

ທີ່ດິນປ່າໄມ້ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແບ່ງອອກເປັນ ສາມປະເພດ ເພື່ອການຄຸ້ມຄອງ ຄື:

1. ທີ່ດິນປ່າປ້ອງກັນ;
2. ທີ່ດິນປ່າສະຫງວນ;
3. ທີ່ດິນປ່າຜະລິດ.

ໃນ ສາມປະເພດ ທີ່ດິນປ່າໄມ້ນີ້ ກວມເອົາທີ່ດິນປ່າຟື້ນຟູ, ປ່າໂຄກ, ທີ່ດິນປ່າຊຸດໂຊມ ຫຼື ທີ່ດິນປ່າປອກໂຫຼ້ນ ແລະ ທີ່ດິນປ່າຊົມໃຊ້ຂອງບ້ານ.

**ມາດຕາ 67 (ປັບປຸງ) ການຄຸ້ມຄອງທີ່ດິນປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງການນຳໃຊ້ທີ່ດິນປ່າໄມ້, ກຳນົດແຜນການຄຸ້ມຄອງທີ່ດິນປ່າ ໄມ້ແຕ່ລະປະເພດ ໂດຍປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ຄົ້ນຄວ້າວາງລະບຽບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລ້ວນຳສະເໜີ ຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 68 (ໃໝ່) ການສຳຫຼວດທີ່ດິນປ່າໄມ້**

ການສຳຫຼວດທີ່ດິນປ່າໄມ້ ມີຈຸດປະສົງ ກຳນົດເນື້ອທີ່ດິນປ່າໄມ້ປະເພດຕ່າງໆ ທັງໃນ ແລະ ນອກເຂດ ປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ, ກຳນົດເຂດປູກໄມ້ ແລະ ຟື້ນຟູປ່າ ແນໃສ່ປົກປັກຮັກສາສິ່ງແວດລ້ອມ, ຮັກສາລະບົບນິເວດປ່າໄມ້ ໃຫ້ມີຄວາມຍືນຍົງ ແລະ ເພີ່ມຄວາມປົກຫຸ້ມປ່າໄມ້ ໃຫ້ໄດ້ ເຈັດສິບສ່ວນຮ້ອຍ ຂອງເນື້ອທີ່ທົ່ວປະເທດ, ກຳນົດເຂດອະນຸຍາດ ໃຫ້ເຊົ່າ ຫຼື ສຳປະທານ ເພື່ອປູກໄມ້ ແລະ ເຄື່ອງປ່າຂອງດົງ.

ການສຳຫຼວດທີ່ດິນປ່າໄມ້ ໃຫ້ປະຕິບັດ ດັ່ງນີ້:

1. ເກັບກຳຂໍ້ມູນ, ຕີລາຄາສະພາບທີ່ດິນປ່າໄມ້ ແລະ ການປ່ຽນແປງ ປະເພດການນຳໃຊ້ທີ່ດິນປ່າໄມ້;
2. ເກັບກຳຂໍ້ມູນ ການນຳໃຊ້ທີ່ດິນປ່າໄມ້;
3. ກຳນົດເຂດ ແລະ ວາງແຜນການນຳໃຊ້ທີ່ດິນປ່າໄມ້;
4. ສ້າງແຜນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້;
5. ຂຶ້ນທະບຽນ ທີ່ດິນປ່າໄມ້;
6. ປະຕິບັດວຽກງານອື່ນ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການສຳຫຼວດທີ່ດິນປ່າໄມ້ ເພື່ອວາງແຜນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ແບບຍືນຍົງ.

## ໝວດທີ 2
## ການປົກປັກຮັກສາທີ່ດິນປ່າໄມ້

**ມາດຕາ 69 ການປົກປັກຮັກສາທີ່ດິນປ່າໄມ້**

ການປົກປັກຮັກສາທີ່ດິນປ່າໄມ້ ແມ່ນ ການກຳນົດຂອບເຂດພື້ນທີ່ດິນປ່າໄມ້ແຕ່ລະປະເພດ, ວາງລະບຽບການ ແລະ ມາດຕະການປົກປັກຮັກສາ ແລະ ພັດທະນາທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 70 (ປັບປຸງ) ການປົກປັກຮັກສາທີ່ດິນປ່າປ້ອງກັນ**

ການປົກປັກຮັກສາທີ່ດິນປ່າປ້ອງກັນ ແມ່ນ ການກຳນົດທີ່ດິນປ່າປ້ອງກັນ ເປັນເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງການນຳໃຊ້ ທັງແມ່ນການວາງແຜນ ແລະ ກຳນົດມາດຕະການຄຸ້ມຄອງ ເພື່ອສະກັດກັ້ນ

ທຸກເຫດການທີ່ຈະເກີດຂຶ້ນ ຫຼື ພວມເກີດຂຶ້ນ ຊຶ່ງເປັນສາເຫດເຮັດໃຫ້ທີ່ດິນປ່າປ້ອງກັນ ມີການເຊາະເຈື່ອນ, ດິນເຊື່ອມຄຸນນະພາບ, ການປ່ຽນແປງລະບົບນິເວດຂອງດິນບໍລິເວນນ້ຳ, ແຫຼ່ງນ້ຳບົກແຫ້ງ, ການກະທົບເຂດຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ສິ່ງແວດລ້ອມ.

ສຳລັບການປົກປັກຮັກສາ ເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງການນຳໃຊ້ ໃນເຂດປ່າປ້ອງກັນນັ້ນ ແມ່ນຄືກັນກັບການປົກປັກຮັກສາເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງການນຳໃຊ້ ທີ່ຢູ່ໃນເຂດປ່າສະຫງວນ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 71 ວັກທີສອງ ແລະ ວັກທີສາມ ຂອງກົດໝາຍສະບັບນີ້.

**ມາດຕາ 71 (ປັບປຸງ) ການປົກປັກຮັກສາທີ່ດິນປ່າສະຫງວນ**

ການປົກປັກຮັກສາທີ່ດິນປ່າສະຫງວນ ແມ່ນ ການກຳນົດທີ່ດິນປ່າສະຫງວນ ເປັນເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງການນຳໃຊ້ ແລະ ເຂດກັນຊົນ ທັງແມ່ນການວາງແຜນ ແລະ ກຳນົດມາດຕະການຄຸ້ມຄອງ ເພື່ອສະກັດກັ້ນທຸກກິດຈະການ ແລະ ພຶດຕິກຳ ທີ່ເປັນການ ບຸກລຸກ, ທຳລາຍ ຊຶ່ງຈະເປັນຜົນກະທົບອັນບໍ່ດີຕໍ່ລະບົບນິເວດປ່າໄມ້ ແລະ ກໍ່ຄວາມເສຍຫາຍໃຫ້ແກ່ ພັນພືດ, ພັນສັດ, ຊີວະນາໆພັນ, ມໍຣະດົກທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດ ແລະ ສິ່ງຕ່າງໆ ທີ່ມີຄຸນຄ່າ ຢູ່ໃນຂອບເຂດທີ່ດິນປ່າສະຫງວນ.

ເຂດຫວງຫ້າມເດັດຂາດ ແມ່ນ ເຂດທີ່ດິນປ່າໄມ້ ທີ່ມີຄວາມອຸດົມສົມບູນທາງດ້ານຊີວະນາໆພັນ, ເປັນບ່ອນອາໄສ ແລະ ຂະຫຍາຍພັນຕົ້ນຕໍຂອງສັດນ້ຳ ແລະ ສັດປ່າຊະນິດຕ່າງໆ, ເຂດຕົ້ນກຳເນີດຂອງສາຍນ້ຳ, ປ່າລຽບແຄມນ້ຳ ແລະ ເຂດອື່ນໆ ທີ່ມີຄວາມສຳຄັນຕໍ່ການປົກປັກຮັກສາສິ່ງແວດລ້ອມ ຊຶ່ງເປັນເຂດທີ່ບໍ່ອະນຸຍາດໃຫ້ດຳເນີນທຸກກິດຈະການ ຍົກເວັ້ນການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ແລະ ທາງຍ່າງສຳລັບການທ່ອງທ່ຽວທຳມະຊາດ.

ເຂດຄຸ້ມຄອງການນຳໃຊ້ ແມ່ນ ເຂດທີ່ດິນປ່າໄມ້ ຊຶ່ງລັດຈັດສັນໃຫ້ບ້ານທີ່ຕັ້ງຢູ່ໃນ ແລະ ຕິດກັບເຂດປ່າສະຫງວນ ເປັນຜູ້ຄຸ້ມຄອງ, ປົກປັກຮັກສາ ປ່າໄມ້ ແລະ ຊີວະນາໆພັນແບບຍືນຍົງ ໂດຍໄດ້ຮັບຜົນປະໂຫຍດຕອບແທນທີ່ເໝາະສົມ, ເປັນເຂດທີ່ສາມາດດຳເນີນທຸລະກິດທ່ອງທ່ຽວທຳມະຊາດ, ເກັບກູ້ເຄື່ອງປ່າຂອງດົງຈາກປ່າທຳມະຊາດ, ຜະລິດກະສິກຳ, ປູກໄມ້ ແລະ ເຄື່ອງປ່າຂອງດົງ ຕາມທີ່ລັດຈັດສັນໃຫ້ ເພື່ອສ້າງເສດຖະກິດຄອບຄົວເປັນສິນຄ້າ, ແຕ່ບໍ່ອະນຸຍາດ ໃຫ້ຕັດໄມ້ທຳມະຊາດ ເພື່ອດຳເນີນທຸລະກິດ.

ເຂດກັນຊົນ ແມ່ນ ເຂດທີ່ດິນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ ຊຶ່ງເປັນສ່ວນໜຶ່ງຢູ່ໃນ ຫຼື ອ້ອມຮອບປ່າສະຫງວນທີ່ລັດຈັດສັນໃຫ້ປະຊາຊົນນຳໃຊ້ ເພື່ອປ້ອງກັນການບຸກລຸກທຳລາຍປ່າໄມ້ຢູ່ໃນ ແລະ ບໍລິເວນອ້ອມຮອບປ່າສະຫງວນ ແນໃສ່ຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ລະບົບນິເວດປ່າໄມ້ ໃນເຂດປ່າສະຫງວນ.

**ມາດຕາ 72 ການປົກປັກຮັກສາທີ່ດິນປ່າຜະລິດ**

ການປົກປັກຮັກສາທີ່ດິນປ່າຜະລິດ ແມ່ນ ການວາງແຜນເຂດຄຸ້ມຄອງການນຳໃຊ້ແບບຍືນຍົງຕາມແຜນຈັດສັນປ່າຜະລິດ ທັງແມ່ນການກຳນົດມາດຕະການເພື່ອ ຄຸ້ມຄອງ, ປົກປັກຮັກສາ ແລະ ສະກັດກັ້ນທຸກກິດຈະການ ແລະ ພຶດຕິກຳທີ່ເປັນການ ບຸກລຸກ, ທຳລາຍ ຫຼື ຫັນປ່ຽນ ທີ່ດິນປ່າຜະລິດ ໄປເປັນທີ່ດິນປະເພດອື່ນ ຊຶ່ງເປັນຜົນກະທົບອັນບໍ່ດີຕໍ່ລະບົບນິເວດປ່າໄມ້, ສິ່ງແວດລ້ອມ ແລະ ກໍ່ຄວາມເສຍຫາຍ ໃຫ້ແກ່ຊັບພະຍາກອນທຳມະຊາດ.

## ໝວດທີ 3
## ການພັດທະນາທີ່ດິນປ່າໄມ້

**ມາດຕາ 73 ການພັດທະນາທີ່ດິນປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ພັດທະນາທີ່ດິນປ່າໄມ້ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນໃນສັງຄົມ ລວມທັງປະຊາຊົນ ເພື່ອປະກອບສ່ວນເຂົ້າໃນການພັດທະນາທີ່ດິນປ່າໄມ້ ດ້ວຍການວາງນະໂຍບາຍ, ວິທີການ ແລະ ມາດຕະການ ກ່ຽວກັບການ ຮັກສາ, ປັບປຸງ ແລະ ຟື້ນຟູທີ່ດິນ ໃຫ້ຢູ່ໃນສະພາບດີຂຶ້ນ, ມີມູນຄ່າເພີ່ມ ແລະ ສົມດຸນກັບລະບົບນິເວດປ່າໄມ້.

**ມາດຕາ 74 (ປັບປຸງ) ການພັດທະນາທີ່ດິນປ່າປ້ອງກັນ**

ການພັດທະນາທີ່ດິນປ່າປ້ອງກັນ ແມ່ນ ທຸກການເຄື່ອນໄຫວ ເພື່ອປັບປຸງຄຸນນະພາບດິນ ແລະ ຟື້ນຟູທີ່ດິນ ດ້ວຍການຟື້ນຟູ ເຂດປ່າເຫຼົ່າ, ປ່າຊຸດໂຊມ, ປູກໄມ້ໃສ່ເຂດທີ່ດິນປ່າປອກໂຫຼ້ນ ຫຼື ພືດປົກຄຸມດິນຊະນິດຕ່າງໆ ແນໃສ່ເຮັດໃຫ້ສະພາບປ່າໄມ້ ແລະ ທີ່ດິນປ່າໄມ້ ອຸດົມສົມບູນຂຶ້ນ ແລະ ສົມດຸນກັບລະບົບນິເວດຂອງປ່າໄມ້.

**ມາດຕາ 75 (ປັບປຸງ) ການພັດທະນາທີ່ດິນປ່າສະຫງວນ**

ການພັດທະນາທີ່ດິນປ່າສະຫງວນ ແມ່ນ ທຸກການເຄື່ອນໄຫວ ໃນເນື້ອທີ່ດິນທຸກຕອນ ທີ່ຢູ່ໃນຂອບເຂດປ່າສະຫງວນ ເພື່ອປັບປຸງຄຸນນະພາບດິນ, ຟື້ນຟູ, ບູລະນະ, ປູກປ່າ ແລະ ປູກພືດປົກຄຸມດິນຊະນິດຕ່າງໆ ແນໃສ່ອະນຸລັກລະບົບນິເວດຂອງ ປ່າໄມ້, ພັນພືດ, ພັນສັດ, ຊີວະນາໆພັນ, ມໍຣະດົກທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດ ແລະ ສິ່ງຕ່າງໆທີ່ມີຄຸນຄ່າ ຢູ່ໃນຂອບເຂດທີ່ດິນປ່າສະຫງວນ.

**ມາດຕາ 76 (ປັບປຸງ) ການພັດທະນາທີ່ດິນປ່າຜະລິດ**

ການພັດທະນາທີ່ດິນປ່າຜະລິດ ແມ່ນ ທຸກການເຄື່ອນໄຫວ ເພື່ອປັບປຸງຄຸນນະພາບດິນ, ຟື້ນຟູ, ບູລະນະທີ່ດິນ ໃນເຂດປ່າຜະລິດໃຫ້ອຸດົມສົມບູນ ແນໃສ່ປູກໄມ້ຊະນິດຕ່າງໆ ທີ່ເໝາະສົມກັບເງື່ອນໄຂດິນຟ້າອາກາດ ເພື່ອເພີ່ມຄຸນນະພາບ ແລະ ປະລິມານໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ສາມາດຕອບສະໜອງແກ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ.

## ໝວດທີ 4
## ການນຳໃຊ້ທີ່ດິນປ່າໄມ້

**ມາດຕາ 77 ປະເພດການນຳໃຊ້ທີ່ດິນປ່າໄມ້**

ການນຳໃຊ້ທີ່ດິນປ່າໄມ້ໃນ ສປປ ລາວ ໄດ້ຈັດແບ່ງອອກເປັນ ສາມປະເພດ ຄື:

1.ການນຳໃຊ້ເພື່ອສາທາລະນະປະໂຫຍດ;

2.ການນຳໃຊ້ເພື່ອຄອບຄົວ;

3.ການນຳໃຊ້ເພື່ອທຸລະກິດ.

ການນຳໃຊ້ທີ່ດິນປ່າໄມ້ທຸກປະເພດ ຕ້ອງບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ປ່າໄມ້, ຄຸນນະພາບຂອງດິນ, ສິ່ງແວດລ້ອມທຳມະຊາດ ຫຼື ສັງຄົມ.

**ມາດຕາ 78 ການນຳໃຊ້ທີ່ດິນປ່າໄມ້ເພື່ອສາທາລະນະປະໂຫຍດ**

ການນຳໃຊ້ທີ່ດິນປ່າໄມ້ ເພື່ອສາທາລະນະປະໂຫຍດ ແມ່ນ ການນຳໃຊ້ເຂົ້າໃນການປູກໄມ້ ເພື່ອຮັກສາສິ່ງແວດລ້ອມ ແລະ ຄວາມສວຍງາມ, ເປັນແຫຼ່ງທ່ອງທ່ຽວ ແລະ ສະຖານທີ່ພັກຜ່ອນ ໂດຍໄດ້ຮັບອະນຸຍາດຈາກອົງການທີ່ມີສິດ ແລະ ໜ້າທີ່ ທີ່ກ່ຽວຂ້ອງ.

**ມາດຕາ 79 (ປັບປຸງ) ການນຳໃຊ້ທີ່ດິນປ່າໄມ້ເພື່ອຄອບຄົວ**

ການນຳໃຊ້ທີ່ດິນປ່າໄມ້ເພື່ອຄອບຄົວ ແມ່ນ ການນຳໃຊ້ທີ່ດິນປ່າໄມ້ຊຸດໂຊມ ຫຼື ທີ່ດິນປ່າປອກໂຫຼ້ນ ຕາມຄວາມສາມາດທາງດ້ານແຮງງານ ແລະ ທຶນຮອນຂອງຄອບຄົວ ເພື່ອຟື້ນຟູປ່າ, ປູກໄມ້ ຫຼື ເຄື່ອງປ່າຂອງດົງໃນເຂດທີ່ລັດຈັດສັນໃຫ້.

**ມາດຕາ 80 (ປັບປຸງ) ການນຳໃຊ້ທີ່ດິນປ່າໄມ້ເພື່ອທຸລະກິດ**

ການນຳໃຊ້ທີ່ດິນປ່າໄມ້ເພື່ອທຸລະກິດ ດຳເນີນໄດ້ໃນເຂດທີ່ດິນປ່າໄມ້ ທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງດຳເນີນໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 81 (ປັບປຸງ) ການຫັນປ່ຽນ ແລະ ລັກສະນະການຫັນປ່ຽນ ທີ່ດິນປ່າໄມ້**

ການຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ຈະດຳເນີນໄດ້ກໍຕໍ່ເມື່ອເປັນການຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ກຳນົດຢູ່ໃນແຜນຈັດສັນທີ່ດິນແຫ່ງຊາດ ແລະ ທ້ອງຖິ່ນ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ໂດຍບໍ່ມີຜົນກະທົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ແລະ ຕ້ອງປະຕິບັດຕາມຫຼັກການ ເຊົ່າ ຫຼື ສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 87 ຂອງກົດໝາຍສະບັບນີ້.

ການຫັນປ່ຽນທີ່ດິນປ່າໄມ້ ມີ ລັກສະນະຖາວອນ ແລະ ລັກສະນະຊົ່ວຄາວ.

ລັກສະນະຖາວອນ ແມ່ນ ການຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນ ເພື່ອຮັບໃຊ້ຈຸດປະສົງໃດໜຶ່ງ ທີ່ມີລັກສະນະຍາວນານ ເປັນຕົ້ນ ການສ້າງເຂື່ອນໄຟຟ້າ, ອ່າງເກັບນ້ຳ, ຕີນເສົາສາຍສົ່ງໄຟຟ້າ, ຕີນເສົາເຄື່ອງສົ່ງສັນຍານໂທລະສັບ ຫຼື ການຈັດສັນພູມລຳເນົາ. ສຳລັບທີ່ດິນປ່າໄມ້ ຢູ່ຕາມແລວສາຍສົ່ງໄຟຟ້າ ແລະ ເສັ້ນທາງ ບໍ່ຈຳເປັນຕ້ອງຫັນປ່ຽນ.

ລັກສະນະຊົ່ວຄາວ ແມ່ນ ການຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນເພື່ອດຳເນີນກິດຈະການໃດໜຶ່ງ ພາຍຫຼັງທີ່ກິດຈະການດັ່ງກ່າວໄດ້ສິ້ນສຸດແລ້ວ ທີ່ດິນທີ່ໄດ້ຫັນປ່ຽນນັ້ນ ກໍຕ້ອງກັບຄືນມາເປັນທີ່ດິນປ່າໄມ້ເໝືອນເດີມ ເປັນຕົ້ນ ເຂດຂຸດຄົ້ນບໍ່ແຮ່, ເສັ້ນທາງຜ່ານເຂົ້າຫາເຂດກໍ່ສ້າງ, ສະຖານທີ່ປຸກສ້າງຊົ່ວຄາວ.

ສຳລັບໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ມີຢູ່ໃນເຂດດັ່ງກ່າວ ຊຶ່ງໄດ້ຕັດ ຫຼື ຂຸດຄົ້ນແລ້ວນັ້ນ ເປັນກຳມະສິດຂອງລັດ.

**ມາດຕາ 82 (ປັບປຸງ) ພັນທະໃນການຫັນປ່ຽນທີ່ດິນປ່າໄມ້**

ຜູ້ໄດ້ຮັບອະນຸຍາດ ໃຫ້ຫັນປ່ຽນທີ່ດິນປ່າໄມ້ ລັກສະນະຖາວອນ ບໍ່ວ່າໃນກໍລະນີໃດ ຕ້ອງໄດ້ຮັບຜິດຊອບຈ່າຍຄ່າບໍລິການທາງດ້ານວິຊາການ, ຄ່າທໍານຽມການຫັນປ່ຽນທີ່ດິນປ່າໄມ້, ຄ່າບໍລິການດ້ານລະບົບນິເວດປ່າໄມ້, ຄ່າທົດແທນຊີວະນາໆພັນ ແລະ ຄ່າປູກໄມ້ທົດແທນ. ສໍາລັບການຫັນປ່ຽນທີ່ດິນປ່າໄມ້ເປັນອ່າງເກັບນໍ້າ ຈະໄດ້ຮັບການຍົກເວັ້ນຄ່າທໍານຽມໃນການຫັນປ່ຽນທີ່ດິນປ່າໄມ້.

ຜູ້ໄດ້ຮັບອະນຸຍາດ ໃຫ້ຫັນປ່ຽນທີ່ດິນປ່າໄມ້ ລັກສະນະຊົ່ວຄາວ ຈະໄດ້ຮັບການຍົກເວັ້ນຄ່າທໍານຽມການຫັນປ່ຽນທີ່ດິນ ແຕ່ຕ້ອງໄດ້ຮັບຜິດຊອບ ຈ່າຍຄ່າບໍລິການທາງດ້ານວິຊາການ, ຄ່າບໍລິການດ້ານລະບົບນິເວດປ່າໄມ້, ຄ່າທົດແທນຊີວະນາໆພັນ, ຄ່າປູກໄມ້ທົດແທນ ແລະ ຄ່າປັບໜ້າດິນຄືນ. ສໍາລັບການຫັນປ່ຽນທີ່ດິນປ່າໄມ້ ໃນເຂດຂຸດຄົ້ນບໍ່ແຮ່ແບບເປີດໜ້າດິນ ຕ້ອງຈ່າຍຄ່າທໍານຽມຫັນປ່ຽນທີ່ດິນປ່າໄມ້.

ໃນກໍລະນີທີ່ລັດຕ້ອງການຫັນປ່ຽນທີ່ດິນປ່າໄມ້ ທີ່ລັດໄດ້ມອບໃຫ້ ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ນໍາໃຊ້ຕາມເປົ້າໝາຍທີ່ໄດ້ກໍານົດໃຫ້ ເພື່ອນໍາໄປຮັບໃຊ້ເປົ້າໝາຍອື່ນ ທີ່ມີຜົນປະໂຫຍດສູງສຸດແກ່ຊາດນັ້ນ ລັດຈະຊົດເຊີຍຕາມກົດໝາຍ.

**ມາດຕາ 83 (ໃໝ່) ອົງການລັດ ທີ່ມີສິດຕົກລົງກ່ຽວກັບການຫັນປ່ຽນທີ່ດິນປ່າໄມ້**

ອົງການລັດ ທີ່ມີສິດຕົກລົງຫັນປ່ຽນທີ່ດິນປ່າໄມ້ ມີ ດັ່ງນີ້:

1. ສະພາແຫ່ງຊາດ;
2. ລັດຖະບານ;
3. ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 84 (ໃໝ່) ການຕົກລົງຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ຕົກລົງຫັນປ່ຽນປະເພດທີ່ດິນ ປ່າປ້ອງກັນແຫ່ງຊາດ, ປ່າສະຫງວນແຫ່ງຊາດ, ປ່າຜະລິດ ແລະ ປ່າປ້ອງກັນລະດັບແຂວງ, ປ່າສະຫງວນລະດັບແຂວງ ເປັນທີ່ດິນປະເພດອື່ນ ຕາມການສະເໜີຂອງລັດຖະບານ.

**ມາດຕາ 85 (ໃໝ່) ການຕົກລົງຂອງລັດຖະບານ**

ລັດຖະບານ ຕົກລົງຫັນປ່ຽນປະເພດທີ່ດິນປ່າໄມ້ ເປັນ ທີ່ດິນປະເພດອື່ນ ຕາມການສະເໜີຂອງກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໂດຍການເຫັນດີເປັນເອກະພາບກັບກະຊວງກະສິກໍາ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດັ່ງນີ້:

1. ການຫັນປ່ຽນທີ່ດິນປ່າປ້ອງກັນ, ປ່າສະຫງວນ ລະດັບເມືອງ;

2. ການຫັນປ່ຽນທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນດ້ວຍຕົວມັນເອງໄດ້ ເນື້ອທີ່ແຕ່ ໜຶ່ງຮ້ອຍເຮັກຕາ ຫາ ໜຶ່ງພັນເຮັກຕາ ຕໍ່ ໜຶ່ງກິດຈະການເທົ່ານັ້ນ;

3. ການຫັນປ່ຽນທີ່ດິນປ່າປອກໂຫຼ້ນ ທີ່ບໍ່ສາມາດຟື້ນຟູຄືນດ້ວຍຕົວມັນເອງ ເນື້ອທີ່ແຕ່ ສອງຮ້ອຍເຮັກຕາ ຫາ ສິບພັນເຮັກຕາ ຕໍ່ ໜຶ່ງກິດຈະການເທົ່ານັ້ນ.

ຖ້າການຫັນປ່ຽນທີ່ດິນປະເພດດັ່ງກ່າວ ຫາກມີເນື້ອທີ່ເກີນກວ່າຂອບເຂດ ທີ່ໄດ້ກໍານົດໄວ້ໃນຂໍ້ 2 ແລະ 3 ຂອງມາດຕານີ້ ຕ້ອງໄດ້ຜ່ານການຮັບຮອງຈາກສະພາແຫ່ງຊາດ ໂດຍການສະເໜີຂອງລັດຖະບານ.

**ມາດຕາ 86 (ໃໝ່) ການຕົກລົງຂອງສະພາປະຊາຊົນຂັ້ນແຂວງ**

ສະພາປະຊາຊົນຂັ້ນແຂວງ ຕົກລົງຫັນປ່ຽນປະເພດທີ່ດິນປ່າໄມ້ ເປັນ ທີ່ດິນປະເພດອື່ນ ຕາມການສະເໜີຂອງອົງການປົກຄອງຂັ້ນແຂວງ ດັ່ງນີ້:

1. ການຫັນປ່ຽນທີ່ດິນ ປ່າປ້ອງກັນ, ປ່າສະຫງວນ ຂັ້ນບ້ານ;

2. ການຫັນປ່ຽນທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູຄືນດ້ວຍຕົວມັນເອງໄດ້ ເນື້ອທີ່ຕ່ຳກວ່າໜຶ່ງຮ້ອຍເຮັກຕາ ຕໍ່ ໜຶ່ງກິດຈະການເທົ່ານັ້ນ;

3. ການຫັນປ່ຽນທີ່ດິນປ່າປອກໂຫຼ້ນ ເນື້ອທີ່ຕ່ຳກວ່າ ສອງຮ້ອຍເຮັກຕາ ຕໍ່ ໜຶ່ງກິດຈະການເທົ່ານັ້ນ.

## ໝວດທີ 5
## ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້

**ມາດຕາ 87 (ປັບປຸງ) ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້**

ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ໃຫ້ດຳເນີນໃນເຂດທີ່ໄດ້ຈັດສັນໄວ້ເທົ່ານັ້ນ ແລະ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສຶກສາຂໍ້ມູນທາງດ້ານເສດຖະກິດ-ສັງຄົມ, ຄວາມເໝາະສົມທາງທຳມະຊາດ ເຊັ່ນ ດິນ, ອາກາດ, ຄວາມສູງຈາກລະດັບນ້ຳທະເລ, ປະລິມານນ້ຳຝົນ, ແຫຼ່ງນ້ຳ, ສິດ ນຳໃຊ້ ຫຼື ໃຊ້ທີ່ດິນ, ແຮງງານທ້ອງຖິ່ນ, ສຳຫຼວດສະພາບປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ປຶກສາຫາລື ເປັນເອກະພາບກັບປະຊາຊົນທ້ອງຖິ່ນ ແລະ ບັນຫາອື່ນທີ່ຈຳເປັນ;

2. ສ້າງບົດວິພາກເສດຖະກິດ-ເຕັກນິກ ໂດຍຜ່ານການຮັບຮອງຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

3. ສ້າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງມາດຕະການແກ້ໄຂຢ່າງເໝາະສົມ ໂດຍການຢັ້ງຢືນຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ;

4. ສ້າງແຜນດຳເນີນງານ ໂດຍເລັ່ງໃສ່ການປົກປັກຮັກສາແຫຼ່ງນ້ຳ ແລະ ສິ່ງແວດລ້ອມ, ການບຸກເບີກເນື້ອທີ່, ການພັດທະນາບ້ານ, ການສົ່ງເສີມປະຊາຊົນມີສ່ວນຮ່ວມໃນການດຳເນີນ ການຜະລິດ, ການນຳໃຊ້ເຕັກໂນໂລຊີ ແລະ ອື່ນໆ ຕະຫຼອດເຖິງການແບ່ງປັນຜົນປະໂຫຍດ.

ຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ຕ້ອງໄດ້ຈ່າຍຄ່າເຊົ່າ ຫຼື ຄ່າສຳປະທານ ແລະ ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ເຊັ່ນ ຄ່າການບໍລິການທາງດ້ານວິຊາການ, ຄ່າປັບໜ້າດິນ, ຄ່າປູກຕົ້ນໄມ້, ຄ່າຟື້ນຟູປ່າທົດແທນຄືນ ແລະ ຄ່າທຳນຽມອື່ນ ຕາມກົດໝາຍ.

ໄມ້ ແລະ ຊັບພະຍາກອນປ່າໄມ້ ທີ່ມີຢູ່ໃນເຂດໃຫ້ ເຊົ່າ ຫຼື ສຳປະທານ ແມ່ນ ເປັນກຳມະສິດຂອງລັດ ຍົກເວັ້ນໄມ້ປູກ ທີ່ເປັນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ.

**ມາດຕາ 88 (ໃໝ່) ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອການທ່ອງທ່ຽວທຳມະຊາດ**

ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອກິດຈະການທ່ອງທ່ຽວທຳມະຊາດ ໃນເຂດປ່າປ້ອງກັນ, ປ່າສະຫງວນ ແຫ່ງຊາດ ແລະ ປ່າຜະລິດ ສາມາດດຳເນີນໄດ້ ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບການອະນຸຍາດຈາກລັດຖະບານ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງຂັ້ນແຂວງ.

ການເຊົ່າ ຫຼື ສຳປະທານ ທີ່ດິນປ່າໄມ້ ເພື່ອກິດຈະການທ່ອງທ່ຽວທຳມະຊາດ ໃນເຂດປ່າປ້ອງກັນ, ປ່າສະຫງວນ ຂັ້ນແຂວງ ແລະ ຂັ້ນເມືອງ ສາມາດດຳເນີນໄດ້ ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບການອະນຸຍາດ ຈາກອົງການປົກຄອງຂັ້ນແຂວງ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບຂະແໜງການທີ່ກ່ຽວຂ້ອງຂອງ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງຂັ້ນເມືອງ.

ຜູ້ເຊົ່າ ຫຼື ສຳປະທານ ຕ້ອງໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການດ້ານລະບົບນິເວດປ່າໄມ້ ເຂົ້າກອງທຶນປົກປັກຮັກສາປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 89 (ໃໝ່) ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອການຟື້ນຟູປ່າ, ການປູກໄມ້ ແລະ ເຄື່ອງປ່າຂອງດົງ**

ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອການຟື້ນຟູປ່າ, ການປູກໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອຈຸດປະສົງທາງດ້ານການຄ້າ ໃຫ້ດຳເນີນໃນເຂດທີ່ດິນປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ທີ່ຢູ່ໃນເຂດປ່າຜະລິດ ຕາມແຜນຈັດສັນ ແລະ ປະຕິບັດຕາມຂອບເຂດສິດອະນຸຍາດ ດັ່ງນີ້:

1. ລັດຖະບານ ອະນຸຍາດເນື້ອທີ່ ຫຼາຍກວ່າ ສິບພັນເຮັກຕາ ຂຶ້ນໄປ ຕໍ່ ໜຶ່ງໂຄງການລົງທຶນ ໃນກຳນົດໄລຍະເວລາບໍ່ເກີນ ຫ້າສິບປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ສູງສຸດບໍ່ໃຫ້ເກີນ ສາມສິບປີ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

2. ກະຊວງກະສິກຳ ແລະ ປ່າໄມ້ ອະນຸຍາດເນື້ອທີ່ ແຕ່ ໜຶ່ງຮ້ອຍ ຫາ ສິບພັນ ເຮັກຕາ ຕໍ່ ໜຶ່ງໂຄງການລົງທຶນ ໃນກຳນົດໄລຍະເວລາບໍ່ເກີນ ຫ້າສິບປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີສູງສຸດບໍ່ໃຫ້ເກີນ ສາມສິບປີ ຕາມການສະເໜີຂອງກົມປ່າໄມ້ ໂດຍການເຫັນດີເປັນເອກະພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

3. ອົງການປົກຄອງຂັ້ນແຂວງ ອະນຸຍາດເນື້ອທີ່ຕ່ຳກວ່າ ໜຶ່ງຮ້ອຍເຮັກຕາ ລົງມາ ຕໍ່ ໜຶ່ງໂຄງການລົງທຶນ ໃນກຳນົດເວລາບໍ່ເກີນ ຫ້າສິບປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ສູງສຸດບໍ່ໃຫ້ເກີນ ສາມສິບປີ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ບົນພື້ນຖານຄວາມເປັນເອກະພາບກັບພະແນກການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງພາຍໃນ ແຂວງ, ນະຄອນຫຼວງ.

**ມາດຕາ 90 (ໃໝ່) ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອດຳເນີນກິດຈະການລະບົບນິເວດປ່າໄມ້**

ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອດຳເນີນກິດຈະການລະບົບນິເວດປ່າໄມ້ ໃຫ້ດຳເນີນໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ການເຊົ່າ ຫຼື ສຳປະທານ ທີ່ດິນປ່າໄມ້ ເພື່ອດຳເນີນກິດຈະການລະບົບນິເວດປ່າໄມ້ ໃນເຂດປ່າປ້ອງກັນ, ປ່າສະຫງວນ ແຫ່ງຊາດ ແລະ ປ່າຜະລິດ ສາມາດດຳເນີນໄດ້ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບການອະນຸຍາດຈາກກະຊວງກະສິກຳ ແລະ ປ່າໄມ້ ໂດຍການເຫັນດີເປັນເອກະພາບກັບກະຊວງ ແລະ ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ;

2. ການເຊົ່າ ຫຼື ສຳປະທານ ທີ່ດິນປ່າໄມ້ ເພື່ອດຳເນີນກິດຈະການລະບົບນິເວດປ່າໄມ້ ໃນເຂດປ່າປ້ອງກັນ, ປ່າສະຫງວນ ຂັ້ນແຂວງ ແລະ ຂັ້ນເມືອງ ສາມາດດຳເນີນໄດ້ໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ ແລະ ຕ້ອງໄດ້ຮັບການອະນຸຍາດຈາກອົງການປົກຄອງຂັ້ນແຂວງ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ໂດຍການເຫັນດີເປັນເອກະພາບກັບຂະແໜງການອື່ນທີ່ກ່ຽວຂ້ອງຂອງ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງຂັ້ນເມືອງ.

ຜູ້ໄດ້ຮັບອະນຸຍາດໃຫ້ ເຊົ່າ ຫຼື ສຳປະທານ ຕ້ອງໄດ້ປະຕິບັດພັນທະ ແລະ ແບ່ງປັນຜົນປະໂຫຍດຕາມກົດໝາຍ.

**ມາດຕາ 91 (ໃໝ່) ການສຳປະທານທີ່ດິນປ່າໄມ້ ເພື່ອດຳເນີນກິດຈະການແຮ່ທາດ**

ການສຳປະທານທີ່ດິນປ່າໄມ້ ເພື່ອດຳເນີນໂຄງການບໍ່ແຮ່ຂະໜາດໃຫຍ່ ແມ່ນ ສະພາແຫ່ງຊາດ ເປັນຜູ້ຮັບຮອງຕາມການສະເໜີຂອງລັດຖະບານ. ສຳລັບການສຳປະທານ ເພື່ອດຳເນີນໂຄງການບໍ່ແຮ່ທົ່ວໄປ ແມ່ນລັດຖະບານ ເປັນຜູ້ຕົກລົງ, ສຳລັບລະບຽບການ ແລະ ກຳນົດໄລຍະເວລາສຳປະທານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍແຮ່ທາດ.

ຜູ້ໄດ້ຮັບອະນຸຍາດສຳປະທານ ຕ້ອງໄດ້ຮັບຜິດຊອບຈ່າຍຄ່າສິ້ນເປືອງ ແລະ ພັນທະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 82 ວັກທີສອງ ຂອງກົດໝາຍສະບັບນີ້.

## ພາກທີ VI
## ທຸລະກິດ ແລະ ການດຳເນີນທຸລະກິດ ກ່ຽວກັບປ່າໄມ້
### ໝວດທີ 1
### ທຸລະກິດກ່ຽວກັບປ່າໄມ້

**ມາດຕາ 92 (ປັບປຸງ) ປະເພດທຸລະກິດກ່ຽວກັບປ່າໄມ້**

ປະເພດທຸລະກິດກ່ຽວກັບປ່າໄມ້ ມີ ດັ່ງນີ້:

1. ການກ້າເບ້ຍໄມ້ ແລະ ເຄື່ອງປ່າຂອງດົງ;
2. ການປູກໄມ້ ແລະ ເຄື່ອງປ່າຂອງດົງ;
3. ການປຸງແຕ່ງໄມ້;
4. ການຜະລິດຖ່ານ;
5. ການປຸງແຕ່ງເຄື່ອງປ່າຂອງດົງ;
6. ການສົ່ງອອກໄມ້, ຜະລິດຕະພັນໄມ້, ພັນໄມ້ ແລະ ເຄື່ອງປ່າຂອງດົງ;
7. ການນຳເຂົ້າ, ສົ່ງຜ່ານໄມ້, ຜະລິດຕະພັນໄມ້, ພັນໄມ້ ແລະ ເຄື່ອງປ່າຂອງດົງ;
8. ການຈຳໜ່າຍເຄື່ອງປ່າຂອງດົງ;
9. ການຈຳໜ່າຍຜະລິດຕະພັນໄມ້;
10. ການທ່ອງທ່ຽວທຳມະຊາດ;

11. ການຄ້າ ຂາຍ ການບອນປ່າໄມ້;

12. ທຸລະກິດອື່ນກ່ຽວກັບປ່າໄມ້.

**ມາດຕາ 93 (ປັບປຸງ) ການກ້າເບ້ຍໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ຮັບການສົ່ງເສີມໃນການກ້າເບ້ຍໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ ແລະ ການພັດທະນາປ່າໄມ້.

**ມາດຕາ 94 (ປັບປຸງ) ການປູກໄມ້ ແລະ ເຄື່ອງປ່າຂອງດົງ**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ຮັບການສົ່ງເສີມປູກໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອເປັນສິນຄ້າ ແລະ ຕອບສະໜອງວັດຖຸດິບ ໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງ ດ້ວຍການວາງນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຂອງກົດໝາຍສະບັບນີ້.

ການປູກໄມ້ ແລະ ເຄື່ອງປ່າຂອງດົງ ຕ້ອງດຳເນີນໃນສະຖານທີ່ ທີ່ກຳນົດໃຫ້ ແລະ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 57 ຂອງກົດໝາຍສະບັບນີ້.

ສຳລັບ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງປູກໄມ້ເປັນສິນຄ້າ ໃສ່ເນື້ອທີ່ດິນ ທີ່ຕົນໄດ້ຮັບສິດນຳໃຊ້ຢ່າງຖືກຕ້ອງຕາມກົດໝາຍ ສາມາດດຳເນີນໄດ້ ໂດຍບໍ່ຕ້ອງຂໍອະນຸຍາດ.

**ມາດຕາ 95 (ໃໝ່) ການປຸງແຕ່ງໄມ້**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ຮັບການສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ເຂົ້າໃນການປຸງແຕ່ງໄມ້ ເພື່ອສ້າງມູນຄ່າເພີ່ມ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແນໃສ່ຮັບປະກັນໃຫ້ຜະລິດຕະພັນສຳເລັດຮູບ ຮັບໃຊ້ພາຍໃນ ແລະ ສົ່ງອອກ ໄດ້ມາດຕະຖານ.

ການສ້າງຕັ້ງ, ການຂະຫຍາຍ ຫຼື ການຍົກຍ້າຍໂຮງງານປຸງແຕ່ງໄມ້, ເຕົາເຜົາຖ່ານ ແລະ ໂຮງງານທີ່ນຳໃຊ້ໄມ້ເປັນພະລັງງານ ຕ້ອງບົນພື້ນຖານການຮັບປະກັນດ້ານແຫຼ່ງວັດຖຸດິບ ແຕ່ບໍ່ໃຫ້ອີງໃສ່ວັດຖຸດິບຈາກປ່າທຳມະຊາດ ໂດຍການເຫັນດີເປັນເອກະພາບຈາກກະຊວງການກະສິກຳ ແລະ ປ່າໄມ້ກ່ອນ ຈຶ່ງຂໍອະນຸຍາດຈົດທະບຽນຈາກກະຊວງການອຸດສາຫະກຳ ແລະ ການຄ້າ.

ສຳລັບ ການຄຸ້ມຄອງເຕົາເຜົາຖ່ານ, ການເຄື່ອນຍ້າຍຖ່ານພາຍໃນ ແລະ ສົ່ງອອກຕ່າງປະເທດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 96 (ໃໝ່) ການຜະລິດຖ່ານ**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄດ້ຮັບການສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ເຂົ້າໃນການດຳເນີນທຸລະກິດ ຜະລິດຖ່ານຂາວ, ຜະລິດຕະພັນຖ່ານຂາວ ແລະ ຖ່ານອັດແທ່ງຈາກຂີ້ເລື່ອຍ ເພື່ອເປັນສິນຄ້າສົ່ງອອກ. ສຳລັບຖ່ານດຳ ທີ່ນຳໃຊ້ວັດຖຸດິບຈາກປ່າທຳມະຊາດນັ້ນ ບໍ່ອະນຸຍາດໃຫ້ດຳເນີນທຸລະກິດເພື່ອສົ່ງອອກ ແຕ່ສາມາດຜະລິດນຳໃຊ້ພາຍໃນປະເທດ ບົນພື້ນຖານມີການຈັດສັນ, ຄຸ້ມຄອງວັດຖຸດິບຖືກຕ້ອງຕາມລະບຽບການ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຜະລິດ ແລະ ສົ່ງອອກຖ່ານຂາວ ຕ້ອງມີປ່າປູກ, ຊຸກຍູ້ສົ່ງເສີມປະຊາຊົນປູກ ແລະ ຟື້ນຟູປ່າໄມ້ ເພື່ອຮັບປະກັນໃຫ້ມີວັດຖຸດິບຕອບສະໜອງໃຫ້ໂຮງງານ ໃຫ້ມີຄວາມຍືນຍົງ ໂດຍບໍ່ອີງໃສ່ວັດຖຸດິບຈາກປ່າທຳມະຊາດ.

ສຳລັບ ການຄຸ້ມຄອງ ການຂຸດຄົ້ນ ແລະ ເຄື່ອນຍ້າຍໄມ້ຟືນ ເພື່ອຜະລິດຖ່ານຂາວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 97 (ປັບປຸງ) ການປຸງແຕ່ງເຄື່ອງປ່າຂອງດົງ

ການປຸງແຕ່ງເຄື່ອງປ່າຂອງດົງ ໄດ້ຮັບການສົ່ງເສີມຈາກລັດ ເພື່ອສ້າງມູນຄ່າເພີ່ມແນໃສ່ຮັບໃຊ້ພາຍໃນ ແລະ ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບເພື່ອສົ່ງອອກ.

ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ຮັບປະກັນໃຫ້ໄດ້ປະລິມານ ແລະ ຄຸນນະພາບ ທີ່ເໝາະສົມ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ.

ການສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງໄດ້ຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້, ສຳລັບການສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງຊະນິດທີ່ເປັນຢານັ້ນ ຍັງຕ້ອງໄດ້ຂໍອະນຸຍາດນຳຂະແໜງການສາທາລະນະສຸກ ແລະ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

## ມາດຕາ 98 (ປັບປຸງ) ການສົ່ງອອກ ໄມ້, ຜະລິດຕະພັນໄມ້, ພັນໄມ້ ແລະ ເຄື່ອງປ່າຂອງດົງ

ລັດ ສົ່ງເສີມ ການສົ່ງອອກ ຜະລິດຕະພັນໄມ້ສຳເລັດຮູບ ໂດຍແມ່ນຂະແໜງການອຸດສາຫະກຳ ແລະ ການຄ້າ ສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການການເງິນ ກຳນົດບັນຊີຜະລິດຕະພັນໄມ້ ເພື່ອສົ່ງອອກ.

ການສົ່ງອອກ ເຄື່ອງປ່າຂອງດົງ ອະນຸຍາດໃຫ້ສະເພາະແຕ່ຊະນິດທີ່ບໍ່ສາມາດປຸງແຕ່ງຢູ່ພາຍໃນ ແລະ ຊະນິດທີ່ບໍ່ຫວງຫ້າມ ໂດຍໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ກຳນົດບັນຊີຊະນິດເຄື່ອງປ່າຂອງດົງທີ່ອະນຸຍາດສົ່ງອອກ.

ການສົ່ງອອກ ໄມ້, ຜະລິດຕະພັນໄມ້, ພັນໄມ້ ແລະ ເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ລັດ ບໍ່ອະນຸຍາດໃຫ້ສົ່ງອອກ ໄມ້ທ່ອນ, ໄມ້ຕິຕັບ, ໄມ້ເລື່ອຍ, ຮາກໄມ້ ຫຼື ເຫງົ້າໄມ້, ຕໍໄມ້, ປຸດໄມ້, ງ່າໄມ້ ແລະ ໄມ້ຢືນຕົ້ນ ຫຼື ໄມ້ປະດັບ ທີ່ຂຸດຄົ້ນຈາກປ່າທຳມະຊາດ ລວມທັງຖ່ານດຳ ທີ່ນຳໃຊ້ວັດຖຸດິບຈາກປ່າທຳມະຊາດ.

## ມາດຕາ 99 (ປັບປຸງ) ການນຳເຂົ້າ ແລະ ສົ່ງຜ່ານ ໄມ້, ຜະລິດຕະພັນໄມ້, ພັນໄມ້ ແລະ ເຄື່ອງປ່າຂອງດົງ

ລັດ ອະນຸຍາດນຳເຂົ້າໄມ້, ພັນໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອຕອບສະໜອງຄວາມຕ້ອງການໃນການຜະລິດຢູ່ພາຍໃນ ດ້ວຍນະໂຍບາຍຍົກເວັ້ນ ຫຼື ຫຼຸດຜ່ອນ ພາສີ, ອາກອນ ຕາມກົດໝາຍ ແຕ່ຕ້ອງໄດ້ຮັບອະນຸຍາດ ຢ່າງຖືກຕ້ອງ ແລະ ມີໃບຢັ້ງຢືນແຫຼ່ງທີ່ມາຈາກປະເທດຕົ້ນທາງ.

ການນຳເຂົ້າພັນໄມ້ ແລະ ເຄື່ອງປ່າຂອງດົງນັ້ນ ຕ້ອງຜ່ານການກວດກາ ຂອງເຈົ້າໜ້າທີ່ກັກກັນພືດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ.

ການນຳເຂົ້າ ແລະ ສົ່ງຜ່ານ ໄມ້, ພັນໄມ້, ພັນພືດ, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 100 (ປັບປຸງ) ການຈຳໜ່າຍເຄື່ອງປ່າຂອງດົງ**

ການຈຳໜ່າຍເຄື່ອງປ່າຂອງດົງ ລວມທັງ ພືດເປັນຢາ ທີ່ບໍ່ຢູ່ໃນບັນຊີ I ຢູ່ພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ຂໍອະນຸຍາດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ຕ້ອງປະຕິບັດຕາມກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 101 (ໃໝ່) ການຈຳໜ່າຍຜະລິດຕະພັນໄມ້**

ການຈຳໜ່າຍຜະລິດຕະພັນໄມ້ທຸກຊະນິດ ຢູ່ພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ຂໍອະນຸຍາດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ໄດ້ຮັບການຢັ້ງຢືນແຫຼ່ງທີ່ມາຂອງໄມ້ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຕ້ອງປະຕິບັດຕາມກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 102 (ປັບປຸງ) ການທ່ອງທ່ຽວທຳມະຊາດ**

ລັດ ສົ່ງເສີມ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຳເນີນທຸລະກິດການທ່ອງທ່ຽວທຳມະຊາດ ໃນເຂດທິວທັດສວຍງາມ, ຊີວະນາໆພັນ ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຕາມທີ່ໄດ້ຈັດສັນໃຫ້ ແລະ ບໍ່ສົ່ງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ. ຜູ້ໄດ້ຮັບອະນຸຍາດ ຕ້ອງໄດ້ປະຕິບັດພັນທະຈ່າຍຄ່າບໍລິການດ້ານລະບົບນິເວດປ່າໄມ້ ຕາມກົດໝາຍ.

**ມາດຕາ 103 (ໃໝ່) ການຄ້າ ຂາຍ ກາກບອນປ່າໄມ້**

ການຄ້າ ຂາຍ ກາກບອນປ່າໄມ້ ແມ່ນ ການຈ່າຍຄ່າຕອບແທນຂອງ ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ແກ່ຜູ້ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ບໍ່ໃຫ້ຖືກທຳລາຍ ເພື່ອດູດຊັບເອົາທາດອາຍກາກໂບນິກ ໂດຍໄດ້ຮັບການຢັ້ງຢືນຈາກອົງການສາກົນທີ່ກ່ຽວຂ້ອງ.

ລັດ ກຳນົດນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ເພື່ອສົ່ງເສີມ ແລະ ຄຸ້ມຄອງວຽກງານຄ້າ ຂາຍ ກາກບອນປ່າໄມ້ ໃຫ້ສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຳເນີນທຸລະກິດຄ້າ ຂາຍ ກາກບອນປ່າໄມ້ ພາຍໃຕ້ກົນໄກຕະຫຼາດຄ້າ ຂາຍ ກາກບອນສາກົນ ບົນພື້ນຖານການເຫັນດີຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ໄດ້ຮັບທະບຽນວິສາຫະກິດຈາກຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 104 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ການດຳເນີນ, ໂຈະ ແລະ ຍົກເລີກ ທຸລະກິດກ່ຽວກັບປ່າໄມ້

**ມາດຕາ 104 (ໃໝ່) ການດຳເນີນທຸລະກິດກ່ຽວກັບປ່າໄມ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບປ່າໄມ້ ໃຫ້ຍື່ນຄຳຮ້ອງຂໍອະນຸຍາດນຳຫ້ອງການບໍລິການການລົງທຶນປະຕູດຽວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຫຼື ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ຕ້ອງໄດ້ຂໍອະນຸຍາດທາງດ້ານວິຊາການນຳຂະແໜງການກະສິກຳ ແລະ ປ່າໄມ້ ໂດຍສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາໃຫ້ຄຳເຫັນຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 105 (ໃໝ່) ເງື່ອນໄຂໃນການດຳເນີນທຸລະກິດກ່ຽວກັບປ່າໄມ້**

ການດຳເນີນທຸລະກິດກ່ຽວກັບປ່າໄມ້ ຕ້ອງມີເງື່ອນໄຂພື້ນຖານ ດັ່ງນີ້:

1. ທຶນ, ສຳນັກງານ ຫຼື ສິ່ງປຸກສ້າງ, ວັດຖຸປະກອນ ແລະ ພາຫະນະຮັບໃຊ້ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ;
2. ນັກວິຊາການທີ່ມີປະສົບການ ແລະ ວິຊາສະເພາະ ທີ່ກ່ຽວຂ້ອງກັບທຸລະກິດຂອງຕົນ;
3. ບົດວິພາກເສດຖະກິດ-ເຕັກນິກ;
4. ເງື່ອນໄຂອື່ນທີ່ຈຳເປັນ.

**ມາດຕາ 106 (ໃໝ່) ການໂຈະດຳເນີນທຸລະກິດກ່ຽວກັບປ່າໄມ້**

ການດຳເນີນທຸລະກິດກ່ຽວກັບປ່າໄມ້ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງ ຜູ້ດຳເນີນທຸລະກິດ;
2. ຕາມການສັ່ງໂຈະ ຂອງອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ເພື່ອກວດກາດ້ວຍເຫດຜົນ ດັ່ງນີ້:
   - ດຳເນີນທຸລະກິດ ບໍ່ໄປຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
   - ດຳເນີນທຸລະກິດ ບໍ່ຖືກຕ້ອງ ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ;
   - ສ້າງຜົນເສຍຫາຍ ຕໍ່ ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
   - ບໍ່ດຳເນີນທຸລະກິດຕໍ່ເນື່ອງ ເປັນເວລາ ສອງປີ.

ການໂຈະການດຳເນີນທຸລະກິດ ຕ້ອງມີກຳນົດເວລາອັນແນ່ນອນ ເພື່ອຊອກຫາວິທີແກ້ໄຂ ຫຼື ປັບປຸງ ໃຫ້ຄືນສູ່ສະພາບປົກກະຕິ. ຖ້າຜູ້ດຳເນີນທຸລະກິດ ຫາກບໍ່ແກ້ໄຂ ຫຼື ປັບປຸງ ໃຫ້ຖືກຕ້ອງຕາມການແຈ້ງເຕືອນ ສອງຄັ້ງ, ຄັ້ງລະ ສາມສິບວັນ, ຂະແໜງການກະສິກຳ ແລະ ປ່າໄມ້ ຈະສັ່ງໂຈະທາງດ້ານວິຊາການ ຈົນກວ່າຜູ້ດຳເນີນທຸລະກິດແກ້ໄຂ ຫຼື ປັບປຸງ ຕາມການແຈ້ງເຕືອນ ແລະ ແຈ້ງໃຫ້ອົງການທີ່ອະນຸຍາດ ແລະ ອອກໃບທະບຽນວິສາຫະກິດ ຮັບຊາບ.

**ມາດຕາ 107 (ໃໝ່) ການຍົກເລີກການດຳເນີນທຸລະກິດກ່ຽວກັບປ່າໄມ້**

ການດຳເນີນທຸລະກິດກ່ຽວກັບປ່າໄມ້ ຈະຖືກຍົກເລີກ ໃນກໍລະນີ ດັ່ງນີ້:

1. ຜູ້ດຳເນີນທຸລະກິດ ສະເໜີ ຂໍຍົກເລີກ ໂດຍມີເຫດຜົນພຽງພໍ;
2. ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ສັ່ງໃຫ້ຍົກເລີກ ດ້ວຍເຫດຜົນ ດັ່ງນີ້:
   - ຜູ້ປະກອບການລະເມີດ ກົດໝາຍ, ລະບຽບການ ກ່ຽວກັບປ່າໄມ້ ແລະ ສ້າງຜົນເສຍຫາຍຢ່າງຫຼວງຫຼາຍ ຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
   - ຜູ້ປະກອບການ ຖືກສັ່ງໂຈະ ເຖິງສອງຄັ້ງຕິດຕໍ່ກັນ ໂດຍບໍ່ມີການແກ້ໄຂ ຫຼື ປັບປຸງ;
   - ສານຕັດສິນ ຖອນໃບອະນຸຍາດ ຫຼື ໃຫ້ລົ້ມລະລາຍ;
   - ບໍ່ດຳເນີນທຸລະກິດພາຍຫຼັງໄດ້ຮັບອະນຸຍາດ ເປັນເວລາ ສອງປີ.

**ມາດຕາ 108 (ໃໝ່) ການສະເໜີ ຕໍ່ການໂຈະ ຫຼື ການຍົກເລີກ ການດຳເນີນທຸລະກິດກ່ຽວກັບປ່າໄມ້**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືກໂຈະ ຫຼື ຍົກເລີກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 106 ແລະ 107 ຂອງກົດໝາຍສະບັບນີ້ ສາມາດສະເໜີ ຕໍ່ອົງການຂັ້ນເທິງຂອງອົງການທີ່ ໂຈະ ຫຼື ຍົກເລີກ ເພື່ອພິຈາລະນາຄືນ ພາຍໃນເວລາ ຊາວວັນ ກ່ຽວກັບການ ໂຈະ ຫຼື ຍົກເລີກດັ່ງກ່າວ ຖ້າຫາກພິສູດໄດ້ວ່າຕົນປະຕິບັດຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງແລ້ວ.

## ພາກທີ VII
## ຂອບເຂດການປົກປັກຮັກສາ ແລະ ການພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້
### ໝວດທີ 1
### ຂອບເຂດການປົກປັກຮັກສາ ແລະ ການພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້ ຂັ້ນສູນກາງ

**ມາດຕາ 109 (ປັບປຸງ) ປ່າໄມ້ ແລະ ທີ່ດິນປ່າໄມ້ ຂັ້ນສູນກາງປົກປັກຮັກສາ ແລະ ພັດທະນາ**

ກະຊວງກະສິກຳ ແລະ ປ່າໄມ້ ສົມທົບ ກັບກະຊວງອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງແຜນການ ແລະ ການລົງທຶນ, ກະຊວງປ້ອງກັນປະເທດ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້ ແບບຍືນຍົງ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ຍຸດທະສາດປ່າໄມ້ ແລະ ຍຸດທະສາດຄຸ້ມຄອງສິ່ງແວດລ້ອມ.

ມາດຕາ 110 (ປັບປຸງ) ການຮັບຮອງຂອບເຂດ ປ່າໄມ້ ແລະ ທີ່ດິນປ່າໄມ້ ຂັ້ນສູນກາງປົກປັກຮັກສາ ແລະ ພັດທະນາ

ປ່າປ້ອງກັນແຫ່ງຊາດ, ປ່າສະຫງວນແຫ່ງຊາດ ແລະ ປ່າຜະລິດ ແມ່ນ ລັດຖະບານ ເປັນຜູ້ຮັບຮອງ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍເປັນເອກະພາບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນ.

## ໝວດທີ 2

## ຂອບເຂດການປົກປັກຮັກສາ ແລະ ການພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້ ຂັ້ນທ້ອງຖິ່ນ

ມາດຕາ 111 (ປັບປຸງ) ການມອບປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ອົງການປົກຄອງທ້ອງຖິ່ນ

ພາຍຫຼັງທີ່ໄດ້ຈັດສັນ, ແບ່ງປະເພດ ແລະ ກຳນົດຂອບເຂດປ່າໄມ້ ແລະ ທີ່ດິນປ່າໄມ້ແລ້ວ ລັດຖະບານ ມອບໃຫ້ອົງການປົກຄອງ ຂັ້ນແຂວງ, ຂັ້ນເມືອງ ແລະ ບ້ານ ເປັນຜູ້ຄຸ້ມຄອງ, ກວດກາ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຕາມກົດໝາຍຢ່າງເຂັ້ມງວດ.

ໃນກໍລະນີ ທີ່ເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ຫາກກວມເອົາຫຼາຍແຂວງ ໃຫ້ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ປະສານສົມທົບກັນໃນການ ຄຸ້ມຄອງ, ກວດກາ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຕາມຂອບເຂດການປົກຄອງຂອງຕົນ ແລະ ປະຕິບັດຕາມແຜນຈັດສັນທີ່ໄດ້ກຳນົດໄວ້.

ມາດຕາ 112 ປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນແຂວງ ປົກປັກຮັກສາ ແລະ ພັດທະນາ

ອົງການປົກຄອງຂັ້ນແຂວງ ມອບເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ບັນດາຂະແໜງການສາຍຕັ້ງເປັນຜູ້ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຕາມຂອບເຂດການປົກຄອງຂອງຕົນ.

ມາດຕາ 113 ປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນເມືອງ ປົກປັກຮັກສາ ແລະ ພັດທະນາ

ອົງການປົກຄອງຂັ້ນແຂວງ ມອບເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ອົງການປົກຄອງຂັ້ນເມືອງ ແລະ ບັນດາຂະແໜງການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 111 ຂອງກົດໝາຍສະບັບນີ້ ເປັນຜູ້ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຕາມຂອບເຂດການປົກຄອງຂອງຕົນ.

ໃນກໍລະນີທີ່ເຂດປ່າໄມ້ ແລະ ທີ່ດິນປ່າໄມ້ ຫາກກວມເອົາຫຼາຍ ເມືອງ, ເທດສະບານ, ນະຄອນ ໃຫ້ອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ ປະສານສົມທົບກັນໃນການ ຄຸ້ມຄອງ, ກວດກາ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຕາມຂອບເຂດການປົກຄອງຂອງຕົນ ແລະ ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນແຜນແມ່ບົດຈັດສັນທີ່ດິນ.

ມາດຕາ 114 (ປັບປຸງ) ປ່າໄມ້ ແລະ ທີ່ດິນປ່າໄມ້ ຂັ້ນບ້ານປົກປັກຮັກສາ ແລະ ພັດທະນາ

ອົງການປົກຄອງຂັ້ນເມືອງ ມອບເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ອົງການປົກຄອງບ້ານ ຄຸ້ມຄອງ, ກວດກາ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຕາມແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍສະບັບນີ້.

ສຳລັບປ່າໄມ້ໃນຂອບເຂດຂັ້ນບ້ານຮັບຜິດຊອບນັ້ນ ອາດຈັດແບ່ງອອກເປັນ ສາມ ປະເພດ ປ່າໄມ້ ຄື ປ່າປ້ອງກັນ ລວມມີ ປ່າຍອດນ້ຳ, ປ່າແຄມນ້ຳ, ປ່າແຄມທາງ; ປ່າສະຫງວນ ລວມມີ ປ່າສັກສິດ, ປ່າຊ້າ ແລະ ປ່າຊົມໃຊ້ຂອງບ້ານ. ນອກຈາກນັ້ນ ຍັງມີເຂດທີ່ດິນເປົ່າວ່າງ ທີ່ໄດ້ກຳນົດເປັນເຂດຜະລິດ.

**ມາດຕາ 115 (ປັບປຸງ) ການຮັບຮອງ ຂອບເຂດປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນທ້ອງຖິ່ນ ປົກປັກຮັກສາ ແລະ ພັດທະນາ**

ການຮັບຮອງ ຂອບເຂດປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນທ້ອງຖິ່ນ ປົກປັກຮັກສາ ແລະ ພັດທະນາ ໃຫ້ປະຕິບັດ ດັ່ງນີ້:

1. ປ່າປ້ອງກັນ ແລະ ປ່າສະຫງວນ ລະດັບແຂວງ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຮອງ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ໂດຍເປັນເອກະພາບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ;

2. ປ່າປ້ອງກັນ ແລະ ປ່າສະຫງວນ ລະດັບເມືອງ ແມ່ນ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ຮັບຮອງ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ ໂດຍເປັນເອກະພາບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ;

3. ປ່າປ້ອງກັນ ແລະ ປ່າສະຫງວນ ລະດັບບ້ານ ແມ່ນ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ຮັບຮອງ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ, ນະຄອນ ໂດຍເປັນເອກະພາບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ.

## ໝວດທີ 3
## ຜູ້ປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້

**ມາດຕາ 116 (ປັບປຸງ) ການມອບ ປ່າໄມ້ ແລະ ທີ່ດິນປ່າໄມ້**

ພາຍຫຼັງ ທີ່ໄດ້ຈັດສັນ, ແບ່ງປະເພດ ແລະ ກຳນົດຂອບເຂດປ່າໄມ້ ແລະ ທີ່ດິນປ່າໄມ້ແລ້ວ ລັດມອບໃຫ້ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເປັນຜູ້ຄຸ້ມຄອງ.

**ມາດຕາ 117 (ປັບປຸງ) ຜູ້ປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້**

ຜູ້ປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້ ແມ່ນ ບຸກຄົນ, ຄອບຄົວ ແລະ ນິຕິບຸກຄົນ ຊຶ່ງລັດໄດ້ມອບໝາຍໃຫ້ຕາມກົດໝາຍ.

ຜູ້ປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້ ມີ ດັ່ງນີ້:

1. ຂະແໜງການກະສິກຳ ແລະ ປ່າໄມ້ ທີ່ລັດໄດ້ມອບ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ປົກປັກຮັກສາ ແລະ ພັດທະນາ;

2. ທຸກພາກສ່ວນເສດຖະກິດ ທີ່ລັດໃຫ້ ເຊົ່າ ຫຼື ສຳປະທານ ທີ່ດິນປ່າໄມ້ ຫຼື ຮັບຮູ້ສິດນຳໃຊ້, ກຳມະສິດກ່ຽວກັບປ່າປູກ ລວມທັງການໂອນສິດນຳໃຊ້ປ່າປູກ ແລະ ທີ່ດິນປ່າປູກ;

3. ຄອບຄົວ ທີ່ລັດໃຫ້ເຊົ່າທີ່ດິນປ່າໄມ້ ຫຼື ຮັບຮູ້ ສິດນຳໃຊ້, ກຳມະສິດ ກ່ຽວກັບປ່າປູກ ລວມທັງການໂອນສິດນຳໃຊ້ປ່າປູກ ແລະ ທີ່ດິນປ່າປູກ;

4. ກົມກອງກຳລັງປະກອບອາວຸດ ທີ່ລັດໄດ້ມອບທີ່ດິນປ່າໄມ້ໃຫ້ປົກປັກຮັກສາ ແລະ ພັດທະນາ;

5. ສະຖາບັນການສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດ, ສູນຝຶກອົບຮົມ ແລະ ພັດທະນາສີມືແຮງງານ ກ່ຽວກັບປ່າໄມ້ ທີ່ລັດໄດ້ມອບປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ປົກປັກຮັກສາ ແລະ ພັດທະນາ;

6. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ລັດໄດ້ມອບໃຫ້ປົກປັກຮັກສາ ແລະ ພັດທະນາ.

**ມາດຕາ 118 (ປັບປຸງ) ການຈັດສັນອາຊີບຄົງທີ່**

ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ຊຸກຍູ້ ແລະ ສົ່ງເສີມ ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ ໃຫ້ປະຊາຊົນທີ່ອາໄສຢູ່ໃນເຂດປ່າໄມ້ ເພື່ອສ້າງເສດຖະກິດຄອບຄົວ ດ້ວຍການຜະລິດເປັນສິນຄ້າ ແລະ ສ້າງເສດຖະກິດຮ່ວມມືຮູບແບບຕ່າງໆທີ່ເໝາະສົມ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ແລະ ແຜນຈັດສັນທີ່ດິນ ເປັນຕົ້ນ ການປູກພືດກະສິກຳ, ລ້ຽງສັດ, ປູກຕົ້ນໄມ້, ເຄື່ອງປ່າຂອງດົງ ແລະ ຫັດຖະກຳ ຕິດພັນກັບການຢຸດເຊົາບັນຫາການເຄື່ອນຍ້າຍແບບຊະຊາຍຂອງພົນລະເມືອງ ເຂົ້າໄປຕັ້ງຖິ່ນຖານຢູ່ໃນເຂດປ່າໄມ້ ເພື່ອປົກປັກຮັກສາປ່າໄມ້ ແລະ ຢຸດເຊົາການຖາງປ່າເຮັດໄຮ່ແບບເລື່ອນລອຍ.

ການຈັດສັນອາຊີບຄົງທີ່ ໃຫ້ດຳເນີນ ແລະ ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

## ພາກທີ VIII
## ສິດ ແລະ ພັນທະ ຂອງຜູ້ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້

**ມາດຕາ 119 (ປັບປຸງ) ການໄດ້ສິດນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້**

ສິດນຳໃຊ້ປ່າໄມ້ ລວມມີ ປ່າໄມ້ທຳມະຊາດ, ທີ່ດິນປ່າໄມ້, ປ່າປູກ ແລະ ທີ່ດິນປ່າປູກ ທີ່ໄດ້ມາຈາກ:

1. ການມອບສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຂອງລັດ;
2. ການໂອນສິດນຳໃຊ້ປ່າປູກ ແລະ ທີ່ດິນປ່າປູກ;
3. ການສືບທອດສິດນຳໃຊ້ປ່າປູກ ແລະ ທີ່ດິນປ່າປູກ.

**ມາດຕາ 120 (ປັບປຸງ) ການມອບສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຂອງລັດ**

ການມອບສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຂອງລັດ ແມ່ນ ການຕົກລົງຂອງອົງການປົກຄອງຂັ້ນເມືອງ ໃນການມອບປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ອົງການປົກຄອງບ້ານ ນຳໃຊ້ຢ່າງຍາວນານ ແລະ ມີ

ຄວາມສະຫງົບປົກກະຕິ ຕາມແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ, ສັນຍາຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 121 (ປັບປຸງ) ການໂອນສິດນຳໃຊ້ປ່າປູກ ແລະ ທີ່ດິນປ່າປູກ**

ສິດນຳໃຊ້ປ່າປູກ ແລະ ທີ່ດິນປ່າປູກ ອະນຸຍາດ ໃຫ້ໂອນໄດ້ ດ້ວຍການຂາຍ, ການມອບ ຫຼື ການແລກປ່ຽນ ແຕ່ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ.

ສຳລັບ ສິດນຳໃຊ້ປ່າໄມ້ທຳມະຊາດ ແລະ ທີ່ດິນປ່າໄມ້ ບໍ່ອະນຸຍາດໃຫ້ໂອນໄດ້.

**ມາດຕາ 122 (ປັບປຸງ) ການສືບທອດສິດນຳໃຊ້ປ່າປູກ ແລະ ທີ່ດິນປ່າປູກ**

ສິດນຳໃຊ້ປ່າປູກ ແລະ ທີ່ດິນປ່າປູກ ອະນຸຍາດ ໃຫ້ຕົກທອດໄປຍັງ ລູກ, ຜົວ ຫຼື ເມຍ, ພໍ່, ແມ່, ຫຼານ ຫຼື ຍາດພີ່ນ້ອງ ຕາມກົດໝາຍວ່າດ້ວຍການສືບທອດມໍຣະດົກ ພາຍຫຼັງຜູ້ນຳໃຊ້ສິດດັ່ງກ່າວ ໄດ້ເສຍຊີວິດແລ້ວ.

ສຳລັບ ປ່າໄມ້ທຳມະຊາດ ບໍ່ອະນຸຍາດໃຫ້ສືບທອດໄດ້.

**ມາດຕາ 123 (ປັບປຸງ) ສິດຂອງຜູ້ນຳໃຊ້ປ່າປູກ ແລະ ທີ່ດິນປ່າປູກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ປ່າປູກ ແລະ ທີ່ດິນປ່າປູກ ມີສິດ ດັ່ງນີ້:

1. ຄຸ້ມຄອງ ແລະ ປົກປັກຮັກສາ;
2. ນຳໃຊ້;
3. ໄດ້ຮັບໝາກຜົນ;
4. ໂອນສິດນຳໃຊ້;
5. ສືບທອດສິດນຳໃຊ້.

ສຳລັບ ສິດໂອນ, ສິດສືບທອດ ໄດ້ກຳນົດໄວ້ໃນມາດຕາ 121 ແລະ 122 ຂອງກົດໝາຍສະບັບນີ້, ສຳລັບສິດນຳໃຊ້ຕາມປະເພນີ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 64 ຂອງກົດໝາຍສະບັບນີ້.

**ມາດຕາ 124 (ປັບປຸງ) ສິດຄຸ້ມຄອງ ແລະ ປົກປັກຮັກສາ ປ່າໄມ້ ແລະ ທີ່ດິນປ່າໄມ້**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດຄຸ້ມຄອງ, ປົກປັກຮັກສາ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ລັດຈັດສັນໃຫ້ ເພື່ອດຳເນີນກິດຈະການ ຕາມກົດໝາຍ.

ການຈັດຕັ້ງຂອງລັດ ມີສິດຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າໄມ້ທຳມະຊາດ ຕາມກົດໝາຍແຕ່ບໍ່ມີສິດໂອນ, ສືບທອດ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 88, 89, 90 ແລະ 91 ຂອງກົດໝາຍສະບັບນີ້.

**ມາດຕາ 125 (ປັບປຸງ) ສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຄ່າບໍລິການດ້ານລະບົບນິເວດປ່າໄມ້ ແລະ ຄຸນຄ່າອື່ນຂອງປ່າໄມ້ ໃນເຂດທີ່ລັດຈັດສັນໃຫ້ ເພື່ອດຳເນີນກິດຈະການ ຕາມກົດໝາຍ.

**ມາດຕາ 126 (ປັບປຸງ) ສິດໄດ້ຮັບໝາກຜົນຈາກປ່າໄມ້ ແລະ ທີ່ດິນປ່າໄມ້**

ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດໄດ້ຮັບໝາກຜົນຈາກປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຕົນໄດ້ພັດທະນາໃນເຂດຊຶ່ງລັດຈັດສັນໃຫ້ດຳເນີນກິດຈະການ ເຊັ່ນ ການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຕົນປູກ ແລະ ຟື້ນຟູ, ລາຍຮັບຈາກການທ່ອງທ່ຽວທຳມະຊາດ, ການຄ້າ ຂາຍ ກາກບອນປ່າໄມ້ ແລະ ສາມາດນຳເອົາທະບຽນ ປ່າປູກ ຫຼື ເຄື່ອງປ່າຂອງດົງທີ່ປູກ ໄປເປັນຫຼັກຊັບຄ້ຳປະກັນ ຫຼື ເປັນຮຸ້ນ ໄດ້.

**ມາດຕາ 127 (ປັບປຸງ) ພັນທະຂອງຜູ້ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້**

ຜູ້ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ມີພັນທະ ດັ່ງນີ້:

1. ປະຕິບັດນະໂຍບາຍ ແລະ ກົດໝາຍ ກ່ຽວກັບວຽກງານປ່າໄມ້;
2. ປູກ, ຟື້ນຟູ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ອຸດົມສົມບູນຕະຫຼອດໄປ;
3. ປົກປັກຮັກສາປ່າໄມ້, ທີ່ດິນປ່າໄມ້, ປ່າຍອດນ້ຳ, ສິ່ງແວດລ້ອມ, ສັດນ້ຳ ແລະ ສັດປ່າ;
4. ບູລະນະທີ່ດິນ, ປູກໄມ້ ແລະ ຟື້ນຟູຄືນປ່າໄມ້ ໃນກໍລະນີ ທີ່ໄດ້ຂຸດຄົ້ນແຮ່ທາດ ແລະ ກິດຈະກຳຕ່າງໆແລ້ວ;
5. ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ຖືກຕ້ອງຕາມເປົ້າໝາຍ ທີ່ໄດ້ກຳນົດໃຫ້ ແລະ ຖືກຕ້ອງ ຕາມສັນຍາ ແລະ ກົດໝາຍ;
6. ເສຍຄ່າຊັບພະຍາກອນ, ຄ່າທຳນຽມປ່າໄມ້, ຄ່າເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້, ຈ່າຍຄ່າການບໍລິການດ້ານລະບົບນິເວດປ່າໄມ້, ພັນທະອື່ນກ່ຽວກັບປ່າໄມ້, ທີ່ດິນປ່າໄມ້ ຕາມກົດໝາຍ;
7. ປະກອບສ່ວນ ແລະ ຂົນຂວາຍທຶນຮອນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນກອງທຶນປົກປັກຮັກສາປ່າໄມ້;
8. ໃຫ້ຂໍ້ມູນການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້, ປະສານສົມທົບ ແລະ ໃຫ້ຄວາມຮ່ວມມືກັບອົງການທີ່ກ່ຽວຂ້ອງ;
9. ນຳໃຊ້ທຸກວິທີການ ເພື່ອສະກັດກັ້ນການທຳລາຍປ່າໄມ້, ປ້ອງກັນໄຟໄໝ້ລາມປ່າ, ລັກລອບຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 128 ການເສຍສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ຜູ້ໄດ້ຮັບສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຈະເສຍສິດໃນກໍລະນີໃດໜຶ່ງ ດັ່ງນີ້:

1. ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ລັດມອບໃຫ້ນັ້ນ ບໍ່ຖືກຕາມເປົ້າໝາຍ;
2. ບໍ່ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ລັດມອບໃຫ້ພາຍໃນເວລາ ສາມປີ ແລະ ຕາມສັນຍາ;
3. ຖືກສານຕັດສິນ ໃຫ້ເສຍສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້.

**ມາດຕາ 129 (ປັບປຸງ) ການສິ້ນສຸດສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້**

ສິດນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຂອງ ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ຈະສິ້ນສຸດລົງໃນກໍລະນີໃດໜຶ່ງ ດັ່ງນີ້:

1. ການສະລະສິດນຳໃຊ້ດ້ວຍຄວາມສະໝັກໃຈ;
2. ການໂອນສິດນຳໃຊ້ໃຫ້ຜູ້ອື່ນ;
3. ການເສຍຊີວິດໂດຍບໍ່ມີຜູ້ສືບທອດ ຫຼື ການຍຸບເລີກ ຂອງການຈັດຕັ້ງ;
4. ການໂອນສິດນຳໃຊ້ທີ່ດິນປ່າໄມ້ຄືນ ເພື່ອນຳໃຊ້ເຂົ້າໃນສາທາລະນະປະໂຫຍດ ແຕ່ລັດຈະທົດແທນຄວາມເສຍຫາຍຕາມກົດໝາຍ.

## ພາກທີ IX
## ກອງທຶນປົກປັກຮັກສາປ່າໄມ້

**ມາດຕາ 130 (ໃໝ່) ກອງທຶນປົກປັກຮັກສາປ່າໄມ້**

ກອງທຶນປົກປັກຮັກສາປ່າໄມ້ ຂຽນຫຍໍ້ວ່າ “ກປປ” ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນເພື່ອສະສົມທຶນ ແລະ ລະດົມທຶນ ຈາກບັນດາກິດຈະການປ່າໄມ້ ແລະ ກິດຈະການທີ່ກ່ຽວຂ້ອງກັບການນຳໃຊ້ຊັບພະຍາກອນປ່າໄມ້ ລວມທັງການປະກອບສ່ວນຈາກພາຍໃນ ແລະ ຕ່າງປະເທດ.

**ມາດຕາ 131 (ປັບປຸງ) ແຫຼ່ງກອງທຶນ**

ແຫຼ່ງລາຍຮັບກອງທຶນ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ຄ່າບູລະນະປ່າໄມ້ ຫຼື ຄ່າພັນທະປູກໄມ້ ແລະ ເຄື່ອງປ່າຂອງດົງ ທົດແທນ;
3. ສ່ວນແບ່ງລາຍຮັບ ຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຂຸດຄົ້ນຈາກທຸກແຫຼ່ງເຊັ່ນ ຂຸດຄົ້ນຈາກປ່າຜະລິດ ແລະ ເຂດຫັນປ່ຽນທີ່ດິນປ່າໄມ້;
4. ສ່ວນແບ່ງ ຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຮິບເປັນຂອງລັດ;
5. ສ່ວນແບ່ງລາຍຮັບ ຈາກການຫັນປ່ຽນທີ່ດິນປ່າໄມ້ ໄປຮັບໃຊ້ເປົ້າໝາຍອື່ນ;
6. ສ່ວນແບ່ງ ຈາກການຈ່າຍຄ່າບໍລິການສິ່ງແວດລ້ອມດ້ານປ່າໄມ້ ຊຶ່ງລວມມີການແບ່ງປັນລາຍຮັບຈາກການດຳເນີນກິດຈະການທ່ອງທ່ຽວທຳມະຊາດ, ການຄ້າ ຂາຍ ກາກບອນປ່າໄມ້ ແລະ ອື່ນໆ;

7. ສ່ວນແບ່ງ ຈາກຄ່າປັບໃໝ ແລະ ຄ່າທົດແທນຄວາມເສຍຫາຍຕໍ່ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້;

8. ການຊ່ວຍເຫຼືອ ຂອງອົງການຈັດຕັ້ງ ແລະ ສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ;

9. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ.

ສຳລັບການເກັບ ຈາກສ່ວນແບ່ງຕ່າງໆຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ຫາ ຂໍ້ 7 ຂອງມາດຕານີ້ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 132 (ປັບປຸງ) ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ການຄຸ້ມຄອງກອງທຶນປົກປັກຮັກສາປ່າໄມ້ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບ ຕາມລະບົບງົບປະມານແຫ່ງລັດ;
2. ຖືກຕ້ອງຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;
3. ທຸກລາຍຮັບ ແລະ ລາຍຈ່າຍ ຕ້ອງຜ່ານລະບົບບັນຊີ ຂອງຄັງເງິນແຫ່ງຊາດ, ລົງບັນຊີຕາມຫຼັກການ ແລະ ລະບຽບການພື້ນຖານ ການບັນຊີແຫ່ງລັດ;
4. ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ ແລະ ໂປ່ງໃສ, ຮັບປະກັນລາຍຈ່າຍ ຕາມແຜນການປະຈຳ ແຕ່ລະປີ;
5. ມີການກວດກາ ແລະ ກວດສອບເປັນປົກກະຕິ ຕາມກົດໝາຍ.

ກອງທຶນປົກປັກຮັກສາປ່າໄມ້ ນຳໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້;
2. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ຂໍ້ມູນ ຂ່າວສານ ປ່າໄມ້ ແລະ ທີ່ດິນປ່າໄມ້;
3. ຝຶກອົບຮົມ ວິຊາການກ່ຽວກັບວຽກງານປ່າໄມ້;
4. ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຢີ ແລະ ນະວັດຕະກຳ, ປົກປັກຮັກສາ ແລະ ພັດທະນາປ່າໄມ້;
5. ປະຕິບັດ ແຜນງານ, ໂຄງການ, ຕິດຕາມກວດກາ ແລະ ແກ້ໄຂ ບັນຫາວຽກງານປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ;
6. ປົກປັກຮັກສາ ແລະ ພັດທະນາປ່າປ້ອງກັນ, ປ່າສະຫງວນ, ອຸທະຍານແຫ່ງຊາດ, ປ່າຜະລິດ ແລະ ຄຸ້ມຄອງປ່າໄມ້ຂັ້ນບ້ານ;
7. ປູກໄມ້ ແລະ ຟື້ນຟູປ່າ ເພື່ອເປົ້າໝາຍທາງດ້ານເສດຖະກິດ ແລະ ປົກປັກຮັກສາສິ່ງແວດລ້ອມ.

## ພາກທີ X
## ຂໍ້ຫ້າມ

**ມາດຕາ 133 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ ປ່າໄມ້**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ປ່າໄມ້ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ໜ້າທີ່ ຕຳແໜ່ງ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;

2. ໃຊ້ສິດໜ້າທີ່ ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;

3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ຕໍ່ວຽກງານປ່າໄມ້ ທີ່ການຈັດຕັ້ງມອບໝາຍໃຫ້;

4. ເປີດເຜີຍຄວາມລັບຂອງ ລັດ ແລະ ຂອງລັດຖະການ ກ່ຽວກັບປ່າໄມ້;

5. ປອມແປງເອກະສານ ເຊັ່ນ ປອມແປງລາຍເຊັນ, ຕາປະທັບ ແລະ ບັນຊີໄມ້, ການວັດແທກໄມ້, ການຈັດຊັ້ນຄຸນນະພາບໄມ້, ຂໍ້ມູນການສຳຫຼວດ, ການກວດກາປ່າໄມ້ ແລະ ການຕີຕາໄມ້;

6. ດຳເນີນ ຫຼື ເຂົ້າຮ່ວມການດຳເນີນທຸລະກິດກ່ຽວກັບການ ຂຸດຄົ້ນ, ຊື້ຂາຍໄມ້ ແລະ ຜະລິດຕະ ຜົນປ່າໄມ້;

7. ມອບຄ້ອນຕາ ປມ ໃຫ້ນັກທຸລະກິດ ແລະ ປະຊາຊົນ ລວມທັງພະນັກງານທີ່ບໍ່ມີໜ້າທີ່ຮັບຜິດ ຊອບ;

8. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;

9. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນຳໃຊ້ມາດຕະການອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

10. ມີໄວ້ໃນຄອບຄອງ ເຄື່ອງຈັກຂຸດຄົ້ນໄມ້ ແລະ ພາຫະນະລາກແກ່ໄມ້;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 134 (ປັບປຸງ) ຂໍ້ຫ້າມສຳລັບນັກທຸລະກິດ**

ຫ້າມນັກທຸລະກິດ ພາຍໃນ ແລະ ຕ່າງປະເທດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ດຳເນີນການສຳຫຼວດປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ຂຸດຄົ້ນໄມ້ ແລະ ເຄື່ອງປ່າ ຂອງດົງ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ;

2. ສ້າງຕັ້ງ ໂຮງຊອຍ, ໂຮງເລື່ອຍ, ໂຮງເຟີນີເຈີ ແລະ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ;

3. ທຳລາຍ ຫຼື ບຸກລຸກ ປ່າໄມ້ ແລະ ທີ່ດິນປ່າໄມ້;

4. ຈັບຈອງ ຕົ້ນໄມ້, ປ່າໄມ້ ຫຼື ເຄື່ອງປ່າຂອງດົງ ແລະ ທີ່ດິນປ່າໄມ້, ຕັດໄມ້ທົດແທນ ແຜນການຂຸດຄົ້ນໄມ້ຂອງສົກປີຜ່ານມາ ແລະ ຕັດໄມ້ກ່ອນໄດ້ຮັບອະນຸຍາດ;

5. ຂຸດຄົ້ນ, ເຄື່ອນຍ້າຍເບ້ຍໄມ້ ຫຼື ຕົ້ນໄມ້ທຸກຊະນິດ ຈາກປ່າທຳມະຊາດ ໃນເຂດທີ່ບໍ່ໄດ້ ຮັບອະນຸຍາດ;

6. ບຸກເບີກປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດທີ່ບໍ່ອະນຸຍາດ;

7. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;

8. ນຳເຂົ້າ ເຄື່ອງຈັກປຸງແຕ່ງໄມ້ ແລະ ພາຫານະລາກແກ່ໄມ້ ທີ່ບໍ່ໄດ້ມາດຕະຖານ;

9. ນຳເຂົ້າແຮງງານ, ພາຫະນະລາກແກ່ໄມ້, ເຄື່ອງຈັກ ແລະ ອຸປະກອນຂຸດຄົ້ນໄມ້ ໂດຍບໍ່ໄດ້ຮັບອະນຸຍາດ;

10. ຕັດ, ຊື້ ຂາຍ ແລະ ເຄື່ອນຍ້າຍໄມ້ທຳມະຊາດ ປະເພດຫວງຫ້າມ ແລະ ໄມ້ທີ່ໃກ້ສູນພັນ ຕາມທີ່ໄດ້ກຳນົດໄວ້ໃນບັນຊີໄມ້ ທີ່ໄດ້ປັບປຸງແຕ່ລະໄລຍະ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ ເຊັ່ນ ໄມ້ດູ່ລາຍ, ໄມ້ຂະຍຸງ, ໄມ້ໝູນ, ໄມ້ປະດົງ, ໄມ້ຄຳພີ້, ໄມ້ໂລ່ງເລ່ງ, ໄມ້ຈຳປາປ່າ;

11. ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ຕາມທີ່ໄດ້ກຳນົດໄວ້ໃນບັນຊີຫ້າມສົ່ງອອກ ທີ່ລັດຖະບານໄດ້ກຳນົດໃນແຕ່ລະໄລຍະ ລວມທັງຖ່ານດຳທຸກຊະນິດ ທີ່ປຸງແຕ່ງຈາກໄມ້ທຳມະຊາດ;

12. ຊື້ ຂາຍ ໄມ້ທີ່ລັດອະນຸຍາດໃຫ້ນຳໃຊ້ ເພື່ອສາທາລະນະປະໂຫຍດຂອງບ້ານ ແລະ ຄອບຄົວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 61 ແລະ 62 ຂອງກົດໝາຍສະບັບນີ້;

13. ເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ເກີນນ້ຳໜັກ, ເກີນຈຳນວນ, ເກີນຂະໜາດອະນຸຍາດ ແລະ ໃນໄລຍະເວລາທີ່ເກືອດຫ້າມ ຫຼື ບໍ່ຖືກກັບເອກະສານ;

14. ໃຫ້ສິນບົນແກ່ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ແລະ ຊື້ຈ້າງປະຊາຊົນ;

15. ປອມແປງ ເອກະສານ, ຕາປະທັບ ແລະ ຄ້ອນຕາ ປມ;

16. ໃຊ້ຄວາມຮຸນແຮງ ແລະ ນາບຂູ່ພະນັກງານ, ເຈົ້າໜ້າທີ່ ຫຼື ປະຊາຊົນ;

17. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 135 (ປັບປຸງ) ຂໍ້ຫ້າມສຳລັບປະຊາຊົນ**

ຫ້າມປະຊາຊົນ ມີພຶດຕິກຳ ດັ່ງນີ້:

1. ທຳລາຍປ່າໄມ້ ດ້ວຍການ ບຸກລຸກ, ບຸກເບີກ, ຖາກຖາງປ່າໄມ້, ຈູດປ່າ, ຕັດໄມ້, ມີໄວ້ໃນຄອບຄອງ, ການໄມ້ ຫຼື ນຳໃຊ້ສານເຄມີ ໃຫ້ຕົ້ນໄມ້ຕາຍ ຫຼື ດ້ວຍການກະທຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

2. ເຂົ້າໄປຕັ້ງຖິ່ນຖານຢູ່ເຂດ ປ່າປ້ອງກັນ, ປ່າສະຫງວນ ຫຼື ປ່າຜະລິດ ຫຼື ທຳການຜະລິດ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຕັດ, ຊື້, ຂາຍ, ເຄື່ອນຍ້າຍ ຫຼື ເກັບກູ້ໄມ້ທຳມະຊາດ ໂດຍບໍ່ໄດ້ຮັບອະນຸຍາດ ເຊັ່ນ ໄມ້ດູ່ລາຍ, ໄມ້ຂະຍຸງ, ໄມ້ໝູນ, ໄມ້ປະດົງ, ໄມ້ຄຳພີ້, ໄມ້ໂລ່ງເລ່ງ, ໄມ້ຈຳປາປ່າ;

4. ຕັດ, ຊື້, ຂາຍ, ເຄື່ອນຍ້າຍ ຫຼື ເກັບກູ້ໄມ້ ຫຼື ເຄື່ອງປ່າຂອງດົງ ທີ່ເປັນຢາ ຕາມບັນຊີທີ່ກະຊວງສາທາລະນະສຸກ ກຳນົດ;

5. ຈັບຈອງ ຕົ້ນໄມ້, ປ່າໄມ້, ເຄື່ອງປ່າຂອງດົງ ຫຼື ທີ່ດິນປ່າໄມ້;

6. ຂຸດຄົ້ນ, ເຄື່ອນຍ້າຍ ເບ້ຍໄມ້ ຫຼື ຕົ້ນໄມ້ ທຸກຊະນິດ ຈາກປ່າທຳມະຊາດ ລວມທັງ ໄມ້ຄ້ຳແບບ ຫຼື ໄມ້ ທີ່ເປັນພະລັງງານ ໃນເຂດທີ່ບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ປ່າໄມ້;

7. ຮ່ວມມືກັບ ນັກທຸລະກິດ, ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ໃນການລັກລອບ ຕັດໄມ້, ບຸກລຸກທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້;

8. ຊື້, ຂາຍ ໄມ້ທີ່ລັດອະນຸຍາດໃຫ້ນຳໃຊ້ ເພື່ອຄອບຄົວຕາມທີ່ໄດ້ກຳນົດໄວ້ໃນມາດຕາ 62 ຂອງກົດໝາຍສະບັບນີ້;

9. ປອມແປງ ເອກະສານ, ຕາປະທັບ ຫຼື ຄ້ອນຕາ ປມ;

10. ໃຊ້ຄວາມຮຸນແຮງ ຫຼື ແອບອ້າງຊື່ຜູ້ມີຖານະ ຕຳແໜ່ງ ເພື່ອນາບຂູ່ ພະນັກງານ, ເຈົ້າໜ້າທີ່ ຫຼື ຜູ້ອື່ນ;

11. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນ ປ່າປ້ອງກັນ, ປ່າສະຫງວນ ຫຼື ປ່າຜະລິດ;

12. ຂຸດຄົ້ນ, ເກັບກູ້, ຊື້, ຂາຍເຄື່ອງປ່າຂອງດົງ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

13. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 136 (ປັບປຸງ) ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ໃຊ້ສິດໜ້າທີ່ ເກີນຂອບເຂດ, ໃຊ້ຄວາມຮຸນແຮງ ຫຼື ແອບອ້າງຊື່ຜູ້ມີຖານະ ຕຳແໜ່ງ ເພື່ອ ນາບຂູ່ພະນັກງານ, ເຈົ້າໜ້າທີ່ ຫຼື ຜູ້ອື່ນ;

2. ສວຍໃຊ້ໜ້າທີ່ ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ຜູ້ອື່ນ;

3. ປອມແປງເອກະສານ ກ່ຽວກັບ ວຽກງານປ່າໄມ້, ຕາປະທັບ ຫຼື ຄ້ອນຕາ ປມ;

4. ດຳເນີນທຸລະກິດ ຂຸດຄົ້ນ, ຊື້, ຂາຍ, ເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ດ້ວຍຕົນເອງ ຫຼື ມີຮຸ້ນສ່ວນ ໂດຍບໍ່ໄດ້ຮັບອະນຸຍາດ;

5. ອະນຸຍາດ ໃຫ້ຫັນປ່ຽນປະເພດ ປ່າໄມ້ ຫຼື ທີ່ດິນປ່າໄມ້, ໃຫ້ເຊົ່າ ຫຼື ສຳປະທານທີ່ດິນ ປ່າໄມ້ ໂດຍບໍ່ຖືກຕ້ອງຕາມກົດໝາຍ ລວມທັງ ການເອົາໄມ້ແລກປ່ຽນກັບໂຄງການ;

6. ອອກອະນຸຍາດໃຫ້ຕັດໄມ້ ຫຼື ເກັບກູ້ເຄື່ອງປ່າຂອງດົງ;

7. ປົກປັງ, ຊຸກເຊື່ອງ, ກົດໜ່ວງ ຖ່ວງດຶງ ຫຼື ຂັດຂວາງການຈັດຕັ້ງປະຕິບັດວຽກງານ ຂອງເຈົ້າໜ້າທີ່;

8. ນຳໄມ້ ຫຼື ເຄື່ອງປ່າຂອງດົງ ທີ່ບໍ່ຖືກຕ້ອງຕາມກົດໝາຍຈາກຕ່າງປະເທດມາຜ່ານ ເພື່ອສົ່ງ ໄປປະເທດທີສາມ;

9. ສົ່ງອອກ ໄມ້ທ່ອນ, ໄມ້ຕິຕັບ, ໄມ້ແປຮູບ, ໄມ້ຊອຍ, ຮາກໄມ້ ຫຼື ເຫງົ້າໄມ້, ຕໍໄມ້, ປຸ່ມໄມ້, ງ່າໄມ້ ຫຼື ໄມ້ຢືນຕົ້ນ ຫຼື ໄມ້ປະດັບ ທີ່ຂຸດຄົ້ນອອກຈາກປ່າທຳມະຊາດ;

10. ສົ່ງອອກ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ;

11. ສະເໜີ ຫຼື ອະນຸຍາດ ເກັບກູ້, ທ້ອນໂຮມໄມ້ກິ່ງງ່າ, ໄມ້ທ່ອນ ຫຼື ອະນຸຍາດໃຫ້ເອົາໄມ້ແກ້ໄຂນະໂຍບາຍ ແກ່ບຸກຄົນໃດໜຶ່ງ;

12. ອະນຸຍາດ ຫຼື ອໍານວຍຄວາມສະດວກ ໃນການສົ່ງອອກ ໄມ້ ຫຼື ເຄື່ອງປ່າຂອງດົງ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

13. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ XI
## ການດໍາເນີນຄະດີປ່າໄມ້ ແລະ ທີ່ດິນປ່າໄມ້

### ມາດຕາ 137 (ໃໝ່) ການດໍາເນີນຄະດີ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້

ການດໍາເນີນຄະດີກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ ແມ່ນ ການເຄື່ອນໄຫວຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ຜູ້ເຂົ້າຮ່ວມອື່ນ ເພື່ອຊອກໃຫ້ເຫັນການກະທໍາຜິດຢ່າງ ຮີບດ່ວນ, ຄົບຖ້ວນ ແລະ ຮອບຄອບ, ນໍາເອົາຜູ້ກະທໍາຜິດ ມາດໍາເນີນຄະດີ ແລະຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທໍາ.

### ມາດຕາ 138 (ໃໝ່) ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ

ສາເຫດທີ່ພາໃຫ້ເປີດ ການສືບສວນ-ສອບສວນຄະດີປ່າໄມ້ ແລະ ທີ່ດິນປ່າໄມ້ ມີ ດັ່ງນີ້:

1. ມີຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການກະທໍາຜິດ;

2. ມີການເຂົ້າມອບຕົວ ຂອງຜູ້ກະທໍາຜິດ;

3. ພົບເຫັນຮ່ອງຮອຍ ຂອງການກະທໍາຜິດ ໂດຍອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຫຼື ອົງການໄອຍະການປະຊາຊົນ.

### ມາດຕາ 139 (ໃໝ່) ການດໍາເນີນການສືບສວນ-ສອບສວນ

ໃນການດໍາເນີນການສືບສວນ-ສອບສວນ ຄະດີປ່າໄມ້ ແລະ ທີ່ດິນປ່າໄມ້ ຕ້ອງນໍາໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ.

### ມາດຕາ 140 (ໃໝ່) ກໍານົດເວລາການດໍາເນີນການສືບສວນ-ສອບສວນ

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຕ້ອງດໍາເນີນການສືບສວນ-ສອບສວນ, ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສໍານວນຄະດີ ພ້ອມດ້ວຍຂອງກາງ ສົ່ງໃຫ້ອົງການໄອຍະການປະ

ຊາຊົນ ພາຍໃນເວລາ ສອງເດືອນ ສໍາລັບການກະທໍາຜິດ ໃນສະຖານໂທສານຸໂທດ ແລະ ສາມເດືອນ ໃນສະຖານຄະຣຸໂທດ ນັບແຕ່ວັນອອກຄໍາສັ່ງເປີດການສືບສວນ-ສອບສວນ ເປັນຕົ້ນໄປ.

ຖ້າເຫັນວ່າມີຄວາມຈໍາເປັນ ຕ້ອງສືບຕໍ່ດໍາເນີນການສືບສວນ-ສອບສວນ ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ສະເໜີຂໍຕໍ່ເວລາການສືບສວນ-ສອບສວນ ນໍາອົງການໄອຍະການປະຊາຊົນ. ອົງການໄອຍະການປະຊາຊົນ ອາດຕໍ່ເວລາການສືບສວນ-ສອບສວນ ໄດ້ອີກເທື່ອລະ ສອງເດືອນ ແຕ່ລວມທັງໝົດ ບໍ່ໃຫ້ເກີນ ຫົກເດືອນ ສໍາລັບການກະທໍາຜິດ ໃນສະຖານໂທສານຸໂທດ ແລະ ເທື່ອລະ ສາມເດືອນ ແຕ່ລວມທັງໝົດ ບໍ່ໃຫ້ເກີນ ໜຶ່ງປີ ສໍາລັບການກະທໍາຜິດ ໃນສະຖານຄະຣຸໂທດ. ການສະເໜີຂໍຕໍ່ເວລາແຕ່ລະເທື່ອ ໃຫ້ດໍາເນີນ ສິບຫ້າວັນ ກ່ອນໝົດກໍານົດເວລາສືບສວນ-ສອບສວນ.

ໃນກໍລະນີ ທີ່ມີການສົ່ງສໍານວນຄະດີຄືນ ໃຫ້ອົງການອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ດໍາເນີນການສືບສວນ-ສອບສວນເພີ່ມເຕີມນັ້ນ ກໍານົດເວລາການສືບສວນ-ສອບສວນເພີ່ມເຕີມບໍ່ໃຫ້ເກີນ ສອງເດືອນ ນັບແຕ່ວັນອົງການອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ໄດ້ຮັບສໍານວນຄະດີເປັນຕົ້ນໄປ.

ໃນກໍລະນີ ທີ່ມີການສືບສວນ-ສອບສວນຄືນ ຄະດີທີ່ຖືກ ໂຈະ ຫຼື ຊຶດມ້ຽນໄວ້ນັ້ນ ການສືບສວນ-ສອບສວນ ໃຫ້ປະຕິບັດຕາມກໍານົດເວລາ ທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງ ແລະ ວັກທີສອງ ຂອງມາດຕານີ້ ນັບແຕ່ວັນອອກຄໍາສັ່ງໃຫ້ສືບສວນ-ສອບສວນຄະດີຄືນ ເປັນຕົ້ນໄປ.

**ມາດຕາ 141 (ໃໝ່) ການຍຶດ ຫຼື ອາຍັດຊັບ ວັດຖຸສິ່ງຂອງ**

ໄມ້, ຜະລິດຕະພັນໄມ້ ແລະ ເຄື່ອງປ່າຂອງດົງ ທີ່ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ພາສີ, ຕໍາຫຼວດ, ທະຫານ, ຕ້ານການສໍ້ລາດບັງຫຼວງ ແລະ ພາກສ່ວນອື່ນທີ່ ຍຶດ ຫຼື ອາຍັດນັ້ນ ຕ້ອງມອບໃຫ້ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ເພື່ອດໍາເນີນຄະດີຕາມກົດໝາຍ.

ໃນກໍລະນີ ທີ່ໄດ້ຮູ້ແຈ້ງກ່ຽວກັບ ປະເພດ, ຈໍານວນ ແລະ ສະຖານທີ່ເກັບມ້ຽນຊັບ, ວັດຖຸສິ່ງຂອງ ທີ່ພົວພັນກັບການກະທໍາຜິດ ແລະ ຈະນໍາໃຊ້ເປັນປະໂຫຍດໃນການດໍາເນີນຄະດີ ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ຕ້ອງອອກຄໍາສັ່ງຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງນັ້ນ.

ໃນກໍລະນີ ທີ່ຊັບ, ວັດຖຸສິ່ງຂອງທີ່ ຍຶດ ຫຼື ອາຍັດ ຈະເກີດຄວາມເສຍຫາຍ, ຫົວໜ້າອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ຕ້ອງແຕ່ງຕັ້ງຄະນະກໍາມະການເພື່ອແກ້ໄຂ.

ໃນກໍລະນີ ທີ່ມີຫຼັກຖານຢັ້ງຢືນວ່າ ຊັບ, ວັດຖຸສິ່ງຂອງທີ່ຍຶດ ຫຼື ອາຍັດ ຫາກເປັນກໍາມະສິດທີ່ຖືກຕ້ອງຕາມກົດໝາຍຂອງຜູ້ຖືກເສຍຫາຍ ກໍໃຫ້ສົ່ງຄືນແກ່ຜູ້ກ່ຽວ.

**ມາດຕາ 142 (ໃໝ່) ການປະກອບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ ສັ່ງຟ້ອງຂຶ້ນສານ**

ພາຍຫຼັງສິ້ນສຸດການສືບສວນ-ສອບສວນ ຖ້າຫາກມີຂໍ້ມູນຫຼັກຖານໜັກແໜ້ນວ່າ ເປັນການກະທຳຜິດຕໍ່ ປ່າໄມ້ ແລະ ທີ່ດິນປ່າໄມ້ແລ້ວ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຕ້ອງສະຫຼຸບຄະດີ ພ້ອມດ້ວຍຂອງກາງ ແລະ ຜູ້ຖືກຫາ ສົ່ງໃຫ້ອົງການໄອຍະການປະຊາຊົນ ພິຈາລະນາສັ່ງຟ້ອງຂຶ້ນສານ.

**ມາດຕາ 143 (ປັບປຸງ) ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້**

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງແມ່ນ ກົມກວດກາປ່າໄມ້ ເປັນເສນາທິການ;

2. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຊຶ່ງແມ່ນ ກອງກວດກາປ່າໄມ້ ປະຈຳ ແຂວງ, ນະຄອນຫຼວງ ເປັນເສນາທິການ;

3. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ຊຶ່ງແມ່ນ ໜ່ວຍງານກວດກາປ່າໄມ້ຂັ້ນເມືອງ ເປັນເສນາທິການ.

**ມາດຕາ 144 (ປັບປຸງ) ສິດ ແລະ ໜ້າທີ່ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້**

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້;

2. ກວດກາ ກິດຈະການ ແລະ ໂຄງການປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ລວມທັງການດຳເນີນທຸລະກິດປ່າໄມ້ ແລະ ເຄື່ອງປ່າຂອງດົງ;

3. ອອກ ຄຳສັ່ງ ເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສທີ່ຖືກກັກຕົວ, ຄຳສັ່ງ ໂຈະ ຫຼື ຊັດມ້ຽນຄະດີ;

4. ດຳເນີນການສືບສວນ-ສອບສວນ ກ່ຽວກັບການລະເມີດກົດໝາຍວ່າດ້ວຍປ່າໄມ້, ປະມວນກົດໝາຍອາຍາ ແລະ ນຳໃຊ້ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

5. ສະເໜີ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ອອກຄຳສັ່ງໃຫ້ຢຸດເຊົາການເຄື່ອນໄຫວກ່ຽວກັບກິດຈະການປ່າໄມ້ ຫຼື ໂຈະໜ້າທີ່ ຕຳແໜ່ງຂອງ ພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຖ້າເຫັນວ່າມີການກະທຳທີ່ລະເມີດກົດໝາຍ;

6. ພົວພັນ, ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

7. ສະຫຼຸບ ຜົນຂອງການປະຕິບັດວຽກງານກວດກາ ແຕ່ລະໄລຍະ ໃຫ້ຂັ້ນເທິງຖັດຕົນຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 145 (ປັບປຸງ) ເຈົ້າໜ້າທີ່ປ່າໄມ້**

ເຈົ້າໜ້າທີ່ປ່າໄມ້ ແມ່ນ ພະນັກງານ ສັງກັດຢູ່ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ໂດຍໄດ້ຮັບການແຕ່ງຕັ້ງ ຈາກລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງມີໜ້າທີ່ກວດກາ ແລະ ສືບສວນ-ສອບສວນຄະດີ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມກົດໝາຍສະບັບນີ້ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ສຳລັບການຈັດຕັ້ງ, ການເຄື່ອນໄຫວ ແລະ ມາດຕະຖານ ຂອງເຈົ້າໜ້າທີ່ປ່າໄມ້ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 146 (ປັບປຸງ) ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ປ່າໄມ້**

ເຈົ້າໜ້າທີ່ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວລາດຕະເວນ ແລະ ກວດກາຕາມເປົ້າໝາຍຕ່າງໆ ເຊັ່ນ ສະຖານທີ່ຂຸດຄົ້ນໄມ້, ເສັ້ນທາງຂົນສົ່ງໄມ້, ສະໜາມໄມ້, ໂຮງງານປຸງແຕ່ງໄມ້, ໂຮງງານທີ່ນຳໃຊ້ໄມ້, ສາງເກັບມ້ຽນໄມ້, ດ່ານກວດກາຊັບພະຍາກອນປ່າໄມ້ພາຍໃນ, ທ້ອງຖິ່ນ, ສາກົນ ແລະ ສະຖານທີ່ອື່ນ ທີ່ເຫັນວ່າຈຳເປັນ;

2. ຮັບ, ບັນທຶກ ການແຈ້ງຄວາມ, ການລາຍງານ ຫຼື ການຮ້ອງຟ້ອງ ກ່ຽວກັບການກະທຳຜິດທາງອາຍາ;

3. ສະເໜີອອກຄຳສັ່ງເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສ ທີ່ຖືກກັກຕົວ, ຄຳສັ່ງໂຈະ ຫຼື ຊຶດມ້ຽນຄະດີ;

4. ດຳເນີນຄະດີອາຍາຕໍ່ຜູ້ຖືກຫາ ເປັນຕົ້ນ ດຳເນີນການສືບສວນ-ສອບສວນ ແລະ ນຳໃຊ້ມາດຕະການສະກັດກັ້ນ;

5. ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ພິຈາລະນາສັ່ງຟ້ອງຂຶ້ນສານ;

6. ນຳໃຊ້ເຄື່ອງມືສື່ສານ, ພາຫະນະ, ອາວຸດ, ຄ້ອນຕາຍຶດ ແລະ ບັດເຄື່ອນໄຫວພິເສດຂອງເຈົ້າໜ້າທີ່ປ່າໄມ້ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານກວດກາປ່າໄມ້ ແລະ ທີ່ດິນປ່າໄມ້;

7. ພົວພັນ, ປະສານສົມທົບ ກັບການຈັດຕັ້ງອື່ນທີ່ກ່ຽວຂ້ອງ ລວມທັງອົງການປົກຄອງທ້ອງຖິ່ນ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 147 (ໃໝ່) ການຂໍອຸທອນ ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້**

ໃນກໍລະນີ ທີ່ຫົວໜ້າອົງການໄອຍະການປະຊາຊົນ ຫາກອອກຄຳສັ່ງບໍ່ສັ່ງຟ້ອງຄະດີຂຶ້ນສານພາຍໃນເວລາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ມີສິດຂໍອຸທອນຄຳສັ່ງບໍ່ສັ່ງຟ້ອງຄະດີຂອງຫົວໜ້າອົງການໄອຍະການປະຊາຊົນນັ້ນ ໄປຍັງອົງການໄອຍະການປະຊາຊົນຂັ້ນເທິງຖັດໄປ ເພື່ອພິຈາລະນາ.

# ພາກທີ XII

# ການຄຸ້ມຄອງ ແລະ ກວດກາວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້

## ໝວດທີ 1

## ການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້

**ມາດຕາ 148 (ປັບປຸງ) ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້**

ລັດຖະບານ ຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງສາທາລະນະສຸກ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ;
4. ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ.

**ມາດຕາ 149 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແນວທາງ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;
4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານ ປ່າໄມ້ ແລະ ທີ່ດິນປ່າໄມ້;
5. ຊີ້ນຳ ການຄຸ້ມຄອງ, ຕິດຕາມກວດກາ ການຈັດຕັ້ງປະຕິບັດ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;
6. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນຂອບເຂດທົ່ວປະເທດ;
7. ຄຸ້ມຄອງ, ກຳນົດບັນຊີ ໄມ້ ແລະ ເຄື່ອງປ່າຂອງດົງ ທຸກປະເພດທີ່ບໍ່ທັນໄດ້ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ;

8. ສ້າງ, ຄຸ້ມຄອງ ແລະ ນໍາໃຊ້ລະບົບຂໍ້ມູນ ຂ່າວສານ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າ ໄມ້;

9. ສ້າງ, ຄຸ້ມຄອງ ແລະ ນໍາໃຊ້ແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ;

10. ຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີ ດ້ານການຂະຫຍາຍພັນໄມ້ ແລະ ເຄື່ອງປ່າຂອງດົງ;

11. ສັງລວມ, ເຜີຍແຜ່ ຜົນການຄົ້ນຄວ້າທົດລອງ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ແລະ ສະໜອງຂໍ້ມູນ ຂ່າວສານ ດ້ານປ່າໄມ້;

12. ສະເໜີ ລັດຖະບານ ພິຈາລະນາ ໃນການ ນໍາໃຊ້, ເຊົ່າ, ສໍາປະທານ ແລະ ຫັນປ່ຽນປ່າໄມ້ ແລະ ທີ່ດິນປ່າໄມ້;

13. ຮັບ ແລະ ພິຈາລະນາ ແກ້ໄຂຄໍາສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

14. ຂຶ້ນແຜນ ສ້າງ, ບໍາລຸງ, ຍົກລະດັບ ບຸກຄະລາກອນ ສໍາລັບຂະແໜງການປ່າໄມ້;

15. ປະສານສົມທົບ ກັບອົງການອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

16. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

17. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ ລັດຖະບານ ຢ່າງເປັນປົກກະຕິ;

18. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 150 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

2. ສ້າງ ແລະ ປັບປຸງແຜນຍຸດທະສາດປ່າໄມ້ຂັ້ນແຂວງ;

3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແນວທາງ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

4. ຊີ້ນໍາ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້, ການປູກໄມ້ ແລະ ຟື້ນຟູປ່າໄມ້ ຂອງຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ;

5. ຄົ້ນຄວ້າ ແລະ ມີຄໍາເຫັນ ກ່ຽວກັບການລົງທຶນດ້ານທຸລະກິດປ່າໄມ້, ການຂໍອະນຸຍາດ ນໍາໃຊ້, ເຊົ່າ ຫຼື ສໍາປະທານທີ່ດິນປ່າໄມ້ ເພື່ອສະເໜີຕໍ່ກະຊວງກະສິກໍາ ແລະ ປ່າໄມ້ ພິຈາລະນາ;

6. ອອກໃບອະນຸຍາດ ຊຸດຄົ້ນໄມ້, ເຄື່ອງປ່າຂອງດົງ ຕາມແຈ້ງການຂອງກະຊວງກະສິກໍາ ແລະ ປ່າໄມ້ ບົນພື້ນຖານການຕົກລົງຂອງລັດຖະບານ;

7. ຄຸ້ມຄອງໄມ້ ແລະ ເຄື່ອງປ່າຂອງດົງ ທຸກປະເພດທີ່ບໍ່ທັນໄດ້ປຸງແຕ່ງ ເປັນຜະລິດຕະພັນສຳເລັດຮູບ;

8. ເກັບກຳ, ສັງລວມ, ຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້;

9. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ,

10. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

11. ຂຶ້ນແຜນ ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ສຳລັບຂະແໜງການປ່າໄມ້;

12. ປະສານສົມທົບ ກັບອົງການອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນຕົ້ນ ການສຳຫຼວດ, ການຈັດສັນ, ການອະນຸຍາດນຳໃຊ້, ເຊົ່າ ຫຼື ສຳປະທານ;

13. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານ ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມການມອບໝາຍຂອງຂັ້ນເທິງ;

14. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 151 ສິດ ແລະ ໜ້າທີ່ ຂອງ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແນວທາງ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

3. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ການປະຕິບັດວຽກງານ ຂອງຈຸງານກະສິກຳ ແລະ ປ່າໄມ້ບ້ານ ເປັນຕົ້ນ ການປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້, ການປູກໄມ້ ແລະ ຟື້ນຟູປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ;

4. ຈັດຕັ້ງປະຊາຊົນຢູ່ຂັ້ນບ້ານ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍສົມທົບກັບອົງການປົກຄອງບ້ານທີ່ກ່ຽວຂ້ອງ;

5. ຄົ້ນຄວ້າ ແລະ ມີຄຳເຫັນ ກ່ຽວກັບການຫັນປ່ຽນທີ່ດິນປ່າໄມ້ ຕາມກົດໝາຍ;

6. ເກັບກຳ, ສັງລວມ, ຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ ກ່ຽວກັບ ປ່າໄມ້ ແລະ ທີ່ດິນປ່າໄມ້;

7. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ;

8. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 152 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້;

2. ຄົ້ນຄວ້າ ແລະ ສະເໜີ ໃຫ້ອົງການປົກຄອງບ້ານ ອອກກົດລະບຽບການນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນບ້ານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້;

3. ເຜີຍແຜ່ລະບຽບການ ກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ ເປັນຕົ້ນ ຄວາມສຳຄັນ ແລະ ຄຸນປະໂຫຍດຂອງ ປ່າໄມ້, ທີ່ດິນປ່າໄມ້, ປ່າເຂດຍອດນ້ຳ ແລະ ສິ່ງແວດລ້ອມ ໃຫ້ປະຊາຊົນໃນບ້ານຂອງຕົນ;

4. ຈັດຕັ້ງປະຊາຊົນ ຄຸ້ມຄອງ, ປົກປັກຮັກສາ, ປູກໄມ້ ແລະ ຟື້ນຟູປ່າໄມ້, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ພາຍໃນບ້ານ ຕາມແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ແນໃສ່ສ້າງບ້ານໃຫ້ກາຍເປັນບ້ານພັດທະນາດ້ານປ່າໄມ້;

5. ເປັນເຈົ້າການຕິດຕາມ, ຕ້ານ ແລະ ສະກັດກັ້ນ ການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້ ເຊັ່ນ ການລັກລອບຕັດໄມ້, ຈູດປ່າ ແລະ ການກະທຳ ທີ່ເປັນການທຳລາຍປ່າໄມ້ ແລ້ວລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ຢ່າງທັນການ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 153 (ໃໝ່) ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ຂື້ນແຜນພັດທະນາອຸດສາຫະກຳປຸງແຕ່ງໄມ້, ອະນຸຍາດສ້າງຕັ້ງ, ຄຸ້ມຄອງ ແລະ ດັດສົມໂຮງງານປຸງແຕ່ງໄມ້, ເຕົາເຜົາຖ່ານ ແລະ ໂຮງງານທີ່ນຳໃຊ້ໄມ້ເປັນພະລັງງານ ບົນພື້ນຖານການເຫັນດີເປັນເອກະພາບກັບກະຊວງກະສິກຳ ແລະ ປ່າໄມ້, ຄຸ້ມຄອງການປະມູນຊື້ ຂາຍ ໄມ້, ກຳນົດລາຄາ ແລະ ພັນທະໄມ້ຂອງລັດ, ສະໜອງຂໍ້ມູນກ່ຽວກັບຕະຫຼາດໄມ້, ກຳນົດມາດຕະຖານຜະລິດຕະພັນໄມ້ສຳເລັດຮູບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 154 (ໃໝ່) ສິດ ແລະ ໜ້າທີ່ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ສ້າງແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ຄົ້ນຄວ້າ ແລະ ສະເໜີ ກ່ຽວກັບການ

ຫັນປ່ຽນທີ່ດິນປ່າໄມ້ ໄປເປັນທີ່ດິນປະເພດອື່ນ ລວມທັງ ການເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ໂດຍປະສານສົມທົບ ແລະ ເປັນເອກະພາບກັບກະຊວງກະສິກຳ ແລະ ປ່າໄມ້ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 155 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງພະລັງງານ ແລະ ບໍ່ແຮ່**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກະຊວງພະລັງງານ ແລະ ບໍ່ແຮ່ ມີສິດ ແລະ ໜ້າທີ່ປະສານສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກຳນົດເຂດ ແລະ ເວລາສຳປະທານທີ່ດິນປ່າໄມ້ ເພື່ອພັດທະນາ ແລະ ກໍ່ສ້າງເຂື່ອນໄຟຟ້າ, ແລວສາຍສົ່ງ, ເຂດຂຸດຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ທາດ ໃນເຂດທີ່ດິນປ່າໄມ້; ຕິດຕາມ ແລະ ຊຸກຍູ້ ຜູ້ໄດ້ຮັບອະນຸຍາດສຳປະທານ, ຟື້ນຟູ, ບູລະນະຄືນທີ່ດິນປ່າໄມ້ ຕາມສັນຍາ ແລະ ກົດໝາຍ ລວມທັງການປັບໜ້າດິນຄືນ, ອະນາໄມທາດເຄມີ, ຍົກຍ້າຍສິ່ງກີດຂວາງ ແລະ ປູກໄມ້ທົດແທນຄືນ ໃນເຂດຫັນປ່ຽນຊົ່ວຄາວ ໂດຍປະສານສົມທົບ ແລະ ເປັນເອກະພາບກັບກະຊວງກະສິກຳ ແລະ ປ່າໄມ້ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 156 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກະຊວງການເງິນ ມີສິດ ແລະ ໜ້າທີ່ ຄຸ້ມຄອງ, ກວດກາການຊື້ ຂາຍ ໄມ້ ແລະ ເຄື່ອງປ່າຂອງດົງ, ເກັບລາຍຮັບ ຈາກຊັບພະຍາກອນປ່າໄມ້ ແລະ ທຸລະກິດໄມ້ ຕາມພາລະບົດບາດຂອງຕົນ, ອອກໃບຢັ້ງຢືນຮັບເງິນຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອເປັນບ່ອນອີງໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ອອກອະນຸຍາດ ເຄື່ອນຍ້າຍໄມ້; ຈັດແບ່ງງົບປະມານເຂົ້າກອງທຶນປົກປັກຮັກສາປ່າໄມ້ ຈາກແຫຼ່ງລາຍຮັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 131 ຂອງກົດໝາຍສະບັບນີ້ ແລະ ອຳນວຍຄວາມສະດວກໃນການອະນຸມັດເງິນຈາກກອງທຶນປົກປັກຮັກສາປ່າໄມ້ ເພື່ອຮັບໃຊ້ວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ກວດກາປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍປະສານສົມທົບ ແລະ ເປັນເອກະພາບກັບກະຊວງກະສິກຳ ແລະ ປ່າໄມ້ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 157 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີສິດ ແລະ ໜ້າທີ່ປະສານສົມທົບ ກັບກະຊວງກະສິກຳ ແລະ ປ່າໄມ້ ສຶກສາຄົ້ນຄວ້າ ແລະ ກຳນົດເຂດທີ່ມີທ່າແຮງ ເພື່ອສົ່ງເສີມການທ່ອງທ່ຽວທຳມະຊາດ; ຄົ້ນຄວ້ານຳສະເໜີ ເຂດທີ່ມີເງື່ອນໄຂເປັນມໍລະດົກແຫ່ງຊາດ, ມໍລະດົກພາກພື້ນ ຫຼື ມໍລະດົກໂລກ; ຄົ້ນຄວ້ານະໂຍບາຍທີ່ເໝາະສົມ ໃນການແບ່ງປັນຜົນປະໂຫຍດລະຫວ່າງລັດ, ຜູ້ປະກອບການ ແລະ ປະຊາຊົນ ທີ່ມີສ່ວນຮ່ວມໃນການພັດທະນາການທ່ອງທ່ຽວທຳມະຊາດ ໂດຍປະສານສົມທົບ ແລະ ເປັນເອກະພາບກັບກະຊວງກະສິກຳ ແລະ ປ່າໄມ້ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 158 (ໃໝ່) ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ກະຊວງສາທາລະນະສຸກ ມີສິດ ແລະ ໜ້າທີ່ປະສານສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ເພື່ອສຶກສາຄົ້ນຄວ້ານະໂຍບາຍໃນການຄຸ້ມຄອງ ແລະ ນຳໃຊ້ແນວພັນໄມ້ ແລະ ພັນພືດ ທີ່ເປັນຢາ ພ້ອມທັງຂຶ້ນບັນຊີຈັດປະເພດໄມ້ ແລະ ເຄື່ອງປ່າຂອງດົງ ທີ່ເປັນຢາ, ການຄຸ້ມຄອງການຂຸດຄົ້ນ, ການເກັບຊື້, ຜະລິດ ປຸງແຕ່ງ, ສົ່ງອອກ ແລະ ນຳເຂົ້າ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 159 (ໃໝ່) ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ໃນການວາງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນຂອບເຂດແຂວງ, ນະຄອນຫຼວງ ໂດຍສອດຄ່ອງກັບແຜນຍຸດທະສາດປ່າໄມ້ ແລະ ແຜນແມ່ບົດຈັດສັນທີ່ດິນ; ຄົ້ນຄວ້ານຳສະເໜີພາກສ່ວນກ່ຽວຂ້ອງ ຫັນປ່ຽນປະເພດທີ່ດິນປ່າໄມ້, ການໃຫ້ເຊົ່າ ຫຼື ສຳປະທານ ລວມທັງກວດກາ ຕິດຕາມການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຕາມກົດໝາຍ ໂດຍປະສານສົມທົບກັບຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 160 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການ ແລະ ພາກສ່ວນອື່ນ**

ໃນການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ຂະແໜງການ ແລະ ພາກສ່ວນອື່ນ ມີສິດ ແລະ ໜ້າທີ່ປະກອບສ່ວນໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ແນວທາງນະໂຍບາຍ, ກົດໝາຍ ກ່ຽວກັບວຽກງານປ່າໄມ້, ພ້ອມທັງ ປະກອບສ່ວນ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ກວດກາປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້

**ມາດຕາ 161 (ປັບປຸງ) ອົງການກວດກາວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້**

ອົງການກວດກາວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 148 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 162 (ໃໝ່) ເນື້ອໃນການກວດກາ**

ການກວດກາວຽກງານວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ປ່າໄມ້;

3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;

4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້.

**ມາດຕາ 163 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ;
2. ການກວດກາ ໂດຍມີການແຈ້ງໃຫ້ຊາບລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາ ຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາ ໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຊາບລ່ວງໜ້າ.

ການກວດກາ ແບບກະທັນຫັນ ແມ່ນ ການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຊາບລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XIII
## ວັນປູກຕົ້ນໄມ້ແຫ່ງຊາດ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

**ມາດຕາ 164 ວັນປູກຕົ້ນໄມ້ແຫ່ງຊາດ**

ລັດ ກຳນົດເອົາ ວັນທີ 1 ມິຖຸນາ ເປັນວັນປູກຕົ້ນໄມ້ແຫ່ງຊາດ ເພື່ອສ້າງສະຕິຮັກ, ຫວງແຫນໃນການປົກປັກຮັກສາ, ພັດທະນາປ່າໄມ້, ທີ່ດິນປ່າໄມ້ ແລະ ສິ່ງແວດລ້ອມທຳມະຊາດ ໃຫ້ແກ່ປະຊາຊົນລາວບັນດາເຜົ່າ ໂດຍສະເພາະອະນຸຊົນ ແນໃສ່ເຮັດໃຫ້ ປ່າໄມ້ອຸດົມສົມບູນ ແລະ ບໍ່ໃຫ້ບົກແຫ້ງ.

**ມາດຕາ 165 (ປັບປຸງ) ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ**

ພະນັກງານປ່າໄມ້ ແລະ ເຈົ້າໜ້າທີ່ປ່າໄມ້ ມີເຄື່ອງແບບ ແລະ ເຄື່ອງໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ.

ອົງການຄຸ້ມຄອງ, ອົງການກວດກາວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ແລະ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ມີເຄື່ອງໝາຍ ແລະ ຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

## ພາກທີ XIV
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 166 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ເປັນແບບຢ່າງໃນການປົກປັກຮັກສາ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້, ປູກ, ຟື້ນຟູປ່າ

ໄມ້ ແລະ ປ້ອງກັນການທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ສຳລັບຜູ້ໃຫ້ຂໍ້ມູນ ກ່ຽວກັບການລະເມີດກົດໝາຍສະບັບນີ້ ຈະໄດ້ຮັບບຳເໜັດ ຕາມລະບຽບການ.

**ມາດຕາ 167 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

**ມາດຕາ 168 (ປັບປຸງ) ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ແຕ່ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບ ຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນ ແລະ ສົ່ງຊັບສິນ ຫຼື ຂອງກາງ ທີ່ໄດ້ມາ ໂດຍບໍ່ຖືກ ຕ້ອງນັ້ນ ຄືນຄົບຖ້ວນ ຈະຖືກກ່າວເຕືອນ ຫຼື ສຶກສາອົບຮົມ.

**ມາດຕາ 169 (ປັບປຸງ) ມາດຕະການທາງວິໄນ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ, ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ ທີ່ຕົນໄດ້ຮັບມອບໝາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງໂທດທາງວິໄນ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາ ໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງໃຫ້ຄົບຖ້ວນ.

**ມາດຕາ 170 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ຊຶ່ງໄດ້ຜ່ານການ ກ່າວເຕືອນ ຫຼື ສຶກສາອົບຮົມແລ້ວ ຈະຖືກປັບໃໝ ສາມເທົ່າ ຂອງມູນຄ່າຄວາມເສຍຫາຍຂອງໄມ້, ຜະລິດຕະພັນໄມ້ ລວມທັງຊັບພະຍາກອນປ່າໄມ້ ຕາມລາຄາຕະຫຼາດ.

ໃນກໍລະນີ ມີການລະເມີດ ສາມຄັ້ງ ຂຶ້ນໄປ ຈະຖືກປັບໃໝ ຫ້າເທົ່າ ຂອງມູນຄ່າຄວາມເສຍຫາຍຂອງໄມ້, ຜະລິດຕະພັນໄມ້ ລວມທັງຊັບພະຍາກອນປ່າໄມ້ ຕາມລາຄາຕະຫຼາດ.

**ມາດຕາ 171 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງ ລັດ, ຄອບຄົວ ແລະ ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

ມາດຕາ 172 (ປັບປຸງ) ມາດຕະການທາງອາຍາ

ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ເປັນຕົ້ນ ຕັດໄມ້, ຖາງປ່າ ໂດຍບໍ່ຖືກຕ້ອງຕາມລະບຽບການກ່ຽວກັບປ່າໄມ້, ຈູດປ່າ ຫຼື ທຳລາຍປ່າໄມ້ ດ້ວຍວິທີການອື່ນ, ຂຸດຄົ້ນເຄື່ອງປ່າຂອງດົງ ໂດຍບໍ່ຖືກຕ້ອງຕາມກົດໝາຍ, ມອບຄ້ອນຕາ ປມ ໃຫ້ຜູ້ອື່ນ ທີ່ບໍ່ມີສິດໜ້າທີ່ຮັບຜິດຊອບ, ຊື້ ຂາຍ ແລະ ເຄື່ອນຍ້າຍໄມ້ທຳມະຊາດ ໂດຍບໍ່ໄດ້ຮັບອະນຸຍາດ, ກົດໜ່ວງຖ່ວງດຶງການດຳເນີນຄະດີ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ອະນຸຍາດການຫັນປ່ຽນປ່າທຳມະຊາດ, ຂຸດຄົ້ນ ຫຼື ອອກອະນຸຍາດຕັດໄມ້, ບຸກລຸກ, ຈັບຈອງ, ຊື້ ຂາຍ ທີ່ດິນປ່າໄມ້ ແລະ ການກະທຳອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກດຳເນີນຄະດີ ແລະ ລົງໂທດຕາມກົດໝາຍ.

ມາດຕາ 173 ມາດຕະການໂທດເພີ່ມ

ນອກຈາກ ມາດຕະການຕົ້ນຕໍ ທີ່ໄດ້ກຳນົດໄວ້ໃນມາດຕາ 172 ຂອງກົດໝາຍສະບັບນີ້ແລ້ວ ຜູ້ກະທຳຜິດ ຍັງຈະຖືກປະຕິບັດໂທດເພີ່ມ ເຊັ່ນ ການຮິບ ຊັບ, ພາຫະນະອຸປະກອນ ທີ່ພົວພັນກັບການກະທຳຜິດເປັນຂອງລັດ ແລະ ອາດຖືກ ໂຈະ ຫຼື ຖອນໃບອະນຸຍາດ, ຖອນສິດນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ອີກດ້ວຍ.

## ພາກທີ XV
## ບົດບັນຍັດສຸດທ້າຍ

ມາດຕາ 174 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ມາດຕາ 175 (ປັບປຸງ) ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້